

# ຄຶດຮອດ

ອຸທິນ ບຸນຍາວົງ

1942 – 2000

# ຄຶດຮອດ

ອຸທິນ ບຸນຍາວົງ

1942 – 2000

# " ຄຶດຮອດ ອຸທິນ ບຸນຍາວົງ "

*ຈັດພິມເນື່ອງໃນໂອກາດ ຄົບຮອບ 1 ປີ*
*ໃນການຈາກໄປ ຂອງ ອຸທິນ ບຸນຍາວົງ*
*ເພື່ອແຈກຢາຍ*

ຄະນະຈັດທຳ : ດວງເດືອນ ບຸນຍາວົງ
ອຸດົມພອນ ບຸນຍາວົງ
ດວງແຂ ບຸນຍາວົງ

ທີ່ປຶກສາ : ດາຣາ ກັບລະຍາ
ສິສະຫລຽວ ສະແຫວງສຶກສາ

ໜ້າປົກ : [illegible] May 20, 1970

ຫລັງປົກ : ນ້ຳງື່ມ ສວນໄຜ່ພັນກໍ 5 ກຸມພາ 2000


ພິມຄັ້ງທີ 1 : 2001
ພິມທີ່ : ໂຮງພິມ ມັນທາຕຸລາດ
ທະບຽນອະນຸຍາດ :

ຈຳນວນ :


© ສະຫງວນລິຂະສິດ : ດວງເດືອນ ບຸນຍາວົງ


ວຽງຈັນ ສ.ປ.ປ.ລາວ

# ສາລະບານເລື່ອງ ໜ້າ


*ຄຳນຳ* : ຈາກໃຈ ຄອບຄົວ ກ

## ພາກ I :

## ເຊື້ອສາຍ 3

1. ຊາຕາ 4
2. ເຂົ້າສູ່ສວນອັນສອນ 11
3. ໄປຕາມອຸດົມການ 15
4. ຜ່ານມໍ່ຣະສຸມ ສູ່ເສັ້ນທາງຊີວິດໃຫມ່ 18
5. ຊີວິດ ນັກຂຽນອິດສະຫລະ 23
6. ຮັບເຄາະແທນທຸກຄົນ 25
7. ສ້າງທຳແກຸນແຕ່ງ ແຫລ່ງພຳນັກສຸດທ້າຍ 28
8. ຄວາມເຈັບປ່ວຍ ທີ່ບໍ່ສາມາດຝ່າຝືນໄດ້ 30

## ພາກ II :

## ອຸທິນຂຽນຫຍັງແດ່ ? 40

1. ເລື່ອງສັ້ນ 42
2. ສຳນວນຊວນຄິດ 43
3. ຄຳເວົ້າສຳນວນປຽບທຽບ 46
4. ສຸພາສິດ ເກົ່າ-ໃຫມ່ 47
5. ນິຍາມຕ່າງໆ 47
6. ລຳພັນໄປຕາມອາລົມ 48

# ສາລະບານເລື່ອງ ໜ້າ


7. ບັນທຶກຊີວິດປະຈຳວັນ 53

8. ເລື່ອງຕະຫລົກແບບ ອຸທິນ 63

9. ຊ່ອຍກັບກອນກູ້ ກາບກອນປາກເປົ່າ: 66
ສີສະຫລຽວ ສະແຫວງສຶກສາ

## ພາກ III : ຜົນງານແຫ່ງຊີວິດ 76

- ເລື່ອງສັ້ນ
- ກາບກອນ
- ບົດຄວາມສາລະຄະດີ

## ຈາກໃຈ ຄອບຄົວ

ເວລາຍັງມີຊີວິດຢູ່ຮ່ວມກັນເປັນປົກກະຕິສຸກນັ້ນ ຄົງບໍ່ມີໃຜຄິດຢາກຈະຂຽນເລົ່າເລື່ອງຂອງຕົນເອງໃຫ້ຫມູ່ຟັງໂດຍສະເພາະ ເມື່ອບໍ່ໄດ້ຄິດວ່າ ຊີວິດຂອງເຮົາມີຫຍັງພິເສດ ຫລື ມີບົດຮຽນແນວໃດແນວນຶ່ງໃຫ້ແກ່ຫມູ່ຫລືສັງຄົມ. ຂ້ອຍເອງເຄີຍຂຽນຊີວະປະຫວັດຂອງພໍ່ (ຊີວິດແລະຜົນງານຂອງ **ມະຫາສີລາ ວີຣະວົງສ໌**) ແລະ ເລື່ອງ "**ເມື່ອແມ່ເຂົ້າຄຸກ**" ອັນເປັນຊີວິດຈິງຕອນນຶ່ງຂອງແມ່ ເມື່ອຄາວ ຕົກຢູ່ໃນສະພາບອັດຕະຄັດ. ສຳລັບພໍ່ນັ້ນຂ້ອຍເຫັນວ່າ ເພິ່ນເປັນຜູ້ຍິ່ງໃຫຍ່ຄົນນຶ່ງ ຊີວິດເຕັມໄປດ້ວຍການຕໍ່ສູ້ໃນຫລາຍຮູບແບບ ເຊິ່ງທັງຫມົດລ້ວນແຕ່ເປັນການຕໍ່ສູ້ເພື່ອສ່ວນໂຮມທີ່ມີຄວາມສຳຄັນຕໍ່ການ ກອບກູ້ເອກະລາດ ທາງການເມືອງ ແລະວັດທະນະທຳລາວ. ສະເພາະ ວິທີການຕໍ່ສູ້ ແລະເຮັດວຽກຂອງເພິ່ນເທົ່ານັ້ນ ກໍສົມເອົາມາເຜີຍແຜ່ ເປັນບົດຮຽນໃຫ້ແກ່ລູກຫລານຜູ້ເກີດໃຫມ່ໃຫຍ່ລຸນແລ້ວ, ສ່ວນແມ່ ຂ້ອຍເຫັນວ່າ ເພິ່ນເປັນແມ່ຍິງພິເສດປະເພດ ຫາບໍ່ໄດ້ຫລາຍໃນຍຸກນັ້ນ. ເພິ່ນສະຫລາດສະຫລຽວ ເອົາໂຕລອດໃນຍາມຫຍຸ້ງຍາກ ເຖິງບໍ່ຮູ້ຫນັງສື ກໍມີພິກໄຫວວ່ອງໄວ ລ້ຽງລູກສິບຫ້າຄົນ ໃຫ້ເຕີບໃຫຍ່ ເປັນຜູ້ເປັນ ຄົນໄດ້ດີພໍສົມຄວນ.

ຂ້ອຍເອງ ບໍ່ເຄີຍຄິດວ່າຈະຕ້ອງມາຂຽນເລົ່າເລື່ອງຊີວິດຂອງ **ອຸທິນ ບຸນຍາວົງ** ຜູ້ເປັນຄູ່ຊີວິດຢູ່ຮ່ວມກັນມາ ຊາວສາມປີ ແລະຂ້ອຍກໍບໍ່ຄຶດມາກ່ອນວ່າຊີວິດຂອງ **ອຸທິນ** ຈະມີຫຍັງຫນ້າສົນໃຈ ພໍເປັນຕາຂຽນຮອດ ແຕ່ພໍລາວມາຈາກໄປ ຂ້ອຍໄດ້ອ່ານສິ່ງຕ່າງໆ ທີ່ລາວຂຽນໄວ້ ແລະຜົນງານທີ່ລາວເຮັດມາແລ້ວກໍພົບວ່າທີ່ແທ້ແລ້ວຊີວິດ ຂອງແຕ່ລະຄົນຕ່າງກໍມີຄ່າ ມີຄວາມຫມາຍຂອງມັນ ພຽງແຕ່ເຮົາ ຜູ້ເບິ່ງຜູ້ສຶກ

ສາພີ້ ຈະແນມເຫັນຄຸນຄ່າອັນນັ້ນແນວໃດ.

ໃນກາງນະນັກຂຽນ ພວກເຮົາມັກເວົ້າລົມກັນຫລິ້ນສະເຫມີວ່າ ຢາກຈະຂຽນເລື່ອງນັ້ນເລື່ອງນີ້ເມື່ອໂອກາດເຫມາະສົມ ແລະ**ອຸທິນ** ກໍມັກຈະເປັນຜູ້ຊຸກຍູ້ຂ້ອຍກັບ **ເອື້ອຍດາຣາ**(**ດວງຈຳປາ** ນັກຂຽນ ນະວະນິຍາຍຍາວ) ສະເຫມີ ວ່າໃຫ້ຂຽນເລື່ອງຊີວິດ ກ່ຽວກັບຄວາມ ປ່ຽນແປງຂອງບ້ານເມືອງ ເຂົາຢາກໃຫ້ມີວັນນະຄະດີມ່ວນໆ ສຳລັບ ຄົນທົ່ວໄປອ່ານ ຢາກໃຫ້ເດັກນ້ອຍເຍົາວະຊົນລາວ ມີປື້ມອ່ານຫລາຍໆ ມີປື້ມນິທານປະກອບຮູບ ທີ່ມ່ວນຕື່ນເຕັ້ນ ແລະມີສາລະປະໂຫຍດ ຕ່າງໆນາໆ.

ແຕ່ສຸດທ້າຍຊີວິດຂອງບາງຄົນກໍສັ້ນເກີນໄປ ກ່ອນທີ່ເຂົາຈະໄດ້ ເຮັດສິ່ງທີ່ມຸ່ງຫວັງນັ້ນສຳເລັດ, ດັ່ງ **ອຸທິນ** ທີ່ມາດ່ວນຈາກໄປໃນເວລາ ທີ່ຄວາມມຸ່ງຫວັງສ້າງສັນຫລາຍອັນຂອງເຂົາຮ່ວມກັບຫມູ່ ແລະຍາດ ພີ່ນ້ອງພວມເປັນຮູບຮ່າງ ຫນັກແຫນ້ນຂຶ້ນ. ພາຍຫລັງ **ອຸທິນ** ຈາກໄປບໍ່ເຖິງຂວບປີ ຄວາມປາຖະຫນາ ທີ່ເຂົາຝາກໄວ້ບາງອັນ ກໍ ເກີດເປັນຄວາມຈິງ ທັງນີ້ກໍດ້ວຍ ຄວາມຮ່ວມມືຈາກຍາດມິດ ຫມູ່ ເພື່ອນທັງຢູ່ໃກ້ ແລະຢູ່ໄກ ເຊັ່ນແຜນການຊ່ອຍສ້າງຕັ້ງ ຫ້ອງອ່ານປື້ມ ໃຫ້ໂຮງຮຽນມັດທະຍົມຕົ້ນ ບ້ານບໍ່ແຕນ ແດນກຳເນີດ, ໂຮງຮຽນ ປະຖົມອູບມຸງ ມ.ສີໂຄຕະບອງບ່ອນທີ່ເຂົາເຂົ້າຮຽນຊັ້ນປະຖົມປາຍ ແລະໂຮງຮຽນ ປະຖົມບ້ານໄຮ່ ມ.ໄຊທານີ ແຂວງກຳແພງວຽງຈັນ. ຍັງມີຫລາຍສິ່ງຫລາຍອັນ ທີ່ **ອຸທິນ** ຄຶດວ່າຂ້ອຍກັບລູກ ອ້າຍເອື້ອຍນ້ອງ ຂອງພວກເຮົາພ້ອມດ້ວຍຍາດສະຫນິດເພື່ອນມິດ ຮ່ວມອຸດົມການ ທັງທີ່ ຢູ່ພາຍໃນ ແລະຕ່າງປະເທດ ຈະສາມາດດຳເນີນ ໃຫ້ເກີດຜົນໄດ້ ເຊັ່ນ ໂຄງການປຸກສ້າງ **ຫໍສະຫມຸດ ມະຫາສີລາ ວີຣະວົງສ໌** ໃຫ້ເປັນບ່ອນສະ ສົມ ຮັກສາເອກະສານກ່ຽວກັບພາສາ ວັນນະຄະດີ ປະຫວັດສາດ ສິລະ

ປະຂອງລາວ ແລະຜົນງານອັນສຳຄັນຂອງພໍ່.

ເວົ້າຕາມຈິງແລ້ວ ຄວາມມຸ່ງຫວັງອັນນີ້ ບໍ່ແມ່ນຂອງ **ອຸທິນ** ຜູ້ດຽວ ແຕ່ມັນແມ່ນຄວາມມຸ່ງຫວັງຂອງບັນດາເພື່ອນມິດ ນັກຄິດ ນັກຂຽນ ນັກຄົ້ນຄວ້າລູກສິດ ລູກຫລານ ທ່ານ **ມະຫາສີລາ ວີຣະວົງສ໌** ທຸກຄົນ. ດັ່ງນັ້ນ ຂ້ອຍຈຶ່ງເຊື່ອວ່າ ແຜນການປຸກສ້າງຫໍສະຫມຸດນີ້ ຈະບັນລຸເປົ້າຫມາຍໄດ້ດັ່ງທີ່ **ອຸທິນ** ຄາດຫວັງໄວ້ ສ່ວນໂຄງການອື່ນໆ ເຊັ່ນ ໂຄງການປົກປັກຮັກສາ ແລະສົ່ງເສີມເຄື່ອງຈັກສານຊົນເຜົ່າພາກໃຕ້ ກັບທ່ານ **ສົມບັດ ສົມພອນ**, ໂຄງການສ້າງຕັ້ງອຸທະຍານພິພິທະພັນ (ຫໍວາງສະແດງກ່ຽວກັບຊີວິດການ ເປັນຢູ່ຂອງປະຊາຊົນລາວ) ກັບອາຈານ **ສີສະຫລຽວ ສະແຫວງສຶກສາ** ນັ້ນ ຂ້ອຍເຊື່ອວ່າ ບໍ່ຊ້າບໍ່ນານກໍຄົງສຳເລັດ ເຊັ່ນດຽວ ກັນເພາະ **ອຸທິນ** ໄດ້ປູພື້ນຖານໄວ້ແດ່ແລ້ວ ແລະທັງ **ທ່ານສົມບັດ** ກັບ **ທ່ານສີສະຫລຽວ** ກໍເປັນຜູ້ມີ ຄວາມສາມາດ ແລະກຳລັງພຽງພໍຢູ່ແລ້ວ. ແຕ່ສິ່ງທີ່ຂ້ອຍເປັນຫ່ວງ ແລະຫນັກໃຈຫລາຍແມ່ນການຂຽນນະວະນິຍາຍສຳລັບເຍົາວະຊົນ ສອງເລື່ອງ ທີ່ **ອຸທິນ** ລົງມືຂຽນໄວ້ຫລາຍຕອນແລ້ວ ເຂົາເຄີຍບອກຂ້ອຍວ່າ ຕັ້ງໃຈຢາກໃຫ້ເປັນເລື່ອງດີທີ່ສຸດໃນຊີວິດ ແລະຂ້ອຍກໍເຊື່ອວ່າ ເຂົາຈະເຮັດໄດ້ ຖ້າສາມາດເຈລະຈາ ຍືດເວລາຈາກໄປ ນຳພະຍາມັດຈຸລາດໄດ້

ນັບເປັນເວລາຂວບປີພໍດີທີ່ **ອຸທິນ** ຈາກພວກເຮົາໄປ ບໍ່ມີຕົວຕົນຂອງເຂົາຜາກົດຢູ່ກ້າມກາງຫມູ່ເພື່ອນ ບໍ່ມີນ້ຳສຽງ ອັນນຸ່ມນວນ ຄອຍໆຂອງເຂົາ ຄອຍສອດແຊກຂຶ້ນເມື່ອໄດ້ຈັງຫວະພໍຄວນ ແຕ່ຂ້ອຍເຊື່ອວ່າເຂົາຢູ່ນຳພວກເຮົາ ດ້ວຍຈິດ ແລະວິນຍານ ທັງແນມເບິ່ງພວກເຮົາ ດ້ວຍສາຍຕາຂອບໃຈ.

ມາເຖິງເວລານີ້ ຂ້ອຍຈຶ່ງຫມັ້ນໃຈວ່າ ການທີ່ຂ້ອຍຕັດສິນໃຈຂຽນເຖິງ **ອຸທິນ** ໃນວາລະຄົບຮອບນຶ່ງປີທີ່ເຂົາຈາກໄປ ແລະພິມປຶ້ມນ້ອຍໆ

ເຫລັ້ມນີ້ ແຈກຢາຍແກ່ຫມູ່ຄູ່ ຍາດພີ່ນ້ອງ ໄວ້ເປັນທີ່ລະນຶກໃນຄັ້ງນີ້ ຄົງຈະມີປະໂຫຍດພໍສົມຄວນ.

ນອກຈາກບົດຂຽນບົດບັນທຶກບາງອັນຂອງ **ອຸທິນ** ແລ້ວຂ້ອຍຍັງໄດ້ນຳເອົາ ກາບກອນກ່ອມລູກ ແລະບົດເຊີ້ງ ເຊິ່ງ ອາຈານ**ສີສະຫລຽວ ສະແຫວງສຶກສາ** ມິດຜູ້ປະເສີດຂອງຄອບຄົວພວກເຮົາຄົນນຶ່ງ ຈື່ຈຳມາຈາກປາກພໍ່ແມ່ຂອງເພິ່ນ ແລະຊາວບ້ານ ຕັ້ງແຕ່ລາວຍັງນ້ອຍ ມາພິມລົງນຳ ຂ້ອຍຄິດວ່າ **ອຸທິນ** ຄົງພາກພູມໃຈ ແລະເຫັນພ້ອມ ທີ່ປື້ມນ້ອຍທີ່ລະນຶກເຫລັ້ມນີ້ ມີສ່ວນກອບກູ້ເອົາກາບກອນກ່ອມລູກ ແລະບົດເຊີ້ງຊາວບ້ານ ວັນນະຄະດີປາກເປົ່າທີ່ພວມຖືກລືມໄປນີ້ ໄວ້ໃຫ້ເປັນມໍລະດົກ ທາງວັດທະນະທຳຂອງພວກເຮົາສືບຕໍ່ໄປ.

ກຳລັງໃຈນ້ຳໃຈໄມຕີ ແລະຄວາມປາຖະຫນາດີ ຕະຫລອດທັງວັດຖຸປັດໄຈ ອັນມີຄ່າທີ່ຍາດພີ່ນ້ອງ ແລະເພື່ອນມິດສົ່ງມາເປັນສິ່ງເຊີດຊູຈິດໃຈ ແລະຂວັນຂອງພວກເຮົາ ໃນວາລະແຫ່ງການສູນເສຽຄັ້ງຍິ່ງໃຫຍ່ເມື່ອປີກາຍນີ້ ເປັນສິ່ງທີ່ພວກເຮົາ ຈະຖະຫນອມແພງ ແລະຈາລຶກໄວ້ຕະຫລອດໄປ.

ຜົນບຸນໃດ ອັນເພິ່ງຈະເກີດມີມາໃນພາຍຫນ້າ ເນື່ອງຈາກການຮ່ວມກັນທຳໃນເວລານີ້ ຂໍຈົ່ງໄດ້ເປັນຜົນຕິດຕາມ ນຳເອົາແຕ່ຄວາມສຸກຄວາມຈະເລີນ ມາສູ່ທ່ານແລະຄອບຄົວ ຕະຫລອດໄປດ້ວຍເທີ້ນ

ສວນໄຜ່ພັນກໍ່ ທໍ່ແຖນແຕ່ງ
ວຽງຈັນ ເດືອນມັງກອນ 2001

*ດວງເດືອນ, ອຸດົມພອນ ແລະ ດວງແຂ ບຸນຍາວົງ*



11 ມັງກອນ 1998

ເກືອບວ່າ ຄອບຄົວພວກເຮົາ ບໍ່ເຄີຍໄດ້ຢູ່ເຮືອນຫລັງນີ້ນຳກັນ
ຄັ້ງນຶ່ງ ກໍໄດ້ນັ່ງເບິ່ງ ພີ່ນ້ອງມິດສະຫາຍ ແຫ່ອ້ອມເຮືອນ ແລະຂຶ້ນເຮືອນໃຫມ່
ເຊິ່ງເປັນພິທີດັ້ງເດີມຂອງຊາວບ້ານ ທີ່ຫ້າມບໍ່ໃຫ້ເຈົ້າຂອງເຮືອນມາແຫ່ນຳ
ເມື່ອເປັນດັ່ງນັ້ນ ພໍ່ແມ່ລູກ ກໍເລີຍໄດ້ນັ່ງຊົມ "ທໍແກນແຕ່ງ"
ກັບຂະບວນແຫ່ຂຶ້ນເຮືອນທີ່ຟົດຟື້ນ
ທັງລໍຖ້າໃຫ້ຜູ້ອະວຸໂສ ຮ້ອງໃຫ້ຂຶ້ນເຮືອນ ເມື່ອເລີກງານຍາມດີ



# I. ເຊື້ອສາຍ

**ອຸທິນ ບຸນຍາວົງ** ເກີດເມື່ອ ວັນທີ 08 ສິງຫາ ປີ 1942 ກົງກັບມື້ແຮມ 12 ຄໍ່າ ເດືອນແແປດ (ແປດສອງຫົນ) ປີມະເມັຽ ຍາມເຊົ້າໆ (ແສງສະຫລົວ ພໍເຫັນໃບຕອງເຫລື້ອມ) ທີ່ບ້ານນາເທົາ ຕາແສງ ບໍ່ແຕນ ເມືອງແກ່ນທ້າວ ແຂວງ ໄຊຍະບຸລີ, ໃນເວລານັ້ນ ເປັນດິນໄທ.

**ອຸທິນ** ເປັນລູກຊາຍກົກ ຂອງ ທ້າວ **ຄໍາພົງ ບຸນຍາວົງ** ກັບ

***ນາງອິນ*** ມີອ້າຍນ້ອງນຳກັນ 7 ຄົນ ແລະນ້ອງຕ່າງແມ່ອີກ 5 ຄົນ ຄື: 1.ທ້າວ ອຸດົມ, 2. ນາງ ສະຫມານ, 3. ນາງ ລະໄມ, 4. ນາງ ບຸນເຈືອ, 5. ນາງ ບຸນສີ, 6. ທ້າວ ແສງເພັດ, 7. ນາງ ສາຍວັນ, 8. ທ້າວ ສຸທັດ, 9. ນາງສົມຈັນ, 10. ນາງ ສົມພອນ ແລະ 11. ນາງ ບຸນທຽມ .

***ທ້າວ ຄຳພົງ*** (ພໍ່) ເປັນລູກຊາຍ ຜູ້ກົກ 7 ຂອງ ***ພຣະຍາ ມະຫິດທິສັກບໍດີ*** (***ທ້າວທຳພິກູນ***) ເຈົ້າເມືອງ ບໍ່ແຕນ (ຄ.ສ.1882 -1942) ກັບ ***ນ. ຄຳໄພ່*** ມີອ້າຍເອື້ອຍນ້ອງຮ່ວມທ້ອງດຽວກັນ 9 ຄົນ.

ທ້າວ ***ຄຳພົງ ບຸນຍາວົງ*** (ພໍ່) ສອບເສັງແຊກ (ໃບປະກາດຈົບປະ ກົມໄດ້) ປີ 1932 ແລະໄດ້ມາຮຽນວິຊາພະຍາບານຊັ້ນຕົ້ນຢູ່ວຽງຈັນ, ແຕ່ງດອງກັບ ***ນາງອິນ*** ລູກ ***ທ້າວ ບຸນທັນ*** (ຫມໍຢາພື້ນເມືອງຢູ່ບ້ານ ນາເຫົາ ເມືອງບໍ່ແຕນ ແຂວງໄຊຍະບຸລີ) ກັບ ***ນາງບຸນສີງ***, ***ນາງອິນ*** ມີ ອ້າຍເອື້ອຍນ້ອງນຳກັນ 7 ຄົນ .

***ອຸທິນ*** ແຕ່ງດອງກັບຂ້ອຍ (ດວງເດືອນ ວີຣະວົງສ໌ ລູກຜູ້ກົກ 4 ຂອງ **ມະຫາ ສີລາ ວີຣະວົງສ໌** ແລະ ນາງ **ມາລີ**), ມີລູກນຳກັນສອງຄົນ ຄື ນາງ **ອຸດົມພອນ** (ປຸ໊) ແລະນາງ **ດວງແຂ** (ປຸ້ຍ).

***ຊາຕາ:*** ເປັນກຳພ້າແມ່ແຕ່ອາຍຸ 16ປີ ຂະນະທີ່ຮຽນຢູ່ ວິທະຍາໄລປາວີວຽງຈັນ. ປະສົບອຸບັດຕິເຫດ ສຽດຫມໍ່ຄວາມຕາຍ ຫລາຍຄັ້ງ ນັບຕັ້ງແຕ່ນ້ອຍໆ ອາຍຸປະມານແປດເກົ້າເດືອນ. ຕອນນັ້ນ ແມ່ເອົາ ***ອຸທິນ*** ໄປຢາມແມ່ໂຊັນ (ແມ່ເກົ້າ) ທີ່ບ້ານນາເຫົາ (ບ້ານ ນາເຫົາຢູ່ຕິດກັບບ້ານເຫມືອງແພ່ ແຄມນ້ຳເຫືອງ ບໍລິເວນຊາຍ ແດນລາວໄທ). ເຮືອນຂອງແມ່ໂຊັນ ຕັ້ງຢູ່ແຄມນ້ຳຫ້ວຍ. ***ອຸທິນ*** ກຶກເດັກ ນ້ອຍເຮືອນໃກ້ອຸ້ມໄປຫລິ້ນແຄມຫ້ວຍ ແລະວາງໄວ້ຜູ້ດຽວ ຜູ້ເອົາໄປ ເຜີລົງອາບນ້ຳກັບຫມູ່ ຈຶ່ງລືມຜູ້ນ້ອຍ ພໍຮູ້ເມື່ອກໍບໍ່ເຫັນແອນ້ອຍ ***(ອຸທິນ)*** ແລ້ວ ຈຶ່ງເອີ້ນຫມູ່ມາຊອກຊອຍ ປາກົດວ່າແອນ້ອຍ ທີ່ຄານລົງນ້ຳເອງ

ກືກນ້ຳພັດໄປ ແລະພວມຈະຕົກເຂົ້າໃນກົງພັດນ້ຳ ທີ່ຢູ່ໃຕ້ລົງໄປໄກສົມຄວນ. ນີ້ເປັນອຸບັດເຫດຮ້າຍແຮງເກືອບເອົາຊີວິດຂອງ **ອຸທິນ** ໄປເປັນຄັ້ງທຳອິດ ພໍໃຫຍ່ ຢ່ານົມແມ່ ແລະແມ່ ກໍມີນ້ອງນ້ອຍໆຫລາຍຄົນ **ອຸທິນ** ກໍເລີຍຢູ່ນຳ **ແມ່ໂຊຸ້ນ ບຸນສົງ** ທີ່ບ້ານບາເທົາ ມາຕະຫລອດ ເພາະພໍ່ ເປັນພະຍາບານ (ແພດຊັ້ນຕົ້ນ) ປະຈຳເມືອງ ຕ້ອງເດີນທາງຍ້າຍຄອບຄົວຢູ່ບ່ອນລະສອງປີສາມປີ. ດັ່ງນັ້ນພໍ່ແມ່ ຈຶ່ງເອົາລູກຜູ້ອ່າວໃຫຍ່ ຝາກແມ່ເກົ້າລ້ຽງ ເອົາໄປນຳແຕ່ຜູ້ກິນນົມ ກັບນ້ອງທີ່ຍັງນ້ອຍໆຢູ່. ໃຫຍ່ພໍເຂົ້າໂຮງຮຽນ ຈຶ່ງໄດ້ກັບມາຢູ່ ບ້ານບໍ່ແຕນ ນຳຄອບຄົວລະຍະນຶ່ງ ທີ່ພໍ່ໄດ້ຍ້າຍມາຢູ່ບ້ານ. ອາຍຸໄດ້ທົກເຈັດປີ (1948) **ອຸທິນ** ຮຽນຢູ່ ຫ້ອງປ.ສອງ ກໍເຈັບປ່ວຍຢ່າງຫນັກ ໃຜໆກໍຄິດວ່າ ຄົງບໍ່ລອດແລ້ວ ເພາະທັງເດັກນ້ອຍ ທັງຜູ້ໃຫຍ່ໃນບ້ານເຈັບປ່ວຍເສຽຊີວິດລົງຫລາຍລາຍແລ້ວ ໃນເວລາໄລ່ເລ່ຽກັນ ແຕ່ພໍ່ເກົ້າ ແມ່ເກົ້າ ພໍ່ແມ່ ຍາດພີ່ນ້ອງ ບໍ່ຍອມຈຳນົນ ຊ່ອຍກັນຫາຢາມາຝົນມາຕົ້ມໃຫ້ກິນຢ່າງບໍ່ລົດລະ, ປິ່ນປົວຢູ່ເປັນເດືອນ **ອຸທິນ** ຈຶ່ງຟື້ນຕົວຄືນ ຄັ້ງນີ້ກໍພໍປານຕາຍແລ້ວເກີດໃຫມ່ອີກ, ເຂົາໄດ້ຊີວິດຄືນມາ ແຕ່ກໍຕ້ອງສູນເສຽດວງຕາໄປກ້ຳນຶ່ງ ເພາະການເຈັບປ່ວຍຊຳເຮື້ອຢູ່ດົນ ພາໃຫ້ຕາກ້ຳຊ້າຍອັກເສບເປັນຕຸ່ມ ໃນທີ່ສຸດ ກໍເປັນຝ້າມົວເບິ່ງບໍ່ເຫັນ. ຕໍ່ມາປີນຶ່ງ ຍາ **ອາສະຫລົດ ບຸນຍາວົງ ເຈົ້າຂຽວ** (ນ້ອງສາວພໍ່ ທີ່ແຕ່ງດອງກັບທ່ານຄູ **ຄຳແສນ ເຈົ້າຂຽວ** ຄົນບ້ານຂຸນຕາ ມ. ສີໂຄດຕະບອງ ກຳແພງນະຄອນວຽງຈັນ) ເມື່ອຢາມບ້ານ ໄດ້ເຫັນຫລານຊາຍ ກໍຢາກເອົາມາປິ່ນປົວແລະໃຫ້ຮຽນຫນັງສືຕໍ່ ຈຶ່ງ ຮັບເອົາ**ອຸທິນ** ມາຢູ່ນຳ. ກືວ່າເປັນໂຊກວາສະຫນາຂອງ**ອຸທິນ** ເພາະ ທ່ານ**ຄູຄຳແສນ** ເປັນຜູ້ເບິ່ງການໄກ ມັກສົ່ງເສີມລູກຫລານ ໃຫ້ຮຽນຫນັງສື. **ອຸທິນ** ເດີນທາງມາວຽງຈັນ ພ້ອມກັບ **ນາງສະໄຫມ ບຸນຍາວົງ (ຕໍ່ມາ ໄດ້ແຕ່ງດອງກັບທ້າວ ປາລົດ ສຸບດາຣາ.** ຄົນບ້ານສວນມອນ (ວຽງຈັນ) ລູກສາວຄົນນຶ່ງຂອງ **ຍາລຸງຄຳພາດ** (ອ້າຍພໍ່) ທີ່ເປັນ ນາຍກອງ ຢູ່ບໍ່ແຕນໃນເວລານັ້ນ (ຕຳແຫນ່ງໃຫມ່ສະ

ໄຫມຝຣັ່ງ ຈັດການປົກຄອງໃຫມ່ ແລະຫລຸດການະ ເມືອງບໍ່ແຕນ ລົງມາເປັນກອງ, ນາຍກອງຈຶ່ງມີການະທຽບເທົ່າຮອງເຈົ້າເມືອງ). ທັງສອງຄົນ ອາຍຸໄລ່ເລ່ຽກັນ ຄືລະຫວ່າງ 9-10 ປີ. ຈາກບໍ່ແແຕນ ຕ້ອງຂີ່ມ້າມາເມືອງແກ່ນທ້າວກ່ອນ ໃຊ້ເວລານຶ່ງມື້ເຄິ່ງ ຕໍ່ຈາກນັ້ນ ກໍຂີ່ເຮືອລ່ອງລົງມາຕາມນໍ້າເຫືອງ ໃຊ້ເວລາສອງມື້ຈຶ່ງຮອດປາກນໍ້າເຫືອງ ທີ່ປ່ອງໃສ່ແມ່ນໍ້າຂອງ ແລ້ວລ່ອງເຮືອຕາມນໍ້າຂອງລົງມາຮອດຊະນະຄາມ ອີກນຶ່ງມື້, ກໍ່ດຈາກຊະນະຄາມ ຂີ່ເຮືອຈັກໃຫຍ່ລ່ອງລົງມາຮອດວຽງຈັນ ທີ່ທ່າວັດຈັນ. ທັງສອງ ໄດ້ເຂົ້າຮຽນຕໍ່ທີ່ໂຮງຮຽນປະກົມວັດໄຕ, ຕາແສງສີການເຫນືອ ຢູ່ຫ້ອງ ປ.4 ເວລານັ້ນ ເອີ້ນວ່າຫ້ອງທີສອງນ້ອຍ.

ຄອບຄົວ***ອາສະຫລົດ ແລະອາວຄຳແສນ*** ມີລູກສາວສອງຄົນ ຄືເອື້ອຍ ***ຟອງສະຫມຸດ*** *ແລະ* ***ເອື້ອຍສຸດສາຄອນ*** ນັບທາງເຄືອຍາດ ກໍເປັນເຊື້ອນ້ອງ ແຕ່ອາຍຸແກ່ກວ່າ ຈຶ່ງເອີ້ນເປັນເອື້ອຍ. ເອື້ອຍທັງສອງຮັກແພງ***ອຸທິນ*** ຄືດັ່ງນ້ອງຄີງ ຂອງຕົນເອງ ໂດຍສະເພາະ ***ທ່ານຄູຄຳແສນ*** ຜູ້ເປັນອາວເຂີຍນັ້ນ ໄດ້ເອົາໃຈໃສ່ການຮໍ່າຮຽນຂອງພວກລູກຫລານເປັນພິເສດ ແລະຊຸກຍູ້ໃຫ້ ***ອຸທິນ*** ຮຽນຫນັງສືຕໍ່ລະດັບວິທະຍາໄລ ທັງດູແລ ຊ່ອຍຕັກເຕືອນຢູ່ຕະຫລອດເວລາ. ເຮືອນ ***ອາສະຫລົດ*** ເປັນສູນກາງຕ້ອນຮັບຍາດພີ່ນ້ອງທີ່ມາຈາກທຸກສາລະທິດ ບໍ່ວ່າພີ່ນ້ອງຝ່າຍແມ່ ຫລືພີ່ນ້ອງຝ່າຍພໍ່ ພວກລູກຫລານ ຜູ້ຫນຸ່ມນ້ອຍຈາກຕ່າງບ້ານຕ່າງເມືອງມາພັກພາອາໄສຢູ່ນໍາ ເພື່ອຮຽນຫນັງສື ເທື່ອລະຫລາຍໆຄົນ. ບັນຍາກາດຢູ່ເຮືອນ ເຕັມໄປດ້ວຍຄວາມອົບອຸ່ນ ຮັກແພງກັນ ມີນໍ້າໃຈເອື້ອເຟື້ອຊ່ອຍເຫລືອກັນ ແລະກັນ. ເວລານັ້ນ ***ອຸທິນ ກັບ ສະໄຫມ*** ກໍ່ວ່າ ເປັນຮຸ່ນນ້ອຍກວ່າຫມູ່ຈຶ່ງໄດ້ຮັບຫນ້າທີ່ໄປສົ່ງຈັງຫັນຈັງເພນແກ່ພະສົງແມ່ຂາວທີ່ວັດປ່າຈອມໄຕ ບ້ານດົງນາໂຊກ ເປັນປະຈໍາ, ອາວ ***ຄຳແສນ ເຈົ້າຂຽວ*** ເປັນຜູ້ນັບຖື ແລະເຄັ່ງຄັດໃນການປະຕິບັດ ທັມມະພະພຸດທະສາສະຫນາຄົນນຶ່ງ. ໃນສະໄຫມນັ້ນ (ລະຫວ່າງຊຸມປີ1950-56 ຍັງບໍ່ມີກະຫນົນເທື່ອ)

ສອງພີ່ນ້ອງຈຶ່ງຕ້ອງຍ່າງຂ້າມໜອງໂນ ເຊິ່ງມີຂົວໄມ້ແປ້ນແຜ່ນດຽວ ຍາວ ເກືອບກິໂລແມັດ ແລະຂ້າມທົ່ງໂນນຕານໄປອີກກິໂລແມັດກວ່າໆ.

ຈາກການໄດ້ຢູ່ນຳຄອບຄົວນັກການສຶກສາ ເຊັ່ນທ່ານຄູ ***ຄຳແສນ ເຈົ້າຂຽວ, ອຸທິນ*** ຈຶ່ງຕິດນິໄສມັກອ່ານມັກຮຽນ ເຮັດອັນໃດກໍລະອຽດລະອໍ ແລະດ້ວຍຄວາມເມດຕາອາທອນຂອງ ***ອາສະຫລົດ*** ຜູ່ມີນິໄສອ່ອນ ຫວານ ອົບອຸ່ນ ຈິງໃຈ ***ອຸທິນ*** ຈຶ່ງເປັນຜູ້ນຶ່ງທີ່ມີນ້ຳໃຈດີງາມມັກຊ່ອຍ ເຫລືອຜູ້ອື່ນ ແລະກະທນອມກ່ອມຕົນ. ສາມາດເວົ້າໄດ້ວ່າ ແຕ່ໄວເດັກ ເຖິງໄວຮຸ່ນໜຸ່ມ ***ອຸທິນ*** ເຕີບໃຫຍ່ຢ່າງອົບອຸ່ນ ໄດ້ຮັບຄວາມເມດຕາອາລີ ຈາກຍາດຜູ້ໃຫຍ່ນັບແຕ່ແມ່ໂຊ້ນ ທີ່ລ້ຽງ ດູແຕ່ລາວຍັງນ້ອຍ, ທັງຄອບ ຄົວຂອງລຸງປ້າອາວອາ ແລະລູກໆຫລານໆຂອງເພິ່ນເຊັ່ນຄອບຄົວ ***ອາໄຂຄຳ ອິນທະວົງ*** ຄອບຄົວ ***ອາບົວລົມ ສາຍດາຣາດ*** ບ້ານຂຸນຕາ ເປັນຕົ້ນ.



*ບ້ານຈວນ ເມືອງບໍ່ແຕນ ແຂວງໄຊຍະບຸລີ*



ປູ່ ຄຳພົງ ແລະ ອຸທິນ

ອຸທິນ, ແມ່ໂຊ້ນ ບຸນສົງ, ອຸດົມ



໒໐/໕/໗໐



ຍາດພີ່ນ້ອງ ຈາກ ມ.ພິດສະນຸໂລກ ໄທ ມາຢ້ຽມຢາມ ຢູ່ ບ. ອຸບຕາ









Souvenir des élèves de la classe de 5e M.4.
du Lycée A. Pavie Vientiane. 13/1/58.

ດ້ວຍຄວາມຫ່ວງໃຍ ໃນການສຶກສາຮ່ຳຮຽນຂອງລູກຫລານບາງຄັ້ງ ທ່ານ ***ຄູຄຳແສນ*** ກໍເອົາລູກຫລານຜູ້ຊາຍທີ່ພວມຮຽນຢູ່ນີ້ ໄປຢູ່ນຳເວລາໄປປະຈຳຢູ່ຕ່າງແຂວງ ເຊັ່ນຄັ້ງນຶ່ງ ເພິ່ນໄດ້ໄປຢູ່ຊຽງຂວາງ ເພິ່ນກໍເອົາ ***ອຸທິນ*** ແລະຫລານຊາຍອີກຄົນນຶ່ງໄປຢູ່ນຳ ເພື່ອຕິດຕາມການຮຽນຢ່າງໃກ້ຊິດ. ດັ່ງນັ້ນ ***ອຸທິນ*** ຈຶ່ງເປັນນັກຮຽນປະກົນທີ່ເກັ່ງພໍສົມຄວນ ແລະເມື່ອຮຽນສຸດ ປ.6 ກໍສອບເສັງເຂົ້າຮຽນທີ່ ວິທະຍາໄລປາວີ ເຊິ່ງເປັນໂຮງຮຽນລະດັບມັດທະຍົມສຶກສາ ສາຍສາມັນ ແຫ່ງດຽວຢູ່ວຽງຈັນໃນເວລານັ້ນ. ເມື່ອຮຽນສຳເລັດມັດທະຍົມພາກຕົ້ນ (ມ. ສີ່ ໃນປີ1961) ***ອຸທິນ*** ກໍສອບເສັງເຂົ້າຮຽນຕໍ່ລະດັບມັດທະຍົມປາຍໄດ້. ສະໄຫມນັ້ນກືວ່າດີແລ້ວ ເພາະອັດຕາຄົນເຂົ້າຮຽນຕໍ່ຊັ້ນມັດທະຍົມ ຍັງຫນ້ອຍຢູ່ ໂດຍສະເພາະນັກຮຽນທີ່ມາຈາກຕ່າງແຂວງນັ້ນ ໂອກາດທີ່ຈະສອບເສັງໄດ້ ບໍ່ມີຫລາຍເທົ່າໃດ, ຍ້ອນວ່າ ນັກຮຽນພວກນີ້ສ່ວນໃຫຍ່ຈະບໍ່ເກັ່ງພາສາຝຣັ່ງ ເທົ່າກັບພວກຮຽນຢູ່ວຽງຈັນ. ດັ່ງນັ້ນຜູ້ທີ່ໄດ້ເຂົ້າຮຽນໃນລະດັບມັດທະຍົມປາຍ ຈຶ່ງມັກຈະເປັນລູກຜູ້ຮັ່ງມີຢູ່ວຽງຈັນ ແລະຮຽນມາທາງໂຮງຮຽນຝຣັ່ງໂດຍກົງ. ພວກມາແຕ່ຕ່າງແຂວງ ທີ່ສອບເສັງເຂົ້າຮຽນໄດ້ ຈຶ່ງແມ່ນຜູ້ເກັ່ງສົມຄວນ. ໃນເວລາດຽວກັນນັ້ນ ***ອຸທິນ*** ກໍໄປສະຫມັກສອບເສັງເຂົ້າໂຮງຮຽນກົດຫມາຍ ການປົກຄອງ ແລະສອບເສັງໄດ້ຄືກັນ. ລະຍະລັ່ງເລວ່າຈະເລືອກຮຽນ ຕໍ່ອັນໃດດີຢູ່ນັ້ນ ຕາກ້ຳຊ້າຍ ທີ່ເປັນຝ້າກໍອັກເສບຂຶ້ນ ເຮັດໃຫ້ເຈັບຫົວຢ່າງແຮງ ຈົນບໍ່ສາມາດຮຽນຫນັງສືໄດ້ ຍາດພີ່ນ້ອງຈຶ່ງພາ ***ອຸທິນ*** ໄປປິ່ນປົວ ແລະປ່ຽນຫນ່ວຍຕາຢູ່ໂຮງຫມໍໃຫຍ່ແຫ່ງນຶ່ງໃນກຸງເທບ. ການປິ່ນປົວຄັ້ງນີ້ ຍາວນານ ແລະຕ້ອງໃຊ້ຈ່າຍສູງ ແຕ່ ***ອຸທິນ*** ໂຊກດີ ມີຍາດພີ່ນ້ອງ ຜູ້ໃຫຍ່ຄື ***ຍາປ້າກັ່ນ ແສງສິຣິ*** (ເອື້ອຍກົກຂອງພໍ່) ທີ່ມີຫລັກຖານຫມັ້ນແກ່ນຢູ່ປະເທດໄທ ໃຫ້ຄວາມເມດຕາອຸປະການະ ແລະລູກໆຫລານໆຂອງເພິ່ນທຸກຄົນກໍໃຫ້ການຊ່ອຍເຫລືອ ເກື້ອກູນເປັນຢ່າງດີ.

**ອຸທິນ** ນອນໂຮງໝໍຢູ່ຫລາຍເດືອນ ຂາດໂຮງຮຽນໄປດົນ ຈໍາຕ້ອງລາອອກ ທັງໆທີ່ເສັງເຂົ້າໄດ້ແລ້ວນັ້ນໄປທັງສອງບ່ອນ ເວລານັ້ນນ້ອງສອງຄົນ ກໍໄດ້ລົງມາຢູ່ວຽງຈັນນໍາຄອບຄົວຍາອາ **ສະຫລົດ** ທີ່ບ້ານຂຸນຕາອີກ **ອຸທິນ** ເຊິ່ງເປັນອ້າຍໃຫຍ່ ເຫັນວ່າຕົນພໍຫາເຮັດວຽກງານໄດ້ແລ້ວ ຈຶ່ງຕັດສິນໃຈ ຍຸຕິການຮໍ່າຮຽນ ແລະຊອກຫາວຽກເຮັດ ເຊິ່ງສະໄໝນັ້ນ ກໍບໍ່ເປັນເລື່ອງຫຍຸ້ງຍາກພໍເທົ່າໃດ ສໍາລັບຄົນມີຄວາມຮູ້ລະດັບ ມ. ສີ່. ອີກຢ່າງນຶ່ງ ທ່ານ **ຄູຄໍາແສນ ເຈົ້າຂຽວ** ຜູ້ເປັນເສົາຫລັກຂອງຄອບຄົວ ເປັນຮົ່ມໂພໄຊຂອງລູກ ຫລານກໍເສຍຊີວິດໄປຢ່າງກະທັນຫັນ ຍ້ອນເສັ້ນເລືອດໃນສະໝອງແຕກ ເມື່ອປີ 1962. ເຫດການນີ້ນໍາເອົາຄວາມເສົ້າໂສກເສຍໃຈ ມາສູ່ຍາດພີ່ນ້ອງ ແລະລູກໆຫລານໆ ທຸກຄົນເປັນຢ່າງຍິ່ງ.

## 2. ເຂົ້າສູ່ສວນອັກສອນ

ນັບແຕ່ປີ 1963 (ອາຍຸ 21 ປີ) ເປັນຕົ້ນມາ **ອຸທິນ** ໄດ້ເຮັດວຽກຫລາຍວິຊາຊີບ ລະຍະທໍາອິດໄດ້ສະໝັກ ເຂົ້າເປັນບັນນາລັກ ຢູ່ຫ້ອງສະໝຸດ ຂອງສໍານັກງານກະແຫລງຂ່າວອາເມລິກາ ຫລືຢູຊິສ (USIS). ລະຍະນີ້ ກືວ່າ **ອຸທິນ** ມີໂອກາດ ອ່ານປຶ້ມ ທັງພາສາໄທ ແລະພາສາອັງກິດ ຢ່າງຈຸໃຈ ເຂົາເລີ່ມຕິດໃຈໃນພາສາສໍານວນ ວັນນະຄະດີ ຂອງຕ່າງປະເທດ ໂດຍສະເພາະໄດ້ຮູ້ຈັກກັບເລື່ອງສັ້ນ ທີ່ສຸດລົງຢ່າງບໍ່ຄາດຄິດຂອງ **ໂອ.ເຮັນຣີ** ແລະເລື່ອງຕື່ນເຕັ້ນຂອງ **ແຈກ ລອນດອນ** ນັກຂຽນເລື່ອງຜະຈົນໄພຕໍ່ສູ້, ທັງສອງເປັນນັກຂຽນອາເມລິກາ ຍຸກບຸກເບີກວັນນະກໍາຮ່ວມສະໄໝ, ຕະຫລອດຮອດນັກຂຽນຄລາຊິກ ຄົນອື່ນໆ ຂອງໂລກ ເຊັ່ນ **ເລຟ ໂຕນສະຕອຍ, ວິກຕອກ ຮູຍໂກ**... ສ່ວນພາສາໄທ ເຂົາໄດ້ອ່ານວາລະສານ ທີ່ກືວ່າເປັນອັນດັບນຶ່ງຂອງໄທໃນຍຸກນັ້ນ ຄື **ຊາວກຸງ, ສັງຄົມສາດປະຣິທັດສນ໌**. ການອ່ານລະຍະນີ້ ສ້າງພື້ນຖານ ອັນໜັກ

ແຫນ້ນ ໃຫ້ແກ່ການຂຽນຫນັງສືຂອງເຂົາໃນເວລາຕໍ່ມາ. ***ອຸທິນ*** ປະທັບໃຈເປັນພິເສດ ເລື່ອງສັ້ນທີ່ຊື່ວ່າ "***ຈົດຫມາຍ ສາວນິຣະນາມ***" ຂຽນໂດຍ ***ສະເຕຟານ ຊເວກ*** (Lettre d'une inconnue , Stefan ZWEIG) ນັກຂຽນອົສເຕຣຍ ທີ່ແປເປັນພາສາຝຣັ່ງ,ເລື່ອງນີ້ພາໃຫ້ ***ອຸທິນ*** ຢາກເປັນນັກຂຽນ ແລະຕັດສິນໃຈຈັບປາກກາຂຽນຫນັງສື ໃນລະຍະຕໍ່ມາ. ໃນລະຫວ່າງປາຍຊຸມປີ 60 ***ອຸທິນ*** ເຮັດວຽກເປັນນາຍບັນຊີ ໃຫ້ບໍລິສັດຮັບເຫມົາສ້າງທາງໃນພາກເຫນືອ. ຫລາຍຄັ້ງ ຕ້ອງອອກໄປນອນປ່າຄ້າງແຮມໃນຄ້າຍກໍ່ສ້າງ ມີປະສົບການຫລາກຫລາຍ ນັບທັງການຜະຈົນໄພເກືອບເອົາຊີວິດບໍ່ລອດ ແລະໄພຄຸກຄາມຈາກຍຸງກົ້ນປ່ອງ. ເຫັນຫມູ່ຄູ່ຫລາຍຄົນໃນຄ້າຍເຈັບປ່ວຍ ແລະລົ້ມຕາຍລົງຕໍ່ຫນ້າຕໍ່ຕາ ***ອຸທິນ*** ຈຶ່ງລາອອກຈາກວຽກງານນີ້ ຫັນມາເຮັດວຽກທີ່ບໍ່ສ່ຽງຊີວິດ ຢູ່ໃນເມືອງແຫນ. ເຫດການບາງຢ່າງໃນລະຍະນີ້ ໄດ້ຮັບການຖ່າຍທອດເປັນເລື່ອງສັ້ນຫລາຍເລື່ອງ ໃນຊຸດ "***ຜູ້ຍິງບໍ່ຜູ້ຍິງ***" ເຊັ່ນເລື່ອງ ***ນ້ຳໃຈ, ຝົນລົນທີ່ຫ້ວຍຫມໍ້ ...***

ໃນຂັ້ນຕົ້ນ ***ອຸທິນ*** ລົງມືຈັບປາກກາ ດ້ວຍການຂຽນບົດສັ້ນໆ ປະເພດ ຈົ່ມເລັກຈົ່ມນ້ອຍ ກ່ຽວກັບບັນຫາຊີວິດປະຈຳວັນຂອງຄົນທຳມະດາ ແລ້ວສົ່ງໄປອອກຫນັງສືພິມລາຍວັນສະບັບນຶ່ງ ເປັນປະຈຳ ແລະຕໍ່ມາກໍໄດ້ໂຮມພິມເປັນເຫລັ້ມ ໃນປີ 1966 ຊື່ວ່າ "***ໂລກນີ້ຄືລະຄອນກ້ອມ***" ໂດຍໃຊ້ນາມປາກກາວ່າ "***ແລງ ພູຜາເງິນ***". ດັ່ງນັ້ນ ມາເຖິງຊຸມຕົ້ນປີ 70 ຜູ້ອ່ານໃນວຽງຈັນ ເລີ່ມຄຸ້ນເຄີຍກັບຊື່ "***ແລງ ພູຜາເງິນ***" ນາມປາກກາທຳອິດຂອງ ***ອຸທິນ*** ທີ່ຕັ້ງຂຶ້ນເອງ ດ້ວຍຄວາມປະທັບໃຈ ໃນເງົາສີເງິນຍວງ ຂອງພູຜາເດືອນ ຢູ່ບໍ່ແຕນ ແດນກຳເນີດໃນຍາມແລງຄ້ອຍຄ່ຳ ເວລາພະຈັນພວມພົ້ນຂຶ້ນສູ່ເວຫາເບື້ອງຫລັງຂອງ ໂງ່ນພູຜາເດືອນ. ປາກົດວ່າ ຜູ້ອ່ານໃຫ້ການຕ້ອນຮັບປື້ມນ້ອຍຫົວນີ້ພໍສົມຄວນ ***ອຸທິນ*** ຈຶ່ງລົງມືຂຽນເລື່ອງສັ້ນ ສົ່ງໄປອອກໃນວາລະສານ

ລາຍເດືອນຕ່າງໆ ເປັນ ປະຈຳເຊັ່ນ ວາລະສານ ***ເພື່ອນແກ້ວ, ຕຳຮວດສັມພັນ, ພິມລາວ, ສັມພັນ ບັນເທີງ.*** ມາຮອດຊຸມຕົ້ນປີ 70 ນາມປາກກາ "***ແລງ ພູຜາເງິນ***" ກໍເປັນທີ່ກ່າວເຖິງໃນວົງການຂີດຂຽນ ຄຽງບ່າຄຽງໄຫລ່ກັບນັກຂຽນຄົນອື່ນໆໃນວຽງຈັນ.

ເລື່ອງສັ້ນຂອງ ***ອຸທິນ*** ໃນຍຸກເລີ່ມຕົ້ນນີ້ມີເນື້ອໃນຫລາກຫລາຍສົມຄວນ ເຂົາຂຽນທັງເລື່ອງຄວາມຮັກຫວານຈ້ອຍໆ, ຮັກແບບລົມໆແລ້ງໆ ຮັກບໍ່ສົມຫວັງ ຂອງຍິງສາວຜູ້ຕ່ຳຕ້ອຍ (***ເຮົາຮັກກັນບໍ່ໄດ້, ທາງສາຍຄູວຽງ, ສຽງສະອື້ນ ຈາກວຽງພູຄາ, ດອກໄມ້ ທີ່ໄຮ້ຄ່າ*** ...) ຈົນມີຜູ້ຕິລາຄາວ່າ ***ອຸທິນ*** ເປັນນັກຂຽນ ປະເພດເພີ້ນຈິດ (romantism) ໄຮ້ສາລະມຸ່ງແຕ່ເພື່ອບັນເທີງຢ່າງດຽວ ແຕ່ເວລາດຽວກັນ ***ອຸທິນ*** ຍັງຂຽນເລື່ອງຕະຫລົກສັ້ນໆ ສຽດສີປະເພນີ ສັງຄົມ (***ຫມອນຂ້າງ ແລະຫນາມຫມາກຈັບ***) ການກີສັກສີຂອງສາວສະໄຫມໄຫມ່ (***ຜູ້ຍິງນໍຜູ້ຍິງ***) ເລ່ຫລ່ຽມຕື້ນໆຂອງຜູ້ຊາຍ (***ແມງໄມ້ເຂົ້າຕາ***) ເລື່ອງ ສຽດສີຄົນຫວັງລວຍຈາກຫວຍເບີ (***ກັມຂອງໃຜ***), ເລື່ອງສະທ້ອນມະນຸດ ສະທັມ ຄວາມເຫັນໃຈແລະເຂົ້າໃຈໃນເພື່ອນມະນຸດ (***ນ້ຳໃຈ,ອຳນາດພອນ, ຝົນລົນທີ່ຫ້ວຍຫມໍ້***) ຫລື ແມ່ນແຕ່ເລື່ອງສຽດສີການເມືອງ ຂອງຜູ້ໃຊ້ສິດອຳນາດເກີນຂອບເຂດ ເຊັ່ນ ເລື່ອງ ***ລາຄາຂອງຄວາມຕາຍ*** (ໄຜ່ຫນາມ,1972) ແລະສຽດສີຄົນນັກລູບເລຽເຈົ້ານາຍ ເຊັ່ນ ເລື່ອງ "***ຕາຍຢ່າງຫມາ***" (ໄຜ່ຫນາມ, 1975).



*ຜາເດືອນ ທີ່ບໍ່ແຕນ*



[illegible]

[illegible] 2 ກຸມພາ 1973

([illegible] 27 - 30 ມະກະລາ 1973)



ໄປທັດສະນະສຶກສາ
ທີ່ ສະຫະລັດ ປີ 1972



ຕິດຕາມເອົາຂ່າວ ວັນປະຫວັດສາດ
23 ສິງຫາ 1975

## 3 . ໄປຕາມອຸດົມການ

ອາດເວົ້າໄດ້ວ່າ **ອຸທິນ** ເປັນຄົນຂຽນໜັງສື ໂດຍອາຊີບມາແຕ່ຊຸມຕົ້ນປີ 70 ເຂົາເຂົ້າເປັນນັກຂຽນປະຈຳໃຫ້ແກ່ໜັງສືພິມ ຊາດລາວ ລາຍວັນ ໃນຖານະນັກຂ່າວສັງຄົມ ເຄີຍໄດ້ຮັບທຶນໄປຫັດສະນະສຶກສາຢູ່ສະຫະລັດອາເມລິກາ, ປະເທດໄທ ແລະເດີນທາງໄປຫລາຍປະເທດໃນອາຊີ. ໃນຂະນະທີ່ປະກອບອາຊີບນີ້ ເຂົາເຝິກຝົນຮ່ຳຮຽນ ພາສາອັງກິດຢູ່ເປັນນິດ. ເບິ່ງໃນແງ່ການເມືອງ ເຊິ່ງມີການປ່ຽນແປງຢ່າງໃຫຍ່ຫລວງ ໃນຊຸມກາງປີ 70 ແລ້ວ **ອຸທິນ** ເຊິ່ງເຮັດວຽກໃນໜັງສືພິມ ຂອງຝ່າຍວຽງຈັນ ອັນເປັນປາກກະບອກສຽງຂອງຝ່າຍຂວາ ຈຶ່ງສົມຄວນຈະຖືກເບິ່ງໃນແງ່ລົບ ຢ່າງບໍ່ມີການຍົກເວັ້ນ. ແຕ່ມີຫຍັງເກີດຂຶ້ນ? ແລະເປັນຫຍັງ **ອຸທິນ ບຸນຍາວົງ** ນັກຂຽນຝ່າຍຂວາ ຈຶ່ງສາມາດຢືນຢູ່ກ້າມກາງແປວໄຟອັນຮ້ອນແຮງແຫ່ງການປ່ຽນແປງຄັ້ງສຳຄັນສຸດໃນທາງການເມືອງຂອງປະເທດລາວໃນຍຸກນີ້ໄດ້ ແລະສາມາດ ສືບຕໍ່ສ້າງຜົນງານ ຈົນເປັນທີ່ຍອມຮັບຂອງຜູ້ອ່ານລາວ ເປັນສ່ວນໃຫຍ່ບໍ່ວ່າພາຍໃນ ແລະຕ່າງປະເທດ. **ອຸທິນ** ເອງກໍຖືກຖາມໃນທຳນອງນີ້ເລື້ອຍໆ ໂດຍສະເພາະໃນແວດວົງນັກຂຽນ ນຳກັນ. ເມື່ອມີຄຳຖາມ ກໍມີຄຳຕອບ ເຊິ່ງຜູ້ໃກ້ຊິດສະໜິດສະໜົມກັບ **ອຸທິນ** ແລະຄອບຄົວ ສາມາດເດົາໄດ້. ເຫດຜົນຕົ້ນຕໍ ຄົງແມ່ນຄວາມຜູກພັນອັນລ້ຳເລີກ ໃນວັດທະນະທຳພາສາວັນນະຄະດີລາວ ແບບທຳມະດາໆ ຄືກັບໝູ່ຄູ່ເພື່ອນຮ່ວມອຸດົມການອື່ນໆ, ຄວາມບໍ່ທະເຍີທະຍານໃນຖານະຕຳແໜ່ງ ແລະການບໍ່ມີຄວາມຂັດແຍ່ງທາງການເມືອງ ຮຸນແຮງກັບພັກຝ່າຍໃດມາກ່ອນ. ມັນສະແດງອອກຢູ່ບ່ອນວ່າ ບົດຂຽນຕ່າງໆ ຂອງ **ອຸທິນ** ບໍ່ໄດ້ມຸ່ງໂຈມຕີລະບອບການເມືອງໃດນຶ່ງເປັນຕົ້ນຕໍ ເຂົາພຽງແຕ່ໃຫ້ຂໍ້ສັງເກດ ກ່ຽວກັບພຶດຕິກຳທາດແທ້ຂອງຕົວລະຄອນໃນສັງຄົມນັ້ນໆ ເຊິ່ງແມ່ນສັງຄົມຂອງຄົນລາວ ແລະບໍ່ວ່າຈະຢູ່ພາຍໃຕ້ລະບອບການເມືອງໃດ ຄົນດີ

ຄົນຊົ່ວ ຄົນຂີ້ຄ້ານ ເອົາປຽບໝູ່ ຄົນທີ່ເປັນພິດໄພຕໍ່ສັງຄົມ ຄົນຮັ່ງ ຄົນທຸກ ຍ່ອມມີປະປົນກັນໄປເປັນທຳມະດາ. ອີກເຫດຜົນນຶ່ງ ຄົງເປັນຍ້ອນວ່າ ລະຍະຫລັງມານີ້ ***ອຸທິນ*** ໄດ້ພົວພັນໃກ້ຊິດກັບພວກເຮົາ ນັກຂຽນກຸ່ມ "***ໜາມໄຜ່***" ເຊິ່ງເປັນລູກ***ມະຫາສິລາ ວີຣະວົງສ໌*** ນັກປາດ ນັກວັນນະຄະດີ ຄົນສຳຄັນຂອງລາວ. ໃນຕົ້ນປີ 1972 ມະຫາສິລາ ກັບພວກລູກໄດ້ອອກວາລະສານລາຍເດືອນ ຊື່ "ໄຜ່ໜາມ", ***ອຸທິນ*** ໄດ້ກາຍເປັນນັກຂຽນປະຈຳຄົນນຶ່ງ ໃຫ້ແກ່ວາລະສານນີ້ ***ອຸທິນ*** ເປັນເພື່ອນຮຸ່ນດຽວກັບ ***ປາກຽນ ວີຣະວົງສ໌*** (ລູກຊາຍຂອງ ***ມະຫາສິລາ ວີຣະວົງສ໌***) ຫລື ***ປາໄນ*** ນັກກະວີສຽດສີສັງຄົມ ທີ່ມີສີປາກຄົມເລິກໃນຍຸກນັ້ນ. ແນວຂຽນໃນວາລະສານໄຜ່ໜາມ ເນັ້ງເອນໄປທາງວັດທະນະທຳ ແລະສັງຄົມວິຈານ ເປັນທີ່ນິຍົມຊົມຊອບຂອງຜູ່ອ່ານພໍສົມຄວນ ແລະ***ອຸທິນ*** ກໍເປັນຜູ້ນຶ່ງ ທີ່ເຮັດໃຫ້ເນື້ອໃນຂອງ ວາລະສານໄຜ່ໜາມ ມີຄວາມສົມບູນຂຶ້ນ ໂດຍຍົກເອົາປະເດັນສຳຄັນ ໃນລະດັບສາກົນ ມາສະເໜີແບບງ່າຍໆ ເຊັ່ນສາລະຄະດີກ່ຽວກັບ ***ແຕັງແຕັງ*** *(Tintin)* ໂຕກາຕູນ ຂອງນັກແຕ້ມແບນຢ້ຽມ ທີ່ມີຄົນອ່ານທົ່ວໂລກ ຫລືເລື່ອງຂອງປະທານ ***ເມົາເຈີຕຸງ*** ຜູ້ນຳຈີນ ທີ່ມີອຳນາດສູງສຸດໃນທົດສະ





*ພິທີມອບຣາງວັນຫລຽນຄຳ ເລື່ອງສັ້ນ ຂອງ "ໄຜ່ໜາມ" 1973 ໂດຍການເປັນປະທານ ຂອງພໍ່ ມະຫາສິລາ ວີຣິວົງສ໌*

ວັດທີ 5-6 ຂອງສະຕະວັດ ທີ 20. ບົດ ຄວາມເລື່ອງ "**ປັດຊະຍາເທິງຝາ ວິດ**" ທີ່ປຽບທຽບຢ່າງທ້າທາຍ ຄວາມສະອາດຂອງຫ້ອງວິດ ໃນ ສະຖານທີ່ລາຊະການຕ່າງໆ ໃນວຽງຈັນ ກັບວິທີການປົກຄອງ ຂອງ ລັດຖະບານ ໃນຊຸມຕົ້ນ ປີ 70 ຫລື ເລື່ອງ "**ເຝີ ຟັນລ້ານ**" ທີ່ສຽດສີຄວາມ ເຫັ່ກິນເຝີແທນເຂົ້າເຊົ້າ ຂອງຄົນໃນວຽງຈັນ.

ໃນດ້ານສ່ວນຕົວ **ອຸທິນ** ເລີ່ມມີຄວາມຜູກພັນ ໃກ້ຊິດກັບຂ້ອຍແລ້ວ ແລະພວກເຮົາມີຄວາມເຂົ້າໃຈກັນດີ. ເມື່ອເກີດການປ່ຽນແປງ ຂ້ອຍ ຄຶດວ່າ ຕົນເອງຄົງມີສ່ວນກຳນົດເສັ້ນທາງຊີວິດຂອງ **ອຸທິນ** ໃນເວລາ ຕໍ່ມາ ບໍ່ຫນ້ອຍ.

ພວກເຮົາຕົກລົງໃຈ ສ້າງຄອບຄົວນຳກັນ ໃນເວລາທີ່ສະພາບ ການບ້ານເມືອງຍັງບໍ່ທັນຫຸ່ນທ່ຽງດີ ຄວາມຂາດເຂີນທາງດ້ານວັດຖຸ ເປັນທີ່ປະຈັກແຈ້ງ ແຕ່ນັ້ນ ບໍ່ໄດ້ເປັນບັນຫາຕົ້ນຕໍສຳລັບພວກເຮົາ ເພາະ ແຕ່ລະຄົນໄດ້ຜ່ານຜ່າຊີວິດທີ່ລຳບາກອັດສົນມາແລ້ວ ສິ່ງສຳຄັນກວ່າຫມູ່ ແມ່ນພວກເຮົາມີອຸດົມການອັນດຽວກັນ ຢາກປາກເວົ້າ ພາສາລາວ ຢາກໃຊ້ພາສາລາວໃຫ້ມ່ວນໆ ແລະຮູ້ສຶກຫວງແຫນພາສາວັນນະຄະດີ ລາວ. ທັງເປັນຄົນມັກອ່ານ ມັກ ຂຽນຄືກັນ. ພິທີແຕ່ງດອງຂອງ ພວກເຮົາ ຈັດຂຶ້ນແບບງ່າຍໆ ໃນວັນທີ 06 ກໍລະກົດ 1976 ທີ່ເຮືອນພໍ່ (ມະຫາ ສີລາ ວີຣະວົງສ໌) ຄຸ້ມບາຄຳທົ່ງ ມ.ສີໂຄດຕະບອງ ກຳແພງນະ ຄອນວຽງຈັນ, ມີຍາດພີ່ນ້ອງ ຫມູ່ຄູ່ມາຮ່ວມປະມານຮ້ອຍຄົນ.



## 4. ຜ່ານມໍລະສຸມ ສູ່ເສັ້ນທາງຊີວິດໃຫມ່

ມໍລະສຸມການເມືອງ ທີ່ພິກປື້ນປະຫວັດສາດລາວ ເມື່ອປີ1975 ເປັນຜົນໃຫ້ຫລາຍຊີວິດຜັນປ່ຽນໄປ ***ອຸທິນ*** ເລືອກເອົາການຢູ່ ໃນແຜ່ນດິນເກີດ ດ້ວຍຄວາມບໍລິສຸດໃຈ ແລະຈິງໃຈຕໍ່ອຸດົມການ ການເປັນນັກຂຽນເອົາສະຫມັກ ເຂົ້າເປັນພະນັກງານກົມພິມຈໍາຫນ່າຍ ໃນຖານະ ນັກຂຽນເລື່ອງສັ້ນ ຮັບໃຊ້ແນວທາງການເມືອງຂອງພັກ ແລະລັດ ຄືກັບນັກຂຽນຄົນອື່ນໆອີກຫລາຍຄົນ. ບໍ່ມີໃຜຢາກເຊື່ອ ເມື່ອເລື່ອງສັ້ນ ຂອງ***ອຸທິນ*** ເກືອບທຸກເລື່ອງ ຜ່ານການເລືອກເຟັ້ນຂອງກໍາມະການຜູ້ເຂັ້ມງວດ ພາຍໃນກົມ ແລະໄດ້ພິມ ອອກຈໍາຫນ່າຍໃນເວລາຕໍ່ມາ ເຊັ່ນ ໂຮມເລື່ອງສັ້ນ ຊື່: **ງານບ້ານເກີດ** ປີ 1977 (ຮ່ວມກັບນັກຂຽນອື່ນໆ) **ຕາເວັນຂຶ້ນທີ່ດອນນາງ** (ຫລາຍຄົນຮ່ວມກັນ, 1978), ເລື່ອງສັ້ນສໍາລັບເຍົາວະຊົນຊຸດ: **ປາຄໍ່ໂລພາ** 1979, ຕໍ່ມາຫລາຍເລື່ອງໃນຊຸດນີ້ ໄດ້ກາຍເປັນປື້ມປະກອບຮູບ ແລະຈັດພິມຫລາຍຄັ້ງ ຈົນເທົ້າເຖິງປັດຈຸບັນ ແລະໄດ້ຮັບເລືອກໄປແປເປັນພາສາໄທໃນປີ1989 ໃນຊື່ວ່າ "ປາຊ່ອນໂລບມາກ", ນອກນີ້ກໍມີເລື່ອງຈິງຄົນແທ້ຊຸດ **ສຽງກ້ອງ ຂອງລັດທິ ວິຣະຊົນ**, 1979 ແລະໂຮມເລື່ອງສັ້ນຊື່ **ຍິ້ມນັ້ນ** ປີ1980. ໃນປີ 1979 ທາງກະຊວງຖະແຫລງຂ່າວ ແລະວັດທະນະທໍາ ພາຍໃຕ້ການຊີ້ນໍາ ຂອງມື້ລາງ ທ່ານ***ສີຊະນະສີສານ*** ອອກດໍາລັດສ້າງຕັ້ງວາລະສານລາຍເດືອນ ເພື່ອໃຫ້ເປັນເວທີ ສົ່ງເສີມ ສິລະປະ ແລະວັນນະຄະດີລາວ ຂຶ້ນສະບັບນຶ່ງໂດຍໃສ່ຊື່ວ່າ **ວັນນະສິນ** ແລະໃຫ້ຂຶ້ນກັບກົມພິມຈໍາຫນ່າຍເຊິ່ງມີ ທ່ານ ***ສຸວັນທອນ ບຸພານຸວົງ*** ເປັນຫົວຫນ້າບັນນາທິການນັ້ນ ***ອຸທິນ ບຸນຍາວົງ*** ກໍເປັນຜູ້ນຶ່ງທີ່ໄດ້ ຮັບເລືອກເຂົ້າຢູ່ໃນຄະນະຮັບຜິດຊອບຮ່ວມກັບເອື້ອຍ ***ດາຣາ ກັນລະຍາ. ອຸທິນ*** ເປັນຄະນະບັນນາທິການ "ວັນນະສິນ" ຢູ່ເຖິງປີ 1981ລະຍະນີ້ເອົາ ຈະມີບົດຂຽນ ບົດກອນອິດສະລະ ເລື່ອງສໍາລັບເດັກ ພິມອອກເປັນປະຈໍາ. ປະມານກາງປີ1981 (ເດືອນພຶດສະພາ) ***ອຸທິນ*** ໄດ້ຮັບຂໍ້ສະເຫນີ ຈາກສໍາ

ນັກພິມກ້າວໜ້າ ແຫ່ງກຸງມົດສະຄວາ ນະຄອນຫລວງ ອະດີດສະຫະພາບໂຊວຽດ ໄປຮັບຕຳແໜ່ງບັນນາທິການພາສາລາວ ແລະ ນັກແປປະຈຳສຳນັກພິມ. ດ້ວຍວ່າທາງສຳນັກພິມ ຕ້ອງການຜູ້ແປ ສອງຄົນ **ອຸທິນ** ຈຶ່ງສະເໜີເອົາຂ້ອຍ (***ດວງເດືອນ***) ເຊິ່ງເວລານັ້ນ ສອນຢູ່ວິທະຍາໄລ ວຽງຈັນ ໄປນຳ. ເມື່ອຜ່ານການທົດສອບ ຕາມເງື່ອນໄຂ ທີ່ທາງສຳນັກພິມວາງ ໄວ້ແລ້ວ ພວກເຮົາກໍເດີນທາງໄປຢູ່ກຸງມົດສະຄວາ ເມື່ອເດືອນພຶດສະພາ ປີ1981 ແລະຢູ່ຈົນເຖິງເດືອນມີນາ 1985 ຈຶ່ງໄດ້ກັບຄືນມາປະຈຳການ ຢູ່ ວຽງຈັນ. ຕະຫລອດເວລາ ຢູ່ກຸງມົດສະຄວານີ້ ພວກເຮົາໄດ້ຮູ້ຈັກມັກຄຸ້ນ ກັບຫລາຍຄົນ ທັງທີ່ເປັນພະນັກງານ ໄປຫັດສະນະສຶກສາຊົ່ວຄາວ ທັງນັກສຶກສາທີ່ເປັນລູກຫລານ ຍາດພີ່ນ້ອງ ທີ່ໄດ້ທຶນໄປຮຽນ ລະຍະຍາວ, ພວກ ເຮົາໄດ້ຕ້ອນຮັບບາງທ່ານ, ໃຫ້ບໍລິການແລະຄວາມສະດວກ ຕາມຄວາມສາມາດ. ພວກນັກສຶກສາຫລາຍຄົນກາຍເປັນຜູ້ສະໜິດ ຮັກແພງກັນ, ສືບຕໍ່ພົວພັນຊ່ອຍເຫລືອກັນ, ບາງຄົນກັບມາ ໄດ້ຮັບໜ້າທີ່ວຽກງານສຳຄັນ ກໍຫ່າງເຫີນກັນໄປ ເມື່ອພົບພໍ້ກັນ ກໍທັກທາຍປາໄສຕາມມາລະຍາດສັງຄົມ ຂ້ອຍເອງບໍ່ຄ່ອຍຈົດຈຳຊື່ສຽງຂອງບຸກຄົນເຫລົ່ານັ້ນໄດ້ດີເທົ່າ**ອຸທິນ** ເພາະເຂົາຈະບັນທຶກລະອຽດທຸກຢ່າງໄວ້ ເຊັ່ນ ຊື່ເຕັມ ບ່ອນຮຽນ ກ້າເປັນລູກຫລານຍາດພີ່ນ້ອງ ກໍ





ຕື່ມຊື່ພໍ່ ຊື່ແມ່ໃສ່ອີກ ດັ່ງນັ້ນ ຈຶ່ງມີຫລາຍຄັ້ງ ທີ່ພົບວ່າ ແມ່ນລູກຫລານຕົນເອງ. ເລື່ອງນີ້ ນັບວ່າເປັນປະໂຫຍດຫລາຍ ເພາະເຮັດໃຫ້ຈື່ຈຳຄົນ ແລະເລື່ອງລາວທີ່ເກີດຂຶ້ນໄດ້ດີ. ສຳລັບພວກນັກສຶກສາ ທີ່ມາຈາກຕ່າງແຂວງນັ້ນ ກໍໄດ້ແວ່ພັກເຊົາທີ່ເຮືອນ ຂອງພວກເຮົາຢ່າງເປັນກັນເອງ. ຫລາຍຄັ້ງພວກເຮົາກໍໄດ້ອາໄສ ພວກນ້ອງນັກສຶກສາ ເຊັ່ນເວລາຕ້ອງໃຊ້ພາສາລັດເຊຍຫລາຍໆ (ເພາະພວກເຮົາໄດ້ພາສາລັດເຊຍ ພໍແຕ່ໄປຊື້ຂອງກິນປະຈຳວັນເທົ່ານັ້ນ) ຫລືເວລາມີວຽກອອກໄປກາງຄືນ ກໍຕ້ອງອາໄສພວກນັກສຶກສາມາດູແລລູກໃຫ້. ສ່ວນຄະນະຜູ້ແທນທີ່ຜ່ານມາ ກໍມັກຈະມີຂອງກິນລາວໆມາຝາກມາຕ້ອນ ເວລາມາຊຸມເຂົ້າກັນ.

ການເຮັດວຽກຢູ່ ມົດສະຄວາ ສີ່ປີ ເຮັດໃຫ້ ***ອຸທິນ*** ມີປະສົບການດ້ານການແປບົດຂຽນປັດຊະຍາ ສັງຄົມ ການເມືອງ ແລະວັນນະຄະດີຫລາຍຂຶ້ນ ເຖິງຈະບໍ່ຮູ້ພາສາລັດເຊຍດີ ແຕ່ອາໄສ ຄວາມເລິກເຊິ່ງໃນພາສາຝຣັ່ງ ແລະອັງກິດ ແລະຄວາມຊຳນານ ໃນການສ້າງປະໂຫຍກ ພາສາລາວໃຫ້ເປັນທີ່ເຂົ້າໃຈງ່າຍ ***ອຸທິນ*** ຈຶ່ງໄດ້ຮັບຄວາມໄວ້ວາງໃຈ ຈາກເພື່ອນຮ່ວມງານທັງລາວ ແລະຕ່າງປະເທດ ເປັນຢ່າງດີ.

ເມື່ອກັບມາຈາກມົດສະຄວາ ເດືອນມີນາ1985 ກໍຊັບຊ້ອນເຂົ້າສຳນັກພິມຈຳຫນ່າຍ ແລະໄດ້ຮັບຕຳແຫນ່ງເປັນຜູ້ຮັບຜິດຊອບບັນນາທິການຕ່າງປະເທດ, ວຽກງານສ່ວນໃຫຍ່ລະຍະນີ້ ເປັນການກວດແກ້ບົດແປຂອງຜູ້ອື່ນໆ ເພື່ອຈັດພິມເປັນເຫລັ້ມ. ມາຮອດປີ 1990 ທາງ

ກະຊວງໄດ້ສ້າງຕັ້ງ ກົມວັນນະຄະດີຂຶ້ນ ***ອຸທິນ*** ໄດ້ຊັບຊ້ອນມາເປັນຮອງຫົວໜ້າກົມ, ລະຍະນີ້ ໄດ້ແປ ເລື່ອງສັ້ນລ້ຳສະໄໝຍີ່ປຸ່ນ ຊື່ **ຕຳນານດາວປະຫລາດ** ແລະຈັດພິມໂດຍ ກົມ ວັນະຄະດີ ດ້ວຍທຶນອຸປະກຳຂອງສະມາຄົມ **ສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງປະເທດຍີ່ປຸ່ນ** (ASPB) ຈຳນວນ ສອງໝື່ນຫົວ (20.000) ເພື່ອແຈກ ຢາຍລ້າທົ່ວປະເທດ. ຜົນງານອັນສຳຄັນໃນລະຍະນີ້ ແມ່ນເລື່ອງສັ້ນ ສິບ ກວ່າເລື່ອງທີ່ ***ອຸທິນ*** ຂຽນຈາກປະສົບການໃໝ່ໆ ເກືອບທຸກເລື່ອງພິມ ອອກໃນໜ້າ ວາລະສານ **ວັນນະສິນ, ໜຸ່ມລາວ** ... ຈາກນັ້ນຈຶ່ງໂຮມເຫລັ້ມ ໂດຍໃສ່ຊື່ວ່າ "**ແພງແມ່**" ມີທັງໝົດ 12 ເລື່ອງ. ເລື່ອງສັ້ນຊຸດນີ້ ຂອງ ***ອຸທິນ*** ມີລັກສະນະສາກົນທັນຍຸກທັນສະໄໝ ແລະກ້າຫານພໍສົມຄວນ ເພາະໄດ້ຍົກເອົາເລື່ອງທີ່ພວມເປັນບັນຫາ ມາສະເໜີແບບງ່າຍໆ ຜ່ານຕົວລະຄອນທີ່ເປັນຊາວບ້ານທຳມະດາເຊັ່ນ ເລື່ອງການຕັດໄມ້ທຳລາຍສິ່ງແວດລ້ອມ (**ນົກບິນຂ້າມປາຍຕານ**) ການຮັກສາຄວາສະອາດ ໃນຕົວເມືອງ (**ໝູ່ພໍ່**) ການເສຽສະຫລະເລັກໆນ້ອຍໆ ຕໍ່ສ່ວນໂຮມ (**ປະກອບສ່ວນ**) ການໃຫ້ຄວາມສຳຄັນ ແກ່ພູມປັນຍາຊາວບ້ານ (**ຫມໍເກົ່າ**) ແລະປະເພນີອັນດີງາມ ທີ່ຄວນປະຕິບັດຕໍ່ແມ່ມານຂອງ ຄົນລາວໃນຊົນນະບົດ (**ແພງແມ່**) ແລະ ເລື່ອງທີ່ສະທ້ອນເຖິງ ການພົວພັນ ທີ່ມີມະນຸດສະທຳ (**ແຮງເສຽສະຫລະ**), ເວົ້າລວມ ເລື່ອງສັ້ນຂອງ ***ອຸທິນ*** ຊຸດນີ້ມີມາດຕະການສູງ ບໍ່ວ່າໃນແງ່ປັດຊະຍາ ຄວາມຄິດ ຫົວເລື່ອງທັນຍຸກສະໄໝພາສາງ່າຍດາຍ. ໃນປີ 1992 ເລື່ອງສັ້ນຊຸດນີ້ກໍໄດ້ຮັບ ການແປ ເປັນພາສາໄທ ແລະພິມເປັນເຫລັ້ມ ຈຳໜ່າຍໃນປະເທດໄທ ນັບເປັນຜົນງານອັນທີສອງຂອງ ***ອຸທິນ*** ທີ່ໄດ້ຮັບເລືອກໄປແປ (ເຫລັ້ມທີນຶ່ງແມ່ນຊຸດປາຄໍ່ໂລພາ, ຈັດພິມໂດຍ ມູນນິທິສະກຽນ ໂກເສດ ນາຄະປະທີບ ປີ1988). ປຶ້ມໂຮມເລື່ອງສັ້ນຊຸດນີ້ມີຊື່ໃນພສາໄທວ່າ "**ເມື່ອແມ່ຈາກໄປ**" ແລະທາງການສຶກສາຂອງໄທ ໄດ້ຈັດເອົາເປັນປຶ້ມອ່ານນອກຫລັກສູດ ໃນລະດັບ



งานเขียนแนวมนุษยธรรม ที่บรรลุขีดขั้นความเป็นศิลปะ "ลาว คำหอม" คำนำ

ມັດທະຍົມ. ທ່ານ ***ຄຳສິງ ສິນອກ (ລາວຄຳຫອມ)*** ສິລະປິນແຫ່ງຊາດໄທ ສາຂາ ວັນນະກຳ ເຊິ່ງຂຽນຄຳນຳໃຫ້ປື້ມ ເວົ້າຕອນນຶ່ງວ່າ "ຜູ້ປະພັນໄດ້ສະແດງສີມືຂອງເຂົາ ຢ່າງເຕັມພິກັດ ຢ່າງເອົ້າ ເຖິງທຳມະຊາດທາດແທ້ ແລະອາລົມຂອງຕົວລະຄອນ ກໍໄດ້ວ່າ ເປັນວັນນະກຳຮ່ວມສະໄໝ ທີ່ບັນລຸຂັ້ນຄວາມເປັນສິລະປະ ຊະນິດທີ່ຈະພົບໄດ້ ບໍ່ເລື້ອຍປານໃດ..." ສ່ວນທ່ານ ***ອາຈິນ ປັນຈະພັນ*** ສິນລະປິນແຫ່ງຊາດ ສາຂາວັນນະກຳ ຮຸ່ນອາວຸໂສອີກຄົນນຶ່ງ ຂອງໄທ ກໍກ່າວໄວ້ໃນປົກປື້ມວ່າ "ຂ້າພະເຈົ້າ ຂໍຮັບປະກັນວ່າ ເປັນເລື່ອງສັ້ນທີ່ສົມບູນ ເຈາະຄຸນນະທຳ ແລະມະນຸດສະທຳ ຂ້າພະເຈົ້າຂໍກ່າວວ່າ ເປັນເລື່ອງທີ່ຝຣັ່ງ ຈະແປເປັນພາສາອັງກິດ ຫລື ຝຣັ່ງເສດ ໃຫ້ອ່ານກັນໃນລະດັບອິນເຕີໄດ້ເລີຍ. ນັກຂຽນລາວສະໄໝໃໝ່ເກັ່ງຫລາຍ ໃຜຕ້ອງການອ່ານເລື່ອງສັ້ນທີ່ດີ ຕ້ອງອ່ານ "ທ່ານຜູ້ນີ້ ຄາດຄະເນແນວນິຍົມ ຂອງນັກອ່ານຕາເວັນຕົກ ໄດ້ຢ່າງຖືກຕ້ອງ ເພາະເມື່ອ ***ອຸທິນ*** ໄດ້ຮັບ ເຊີນໄປປາກະກະຖາ ຢູ່ມະຫາວິທະຍາໄລ **ວິລຽມແມດ ຣັດອໍເຣກັນ** ສະຫະລັດອາເມລິກາ ໃນເລື່ອງວັນນະຄະດີສະໄໝໃໝ່ຂອງລາວ ແລະອາຈານສອນວັນນະຄະດີອາຊີຕາເວັນອອກ ຜູ້ຮັບຜິດຊອບຈັດຕັ້ງ ການສະແດງປາກະກະຖາ ໄດ້ອ່ານເລື່ອງ ***ໝູ່ພໍ່*** ທີ່ແປເປັນພາສາອັງກິດ ແລະແຈກຢາຍເປັນຄູ່ມືໃຫ້ນັກສຶກສາ ກໍສະແດງຄວາມສົນໃຈ ແລະບອກວ່າ ເປັນຫົວຂໍ້ທີ່ທັນສະໄໝ ໃຊ້ໄດ້ກັບ

ທຸກປະເທດ. ກ່ອນຫນ້ານີ້ ນາງ ***ມິນຟອງ ໂຮ*** *(Minfong Ho)* ນັກຂຽນຊາວສິງກະໂປ ຜູ້ຂຽນເລື່ອງ ສຳລັບເຍົາວະຊົນ ເປັນພາສາອັງກິດ ໄດ້ບັນນາທິການເລື່ອງ *ນົກບິນຂ້າມປາຍຕາບ* **(Just a pair of birds)** ທີ່ແປເປັນພາສາອັງກິດ ແລະພິມຄູ່ກັບພາສາ ລາວຢູ່ໃນປື້ມ "**ແພງແມ່**" ແລ້ວ ແລະນາງກໍບອກວ່າ ເປັນເລື່ອງທີ່ ທັນສະໄຫມ ແລະແນະນຳວ່າ ຄວນສືບຕໍ່ແປເລື່ອງອື່ນໆອີກ ເພື່ອຫາວິທີ ນຳສະເຫນີໃນລະດັບສາກົນ. ເກືອບສິບປີຕໍ່ມາ ຄວາມຄິດດັ່ງກ່າວຈຶ່ງປາກົດເປັນຈິງ(ເລື່ອງສັ້ນໃນຊຸດ **ແພງແມ່** ແປເປັນພາສາອັງກິດ ພິມອອກຈຳຫນ່າຍ ໃນເດືອນພະຈິກ 1999 ໂດຍສຳນັກພິມ **ວໍຊິງແປຣສ ຢູນິເວີຊິຕີ້** ສະຫະລັດອາເມລິກາ, ເວລານັ້ນ **ອຸທິນ** ເຈັບຫນັກແລ້ວ). ສ່ວນພາສາ ຝຣັ່ງສ໌ນັ້ນ ທາງສຳນັກພິມ **Serpent à plumes** ກໍໄດ້ມາຕິດຕໍ່ເອົາບາງເລື່ອງໄປແປ ແລະພິມອອກໃນວາລະສານລາຍໄຕມາດ ຂອງເຂົາເຈົ້າ ໃນປີ 1995 ສອງເລື່ອງ ຄືເລື່ອງ ***ຫມູ່ພໍ່ ແລະ ແພງແມ່.***

## *5. ຊີວິດນັກຂຽນອິດສະລະ*

ລະຫວ່າງກາງປີ 1992, ຂ້ອຍໄດ້ຮັບເຊີນໄປສອນພາສາລາວພາກລະດູຮ້ອນ ທີ່ຈັດໂດຍ ສະມາພັນ ມະຫາວິທະຍາໄລ ອາເມລິກາ ທີ່ເອີ້ນກັນວ່າ ຊີອາຊີ **(SEASSI : Southeast Asia Summer Studies Institute )** ເຊິ່ງສົກປີ 92-93 ນັ້ນ ຈັດຢູ່ມະຫາວິທະຍາໄລວໍຊິງຕັນ ເມືອງຊີອາເຕີ້ນ. ພ້ອມດຽວກັນນີ້ ທາງມະຫາວິທະຍາໄລ ໄດ້ຕິດຕໍ່ຂໍເຊີນ ***ອຸທິນ*** ໃນນາມ ນັກຂຽນ ໄປທັດສະນະສຶກສາ ແລະສະແດງ ປາກະກະຖາກ່ຽວກັບ ວັນນະຄະດີລາວ ຕາມມະຫາວິທະຍາໄລຕ່າງໆ, ພວກເຮົາເຫັນວ່າ ວຽກງານນີ້ຫນ້າສົນໃຈ ທ້າທາຍ ຄວາມສາມາດ ທັງເປັນກຽດຢ່າງສູງ ແລະເປັນໂອກາດອັນດີ ທີ່ຈະໄດ້ເຜີຍແຜ່ພາສາ ວັນນະຄະດີລາວແນວໃຫມ່ໆໃຫ້ນັກວິຊາການຕາເວັນຕົກໄດ້ຮັບຮູ້. ***ອຸທິນ***

ຈຶ່ງຂໍລາພັກລັດຖະການສາມເດືອນ ເພື່ອໄປຕາມຄຳເຊີນນີ້. ເມື່ອສອນໝົດພາກລະດູຮ້ອນປີ 1992 ແລ້ວທາງໂຄງການ ສ້າງຫລັກສູດ ພາສາລາວ ໄດ້ສະເໜີໃຫ້ທີນພວກເຮົາຢູ່ຕໍ່ ເພື່ອປັບປຸງ ແລະແຕ່ງບົດສອນພາສາລາວໃຫ້ສົມບູນຕື່ມປີນຶ່ງ ເຊິ່ງພວກເຮົາກໍໄດ້ຕົກລົງ ເພາະໂອກາດທີ່ຈະແຕ່ງ ແລະຂຽນປຶ້ມສອນພາສາລາວ ອອກມານີ້ ບໍ່ແມ່ນຈະຫາໄດ້ງ່າຍໆ. ດັ່ງນັ້ນ ເຖິງຈະຮູ້ວ່າວຽກງານນີ້ຍາກພຽງໃດ ພວກເຮົາກໍຕັດສິນໃຈເຮັດຈົນໄດ້ປຶ້ມສຳລັບສອນສາມລະດັບ ໃຫ້ແກ່ໂຄງການສອນພາສາ ອາຊີຕາເວັນອອກພາກລະດູຮ້ອນນີ້. ລະຍະໃຊ້ຊີວິດເປັນອາຈານຮັບເຊີນຊົ່ວຄາວ ແລະແຕ່ງຫລັກສູດສຳລັບໃຊ້ສອນໃນໂຄງການ ຢູ່ມະຫາວິທະໄລວໍຊິງຕັນ ທີ່ນະຄອນຊີອາເຕີ້ນນີ້ ກໍໄດ້ມີເຫດການທີ່ບໍ່ຄາດຄິດເກີດຂຶ້ນກັບພວກເຮົາ. ເລື່ອງມີຢູ່ວ່າ ຢູ່ນະຄອນຊີອາເຕີ້ນນີ້ ມີສັງຄົມ ຄົນລາວ ທີ່ສຳຄັນຫລາຍເຕີບ ສຳລັບພາກຕາເວັນຕົກ ຂອງສະຫະລັດ ໂດຍສະເພາະແລ້ວ ໃນນັ້ນກໍມີກຸ່ມ ຕໍ່ຕ້ານ "**ລາວແດງ**" ຫລື ຄົນລາວທຸກຄົນທີ່ໄປຈາກວຽງຈັນ ສ..ປ.ປ. ລາວ. ໃນຖານະເປັນອາຈານສອນ ຢູ່ມະຫາວິທະຍາໄລແຫ່ງນີ້ ຈຶ່ງມີກຸ່ມນັກສຶກສາ ລາວອາເມລິກາ ຈຳນວນນຶ່ງທີ່ຮຽນຢູ່ນີ້ ເຂົ້າມາພົວພັນທຳຄວາມຮູ້ຈັກ ແລະຮັກແພງ ກັບພວກເຮົາ ບາງຄົນກໍເປັນລູກຫລານ ຍາດພີ່ນ້ອງ ພໍ່ແມ່ ບອກໃຫ້ມາຢາມ ບາງກໍເປັນລູກຫລານຮຸ່ນອ້າຍເອື້ອຍ ໝູ່ຄູ່ເກົ່າແກ່ ດັ່ງນັ້ນກໍເລີຍເກີດຄວາມຊ່າລືໄປ ວ່າອາຈານພາສາລາວສອງຜົວເມຍ ຊື່ ***ອຸທິນ ແລະ ດວງເດືອນ ບຸນຍາວົງ*** ນັກໂຄສະນາກອມມູຍນິດ ວຽງຈັນ ພວມຍຸແຍ່ສ້າງຄວາມແຕກແຍກໃນໝູ່ນັກສຶກສາລາວອາເມລິກາ ແຫ່ງມະຫາວິທະຍາໄລ ວໍຊິງຕັນ. ກຸ່ມຕໍ່ຕ້ານຫົວຮຸນແຮງ ລົງທຶນ ຂຽນບົດຄວາມອອກໃນໜ້າໜັງສືພິມພາສາອັງກິດ ແຕ່ງເລື່ອງໃຫ້ພວກເຮົາ ວ່າເປັນຜູ້ມີບົດບາດ ສ້າງຄວາມປັ່ນປ່ວນໃຫ້ ສັງຄົມອັນສະຫງົບສຸກ ຂອງຊາວລາວອົບພະຍົບ ຢູ່ອາເມລິກາ. ໂຊກດີວ່າພວກເຮົາມີໝູ່ເພື່ອນ ຍາດ

ພີ່ນ້ອງ ທີ່ຮູ້ຄວາມຈິງ ແລະຮູ້ຈັກພວກເຮົາວ່າມາໃນກຖານະໃດແທ້ ພວກເພິ່ນໄດ້ບອກຄວາມຈິງ ແກ່ຜູ້ອື່ນໆໃຫ້ຊາບຕໍ່ໆກັນໄປ ແຕ່ການດ່າວ່າໂຈມຕີ ກໍບໍ່ຍຸຕິໄປງ່າຍໆ ພວກເຮົາຈຶ່ງຕັດສິນໃຈນໍາເອົາເລື່ອງສະເໜີຕໍ່ທາງມະຫາວິທະຍາໄລ ໃນກຖານະເປັນແຂກ ທີ່ທາງມະຫາ ວິທະຍາໄລເຊີນມາ ເຫດການອັນເປັນຕາຫົວນີ້ຈຶ່ງກິກລະງັບໄປ.

ມາຮອດເດືອນກັນຍາປີ 1993 ພວກເຮົາ ກໍເດີນທາງກັບມາວຽງຈັນ ຢ່າງຮຽບຮ້ອຍ ຍ້ອນລາພັກໄປກາຍສາມເດືອນ ***ອຸທິນ*** ຈຶ່ງຂໍລາອອກຈາກວຽກລັດຖະການເລີຍ ແລະຫັນມາປະກອບທຸລະກິດເອກະຊົນ ດ້ວຍການຕັ້ງໂຮງພິມນ້ອຍໆຂຶ້ນບ່ອນນຶ່ງ ຊື່ວ່າ **ໄຜ່ໜາມ** ກັບຄອບຄົວ ແລະພີ່ນ້ອງ ໃນລະຍະນີ້ ກໍມີທັງຂຽນເລື່ອງສັ້ນ ແປນິທານ ຂຽນນິທານ ຮຽບຮຽງນິທານສໍາລັບເດັກ ບາງຄັ້ງກໍຮັບເຝິກອົບຮົມ ແລະສອນພາສາລາວ ໃຫ້ທັງຄົນລາວ ແລະຕ່າງປະເທດ ລະຍະນຶ່ງໄດ້ຮັບວຽກ ເປັນຜູ່ຊ່ຽວຊານສ້າງຄູ່ມືການສອນ ເລື່ອງອະນາໄມ ໃນລະດັບປະຖົມໃຫ້ກອງທຶນ ສະຫະປະຊາຊາດເພື່ອແມ່ ແລະເດັກ (ອຸຍນິເຊັບ) ແລະມີຜົນງານພິມອອກ ເປັນຊຸດລະຄອນຫລິ້ນໃນຫ້ອງຮຽນ.

## 6. ຮັບເຄາະແທນທຸກຄົນ

ກ້າວ່າການໄດ້ໄປໃຊ້ຊີວິດຢູ່ອາເມລິກາລະຍະນຶ່ງ ພ້ອມທັງຄອບຄົວ ລູກໆໄດ້ຮຽນໜັງສື ແລະຕົນເອງ ກໍໄດ້ປະສົບການ ເປັນໂຊກດີອັນນຶ່ງໃນຊີວິດແລ້ວ ເຫດການທີ່ເກີດຂຶ້ນຕໍ່ມາ ກໍຄົງເປັນເຄາະກໍາ ທີ່ເປັນຂອງຄູ່ກັບໂຊກເຊິ່ງ ຄົນເຮົາມັກຈະຕ້ອງປະເຊີນໜ້າ ກັບມັນຢ່າງຫລີກບໍ່ພົ້ນ ໃນຂະນະທີ່ ***ອຸທິນ*** ມັກດໍາເນີນຊີວິດແບບງ່າຍໆງຽບໆ ບໍ່ມັກອອກສັງຄົມ ໄປທ່ຽວຫລິ້ນ ຫລື ກິນ ດື່ມຊຸມແຊວນັ້ນ ຊາຕາຊີວິດ ຂອງເຂົາກໍຫາກມີເລື່ອງຕື່ນເຕັ້ນຕົກໃຈຢູ່ບໍ່ແລ້ວ. ເມື່ອກັບຈາກອາເມລິກາ ໄດ້ສາມເດືອນ ຍາດພີ່ນ້ອງກໍກະກຽມເຮັດບຸນກອງບວດ ທານຫາຍາອາ

***ສະຫລິດ ເຈົ້າຂຽວ*** ຜູ້ປຽບສະເຫມືອນແມ່ທີ່ສອງຂອງ ***ອຸທິນ*** ຄອບຄົວພວກເຮົາເປັນເຈົ້າສັດທາ ຕັ້ງກອງບວດ ຮ່ວມກັບຍາດພີ່ນ້ອງອື່ນໆຢູ່ເຮືອນຂອງ ຍາອາ ***ສະຫລິດ*** ທີ່ບ້ານຂຸນຕາ ມ. ສີໂຄດຕະບອງ ຊຶ່ງເປັນເຮືອນທີ່ ***ອຸທິນ*** ເຄີຍຢູ່ມາແຕ່ນ້ອຍຈົນໃຫຍ່ນັ້ນເອງ. ໃນມື້ບຸນມີຍາດພີ່ນ້ອງຫມູ່ຄູ່ມາຮ່ວມຢ່າງຫລວງຫລາຍ ນັບວ່າເປັນປາງບຸນໃຫຍ່ຂອງຄອບຄົວ ເພາະຍາອາ***ສະຫລິດ*** ເປັນຮົ່ມໂພຮົ່ມໄຊ ສຳລັບລູກຫລານ ຍາດພີ່ນ້ອງທຸກຄົນ, ແລະແລ້ວ ເຫດການທີ່ບໍ່ມີໃຜຄາດຄິດກໍອຸບັດຂື້ນ. ວັນອາທິດ ເວລາ ປະມານແປດໂມງເຊົ້າ ໃນຂະນະທີ່ພວມຕັກບາດທານເຄື່ອງຢູ່ນັ້ນ ໄມ້ຂາງເຮືອນຫ້ອງຕັ້ງໂຕ໊ະຕັກບາດເບື້ອງນຶ່ງກໍຫລຸດອອກຈາກຫົວເສົາ ເຮັດໃຫ້ພື້ນເຮືອນດ້ານຕິດຝາຍຸບອຽງລົງໃນພິບຕາດຽວ, ສຽງດັງຮື້ມ ຄ້າຍໆລົດເຫຫີນຊາຍ. ໃນຫ້ອງຕັກບາດມີຄົນປະມານຫ້າສິບກວ່າຄົນສ່ວນໃຫຍ່ແມ່ນແມ່ເກົ້າແມ່ນາຍ ທີ່ຕັກບາດແລ້ວນັ່ງຢູ່ ຜູ້ພວມຢືນຕັກຢູ່ກໍມີ ແລະ***ອຸທິນ*** ເປັນຜູ້ດູແລຄວາມຮຽບຮ້ອຍຂອງໂຕ໊ະ ເຂົາຢືນຢູ່ຕິດໆກັບໂຕ໊ະ ຄອຍແປງກົງໃສ່ເຄື່ອງຕັກບາດ. ເວລາພື້ນເຮືອນພັງລົງນັ້ນ ໂຕ໊ະຕັກບາດ ເຊິ່ງເປັນຕູ້ຍາວໆວາງຕິດກັບຝາເຮືອນຈຶ່ງລົ້ມພິກລົງ ພໍມີດສຽງຮື່ມ ກໍມີສຽງຮ້ອງຕົກໃຈຮ້ອງກາມກັນເປັນແຊວໆ ພໍໄດ້ສະຕິວ່າເກີດຫຍັງຂື້ນແລ້ວ ຂ້ອຍກໍຮ້ອງກາມວ່າ ມີໃຜເປັນຫຍັງບໍ່ ທັງລຸກຂື້ນສ່ອງເບິ່ງ ທ້າມກາງສຽງອຶນລະອຶບນັ້ນມີສຽງຄ່ອຍໆຂອງ ***ອຸທິນ*** ດັງຂື້ນແບບບໍ່ຮ້ອນຮົນວ່າ "ຂາຂ້ອຍຄືຊິຫັກ" ປາກົດວ່າ ດູກຂາ ບ່ອນຂໍ່ຕີນກ້ຳຊ້າຍຂອງ ***ອຸທິນ*** ຫັກເປັນຫລາຍຕ່ອນປານກືກຄ້ອນເຫລັກທຸບແຮງໆ ຫລາຍເທື່ອ. ໂຊກດີ ເສັ້ນເອັນຂະນ່ອງບໍ່ຂາດ ທ່ານຫມໍ ບອກວ່າ ສາມາດປາດໄດ້ ບໍ່ຕ້ອງຕັດຂາ ແຕ່ຕ້ອງປາດໃນທັນທີ. ປະມານບ່າຍສອງໂມງຂອງມື້ນັ້ນ ຄະນະແພດຫມໍ ພະແນກກະດູກ ໂຮງຫມໍມະໂຫສົດ ກໍໄດ້ປາດຂາຕໍ່ກະດູກໃຫ້ ***ອຸທິນ***. ນອນໂຮງຫມໍຢູ່ເດືອນນຶ່ງ ***ອຸທິນ*** ກໍອອກມາຢູ່ບ້ານ ແອບຍ່າງດ້ວຍໄມ້ຄ້ຳຢູ່ຫລາຍ

ເດືອນ ແລະຍ່າງເດື່ອງດັບໆຢູ່ເປັນປີ. ຕະຫລອດເວລາທີ່ນອນພັກຢູ່ໂຮງຫມໍນີ້ ຍາດພີ່ນ້ອງ ຫມູ່ຄູ່ ມາຢ້ຽມຢາມຢູ່ສະເຫມີ ແລະເຂົາກໍມັກເວົ້າສະເຫມີວ່າ "ໂຊກດີທີ່ຂ້ອຍເຈັບຫນັກຜູ້ດຽວແນວນີ້" ເພາະສົມມຸດວ່າມີຄົນອື່ນເຈັບຫນັກ ເຖິງຂັ້ນພິການ ເຂົາເຈົ້າຈະທໍລະມານເທົ່າໃດ ເຮົາກໍຕ້ອງດູແລຊ່ອຍເຫລືອ ເຂົາເຈົ້າຕະຫລອດໄປ ເຫດການຄັ້ງນີ້ ກືວ່າເປັນອຸບັດເຫດຮ້າຍແຮງສົມຄວນ ໂດຍມີຜູ້ຢູ່ໃນເຫດການຫລາຍສິບຄົນ ແລະສາມາດ ມີຜູ້ບາດເຈັບ ຫລາຍກວ່ານີ້ໄດ້ ແຕ່ຫນ້າ ອັດສະຈັນບໍ່ມີໃຜເຈັບຫນັກ ນອກຈາກ ***ອຸທິນ*** ຄົນດຽວ. ***ອຸທິນ*** ມັກຈະບອກກັບທຸກຄົນອີກວ່າ ດີແລ້ວທີ່ເຂົາເຈັບຂາ ເພາະບໍ່ມັກໄປໃສຢູ່ແລ້ວ ແລະບັດນີ້ກໍຈະໄດ້ພັກຜ່ອນຢູ່ບ້ານອ່ານປຶ້ມ ແລະຂຽນຫນັງສືຢ່າງເຕັມຂີດ. ຂ້ອຍກັບລູກໆມັກເວົ້າຢອກ ***ອຸທິນ*** ວ່າ ເຂົາເປັນຊາຍກະດູກເຫລັກ (an Iron Man) ເພາະບັດນີ້ ດູກຂາ ຂອງເຂົາ ມີທ່ອນເຫລັກ ດາມ ໄວ້ຫລາຍບ່ອນ. ມາ ຮອດປີ 1996 ***ອຸທິນ*** ຈຶ່ງໄປປາດເອົາເຫລັກ ດາມອອກຈາກຂາຢູ່ໂຮງຫມໍ 150 ຕຽງ ໂພນຕ້ອງ, ຂະນະນັ້ນ ມີຄະນະຜູ້ຊ່ຽວຊານຫມໍກະດູກຈາກປະເທດຝຣັ່ງ ມາຊ່ອຍ ເຫລືອການແພດລາວ ***ອຸທິນ*** ກໍເລີຍໄດ້ຮັບການສົງເຄາະນໍາ, ໄດ້ປະມານສາມເດືອນ ຈຶ່ງຄ່ອຍໆຍ່າງທ່ຽງ ເປັນປົກກະຕິ ແຕ່ເວລາຍ່າງຢູ່ດົນ ກໍຈະຮູ້ສຶກເຈັບ. ເມື່ອຍ່າງໄປມາໄດ້ສະດວກ



ແລ້ວ ***ອຸທິນ*** ກໍເຮັດວຽກງານເປັນປົກກະຕິ ແລະເດີນທາງໄປຕ່າງແຂວງເປັນບາງຄັ້ງ ເວລາຮັບວຽກເປັນທີ່ປຶກສາໃຫ້ອົງກອນຕ່າງປະເທດ ແລະໄດ້ສະຫມັກຮັບເລືອກຕັ້ງເປັນຄະນະບໍລິຫານງານຂອງ ສະມາຄົມນັກປະພັນລາວໃນປີ 1997. ໃນລະຍະນີ້ ເຂົາຂຽນບົດຄວາມສັ້ນໆ ກ່ຽວກັບວັດທະນະທຳສັງຄົມ ອອກໃນວາລະສານສຽງແຄນເປັນປະຈຳ..

## 7. ທຳແກຸນແຕ່ງ ແຫລ່ງພຳນັກສຸດທ້າຍ

ຕົ້ນປີ1997ພວກເຮົາຕົກລົງ ມາປຸກເຮືອນແບບບູຮານ ຢູ່ສວນບ້ານໄຮ່ ເພື່ອເຮັດບ່ອນຮັກສາ ແລະວາງສະແດງຜ້າແພບູຮານ ແລະເຄື່ອງໃຊ້ເກົ່າແກ່ອື່ນໆຂອງລາວ. ພວກເຮົາຕັ້ງຊື່ເຮືອນວ່າ "**ທຳແກຸນແຕ່ງ**" ເພາະກືວ່າ ເພື່ອນມິດຍາດພີ່ນ້ອງຫລາຍຄົນ ໄດ້ປະກອບສ່ວນສ້າງຂຶ້ນ ແລະສິ່ງທີ່ປົກປັກຮັກສາໃນນັ້ນ ກໍແມ່ນສົມບັດລວມຂອງຊາດດັ່ງນັ້ນ ຈຶ່ງວ່າ ພະຍາແກຸນແຕ່ງມາໃຫ້ ແລະ***ອຸທິນ*** ເປັນຜູ້ໃສ່ຊື່ສວນວ່າ **ສວນໄຜ່ພັນກໍ** ເພາະພວກເຮົາ ປູກຕົ້ນໄຜ່ຫລາຍ ແລະໂດຍເຈດຕະນາໃຫ້ຄ່ອງກັບປຶ້ມກ່ຽວກັບຜ້າ ຫົວທຳອິດຂອງຂ້ອຍ ທີ່ຊື່**ວ່າ** "**ແພພັນລາຍ**" ເຊິ່ງມີເນື້ອໄນກ່າວເຖິງລິງລາຍໃນຜ້າສະສົມ ຢູ່ທຳ " **ສິບສາຍໄຫມ** " ສະຫະພັນແມ່ຍິງ. ທັງຊື່ **ທຳສິບສາຍໄຫມ** ແລະ ຊື່ປຶ້ມ **ແພພັນລາຍ** ແມ່ນ **ອຸທິນ** ເປັນຜູ້ຕັ້ງໃຫ້. ແລ້ວພວກເຮົາ ກໍມັກຊື່ **ສວນໄຜ່ພັນກໍ** ແລະ **ທຳແກຸນແຕ່ງ** ນີ້ ນຳກັນຫມົດທຸກຄົນ . ລະຍະຫລັງໆມານີ້ ***ອຸທິນ*** ເລີ່ມສົນໃຈສະສົມເຄື່ອງໄມ້ພື້ນເມືອງ ເຊັ່ນ ອານມ້າ ແຢັ່ງຊ້າງ ຄົກມອງ ຄົກມືເຄື່ອງຫນີບອ້ອຍ ເຄື່ອງສີເຂົ້າ ໄກໄມ້... ເວລາລົງໄປເຮັດວຽກຕ່າງແຂວງ ເຫັນຜ້າແພແປກໆກໍຊື້ມາໃຫ້ຂ້ອຍ ຄັ້ງນຶ່ງເມື່ອລົງໄປຈັດຕັ້ງຕະຫລາດນັດເຄື່ອງຈັກສານຊົນເຜົ່າ ທີ່ແຂວງ ເຊກອງ ເຂົາກໍຊື້ ຜ້າກະໂດຜືນໃຫຍ່ ສິ້ນໂລ່ມ ແລະ ເຄື່ອງຈັກສານ ເຊັ່ນ ກະຍັງ ກະແຫລບ ກະພາ... ມາໄວ້ຫລາຍຫນ່ວຍ ທັງ ວາງແຜນວ່າ ມື້ນຶ່ງຈະ ຄົ້ນຄວ້າສະສົມຂໍ້ມູນ



ກ່ຽວກັບ ເຄື່ອງຈັກສານຂອງລາວ ເພື່ອຂຽນເປັນປຶ້ມຈັກຫົວ ແຕ່ແຜນການດັ່ງກ່າວ ພໍພຽງແຕ່ລິເລີ່ມເທົ່ານັ້ນ***ອຸທິນ*** ກໍໄດ້ຮັບການທາບທາມ ຈາກທາງ **ມະຫາວິທະຍາໄລ ເພື່ອການສຶກສາຕ່າງປະເທດ ແຫ່ງໂຕກຽວ** ໃຫ້ໄປສອນພາສາ ວັດທະນະທໍາລາວ ກໍານົດສາມປີ ເຂົາດີໃຈ ແລະຮັບຂໍ້ສະເໜີນີ້ທັນທີ ໂດຍບອກວ່າ ນີ້ຈະເປັນຄັ້ງສຸດທ້າຍ ທີ່ຈະໄປຢູ່ຕ່າງປະເທດ ແຕ່ຄັ້ງນີ້ ຕ່າງຈາກເທື່ອກ່ອນໆ ***ອຸທິນ*** ຈະໄປຢູ່ຜູ້ດຽວ ລູກຂອງພວກເຮົາໃຫຍ່ ແລະພວມຮຽນຢູ່ມະຫາວິທະຍາໄລ ທັງສອງຄົນແລ້ວ ສ່ວນຂ້ອຍກໍເຮັດວຽກ ເປັນທີ່ປຶກສາໃຫ້ໂຄງການນຶ່ງຢູ່ ທັງຕ້ອງດູແລເຮືອນຫໍແກຸນແຕ່ງທີ່ຈັດເປັນບ່ອນ ວາງສະແດງ ຜ້າບູຮານເຄື່ອງຈັກສານແລະສິ່ງ ສະສົມອື່ນໆ ນັ້ນອີກ. ພວກເຮົາຕົກລົງ ກັນວ່າ ເມື່ອໃດຂ້ອຍ





ແລ້ວວຽກ ກັບໂຄງການ ຂ້ອຍຈະໄປຢ້ຽມຢາມ. ***ອຸທິນ*** ເດີນທາງໄປ ຍີ່ປຸ່ນ ເພື່ອສອນພາສາ ວັດທະນະທຳລາວ ຢູ່ **ມະຫາວິທະຍາໄລ ເພື່ອການສຶກສາຕ່າງປະເທດແຫ່ງ ໂຕກຽວ** (Tokyo University of Foreign Studies) ໃນທ້າຍເດືອນເມສາ ປີ 1998 ໂດຍໄດ້ຮັບຕຳແຫນ່ງຮອງສາສະດາຈານ (Associate Professor) ໃນລະຍະສິດສອນຢູ່ນີ້ ເຂົາທັງຄົ້ນຄວ້າຂຽນບົດຄວາມພິມອອກເປັນປະຈຳ ໃນວາລະສານລາຍໄຕມາດ ຂອງມະຫາວິທະຍາໄລ ຮັບເຊີນໄປປາກະກະຖາ ແລກປ່ຽນ ກັບມະຫາວິທະຍາໄລອື່ນໆ ໃນຍີ່ປຸ່ນ, ເລື່ອງສັ້ນ ຈຳນວນນຶ່ງຂອງ ***ອຸທິນ*** ທີ່ນຳໄປສອນທົດລອງ ໃນມະຫາວິທະຍາໄລ ໄດ້ຮັບຄວາມສົນໃຈຈາກນັກສຶກສາ ແລະແປເປັນພາສາຍີ່ປຸ່ນ ພິມອອກໃນວາລະສານ ຂອງມະຫາວິທະຍາໄລ.

## 8. ຄວາມເຈັບປ່ວຍ ທີ່ບໍ່ສາມາດຜ່າຝືນໄດ້

ເຖິງເວລາພັກປະຈຳປີ ລະຫວ່າງ ເດືອນກຸມພາ ເຖິງເມສາ 1999 ***ອຸທິນ*** ເລີ່ມຮູ້ສຶກບໍ່ສະບາຍ ແລະກັບມາ ພັກຜ່ອນຢູ່ລາວ ເມື່ອກັບໄປຍີ່ປຸ່ນ ກໍໄດ້ໄປກວດສຸຂະພາບ ແລະຮັບການ ປິ່ນປົວຕາມອາການທີ່ວ່າ ເປັນຄວາມດັນເລືອດສູງ ເຂົາອົດທົນສືບຕໍ່ສິດສອນຈົນສຸດພາກຮຽນທີ 1 ຂອງປີທີສອງ ເມື່ອຕົ້ນເດືອນ ກໍລະກົດ 1999 ຈາກນັ້ນຈຶ່ງກັບມາວຽງຈັນ ເພື່ອພັກຜ່ອນລະດູຮ້ອນກັບຄອບຄົວ ທີ່ບ້ານສວນໄຜພັນກໍ, ມາຢູ່ໄດ້ ສອງອາທິດ ກໍຮູ້ສຶກບໍ່ສະບາຍຫລາຍ ຂ້ອຍຈຶ່ງພາໄປໂຮງຫມໍແຫ່ງນຶ່ງ ທີ່ເມືອງຫນອງຄາຍ ປະເທດໄທ. ຢູ່ປິ່ນປົວ ໃນໂຮງຫມໍນີ້ສີ່ມື້ ຫມໍບອກວ່າ

ບໍ່ພົບພະຍາດຮ້າຍແຮງ ໃຫ້ຢາມາກິນ ແລະບອກວ່າ ກິນຢາຫມົດແລ້ວ ໃຫ້ກັບໄປກວດເລືອດອີກ ແຕ່ອອກມາຢູ່ເຮືອນໄດ້ສອງມື້ ອາການຍິ່ງຫນັກຫນ່ວງຂຶ້ນ ຂ້ອຍຈຶ່ງພາໄປໂຮງຫມໍບ່ອນໃຫມ່. ເຂົ້າໂຮງຫມໍບ່ອນນີ້ ສອງມື້ ຫມໍກວດພົບວ່າ ***ອຸທິນ*** ເປັນມະເລັງຢູ່ຕັບເບື້ອງຂວາ ຂັ້ນສາມປາຍໆແລ້ວ ແລະບອກວ່າ ຫມົດຫວັງທີ່ຈະປິ່ນປົວໄດ້. ຂ້ອຍເປັນຜູ້ຢູ່ໃກ້ຊິດ ***ອຸທິນ*** ຕະຫລອດເວລາ ບໍ່ຍອມເຊື່ອວ່າຈະຫມົດຫວັງ ແລະບໍ່ຍອມຮັບວ່າ ນີ້ເປັນຄວາມຈິງ ຈຶ່ງບໍ່ບອກໃຫ້ ***ອຸທິນ*** ຮູ້ນຳ. ຂ້ອຍເປີກສາກັບຍາດພີ່ນ້ອງຫາວິທີປິ່ນປົວແບບອື່ນໆໄປນຳ. ຍາດພີ່ນ້ອງ ແລະຫມູ່ເພື່ອນ ທີ່ປະເທດໄທຊ່ອຍໃຫ້ ***ອຸທິນ*** ໄດ້ເຂົ້າ ປິ່ນປົວຢູ່ສະຖາບັນມະເລັງທີ່ກຸງເທບ ມາຮອດນີ້ຈຳເປັນໄດ້ເປີດເຜີຍຄວາມຈິງ ແຕ່ທ່ານຫມໍບອກວ່າ ວິທີດຽວທີ່ຈະພໍຍືດເວລາໄດ້ ແມ່ນການປາດອະຫນາດໃຫຍ່ເທົ່ານັ້ນ ແລະແນະນຳວ່າ ຄວນໄປຮັບການປິ່ນປົວທີ່ປະເທດຍີ່ປຸ່ນ. ມາເຖິງຂັ້ນນີ້ ***ອຸທິນ*** ຮັບຮູ້ບັນຫາສຸຂະພາບຂອງຕົນແລ້ວ ຮູ້ສຶກຕົກໃຈແລະໃຈທໍ້ຖອຍ ຈົນຂ້ອຍກັບພີ່ນ້ອງຜູ້ອື່ນໆ ຮູ້ສຶກກັງວົນ. ນັບວ່າເປັນຄັ້ງທຳອິດທີ່ຂ້ອຍໄດ້ຍິນສຽງສະອື້ນຈາກລາວ ນັບຕັ້ງແຕ່ຮ່ວມຊີວິດກັນມາຊາວກວ່າປີ. ຂ້ອຍບອກ ***ອຸທິນ*** ວ່າຂ້ອຍເອງ ເສຽໃຈ ແລະເຫລືອໃຈຈົນບໍ່ມີແນວປຽບແລ້ວ ທີ່ລາວເປັນມະເລັງ ແຕ່ຂ້ອຍບໍ່ຕໍ່າຄ້ອຍນ້ອຍໃຈ ຫລືທໍ້ຖອຍ ເພາະເຫັນວ່າຍັງມີຫວັງໃນເມື່ອເຮົາກໍມີເງື່ອນໄຂໄປປິ່ນປົວ ຕ່າງກັບອີກຫລາຍໆຄົນ ທີ່ບໍ່ມີໂອກາດທີ່ຈະໄດ້ປິ່ນປົວຊ້ຳ, ຂ້ອຍຂໍໃຫ້ລາວເຂັ້ມແຂງ ມີກຳລັງໃຈ ແລະ***ອຸທິນ*** ກໍຕໍ່ສູ້ ກັບສະພາບນີ້ດ້ວຍຄວາມກ້າຫານແລະອົດທົນ.

***ອຸທິນ*** ເຂົ້າຮັບການປິ່ນປົວຢູ່ ສູນມະເລັງແຫ່ງຊາດ ທີ່ໂຕກຽວປະເທດຍີ່ປຸ່ນ ເຊິ່ງເປັນສູນການແພດ ທັນສະໄຫມທີ່ສຸດແຫ່ງນຶ່ງໃນໂລກໂດຍໄດ້ຮັບການຊ່ອຍເຫລືອດູແລຈາກຄະນະອາຈານ ພາກວິຊາອາຊີຕາເວັນອອກສຽງໃຕ້ ຂອງມະຫາວິທະຍາໄລເປັນຢ່າງດີ. ກ່ອນຮັບການຜ່າຕັດ ຄະນະແພດອະທິບາຍວ່າ ລະດັບຂະຫຍາຍຕົວຂອງມະເລັງ ຢູ່ໃນຂັ້ນ

ສຸດທ້າຍແລ້ວ ໂຊກດີວ່າ ມັນຍັງຢູ່ແຕ່ຕັບເບື້ອງດຽວກ້າບໍ່ເອົາກ້ອນຊີ້ນຮ້າຍຕ່ອນນີ້ອອກແລ້ວ ອາດຈະມີຊີວິດຢູ່ໄດ້ແຕ່ສອງສາມເດືອນເທົ່ານັ້ນ ການຜ່າຕັດອາດຈະຊ່ອຍຍືດເວລາອອກໄປເຖິງສາມຫາສີ່ປີ ແລ້ວແຕ່ສະພາບຂອງຕັບອີກເບື້ອງນຶ່ງ ຊຶ່ງເວລານີ້ ກໍຍັງບໍ່ແນ່ວ່າ ຈະຖືກຄຸກຄາມຫລືຍັງ ***ອຸທິນ*** ຮັບຮູ້ ແລະຕັດສິນໃຈຮັບການປິ່ນປົວຄັ້ງນີ້ຢ່າງເຕັມໃຈ. ເວລານັ້ນຮ່າງກາຍຊຸດໂຊມຫລາຍ (ຈ່ອຍລົງກວ່າສິບກິໂລ) ແຕ່ພັກຟື້ນໄດ້ສອງອາທິດ ສຸຂະພາບກໍດີຂຶ້ນ ເພາະໄດ້ຮັບຢາ ແລະອາຫານບໍາລຸງທີ່ພຽງພໍ ເມື່ອຄະນະແພດເຫັນວ່າ ແຂງແຮງພໍ ຈຶ່ງຕົກລົງປາດ.

ໃນມື້ວັນທີ 1 ກັນຍາ. ເວລາ 8.00 ໂມງເຊົ້າ ຂອງວັນນັດຫມາຍ ***ອຸທິນ*** ກໍຖືກນໍາຕົວເຂົ້າຫ້ອງປາດ. ໃນເຊົ້າມື້ດຽວກັນນີ້ ເອື້ອຍ ***ສຸດສາຄອນ ພະໄຊຍະວົງ*** (ລູກສາວ ຍາອາ ສະຫລົດ) ທີ່ຢູ່ປະເທດ ອິດສະຕາລີ ກໍມາຮອດ ເຮັດໃຫ້ຂ້ອຍມີກໍາລັງໃຈຂຶ້ນຫລາຍ ເວລານັ້ນຂ້ອຍມີ ອາຈານ ***ເຣໂກະ ຊູຊຸກິ*** ທ່ານ ***ໂນກູຈິ*** (ຄອບຄົວ ຂອງ ***ຈັນທະສອນ*** ) ແລະທ້າວ ***ຣື ສ່ອງ*** ພີ່ນ້ອງຄົນນຶ່ງມາຢູ່ເປັນຫມູ່ ລູກສາວທັງສອງ ຍັງບໍ່ສາມາດເດີນທາງມາໄດ້ ເພາະຢູ່ໃນລະຍະສອບເສັງ. ເວົ້າແທ້ແລ້ວ ***ອຸທິນ*** ບໍ່ຢາກໃຫ້ລູກມາ ເຂົາເປັນຫ່ວງການຮຽນຂອງລູກ ແຕ່ຂ້ອຍກັບລູກ ຕັດສິນໃຈວ່າຄວນມາເບິ່ງແຍງປົວລະບັດເວລາທີ່ພໍ່ຍັງມີຊີວິດນີ້ດີກວ່າ ເພາະກ້າຕາຍແລ້ວ ກໍຈະເຮັດຫຍັງບໍ່ໄດ້ ຂ້ອຍບໍ່ຮູ້ວ່າ ***ອຸທິນ*** ຄິດ ແນວໃດ ເລິກໆແລ້ວລາວອາດຈະຄິດຄືຂ້ອຍ ຫລືຄິດວ່າຕົນເອງຄົງຈະລອດ ຈຶ່ງບໍ່ຈໍາເປັນໃຫ້ລູກມາ. ***ອຸທິນ*** ຮູ້ແລ້ວວ່າເອື້ອຍສາຄອນຈະມາ ລາວດີໃຈຫລາຍ ເພາະເອື້ອຍສາຄອນນີ້ ເຕີບໃຫຍ່ມານໍາກັນມາແຕ່ນ້ອຍ ຊ່ອຍເຫລືອເບິ່ງແຍງກັນ ມາຫ່າງກັນເມື່ອສິບກວ່າປີມານີ້ເອງ ເມື່ອ ***ອຸທິນ*** ເຂົ້າຫ້ອງປາດໄດ້ບໍ່ເຖິງຊົ່ວໂມງ ທ້າວ ***ຣື ສ່ອງ*** ທີ່ໄປຮັບເອື້ອຍ ຢູ່ເດີ່ນຍົນ ກໍມາຮອດ. ພວກເຮົາລໍຖ້າຢູ່ຫ້ອງຮັບແຂກດ້ວຍຄວາມຮູ້ສຶກກັງວົນ ຈົນເວລາຄ້າຍແລງກໍບໍ່ມີວີ່ແວວວ່າການປາດຈະແລ້ວ ຫນ້າຈໍໂທລະທັດ ທີ່ລາຍ

ງານການປາດໃນຫ້ອງຕ່າງໆ ບອກວ່າຍັງພວມປະຕິບັດການຢູ່ ພວກເຮົາຈຶ່ງໄດ້ແຕ່ລໍຄອຍຈົນເຫລືອເປັນກຸ່ມສຸດທ້າຍທີ່ ລໍຄອຍໃນມື້ນັ້ນ ເຖິງເວລາ 7.00 ແລງ ທ່ານໝໍໃຫຍ່ ຜູ້ຮັບຜິດຊອບການປາດ ຈຶ່ງອອກມາເຊີນພວກເຮົາໄປພົບ ແລະບອກວ່າການທີ່ໃຊ້ເວລາຢູ່ດົນ ກໍຍ້ອນພົບວ່າຕັບເບື້ອງຊ້າຍສ່ວນນຶ່ງມີຈຸດນ້ອຍໆແລ້ວ ຈຶ່ງທົດລອງສີດຢາໃສ່ ແຕ່ບໍ່ຮູ້ວ່າຈະໄດ້ຜົນຢ່າງໃດເທື່ອ ຕ້ອງລໍຖ້າອີກລະຍະນຶ່ງກ່ອນ. ທ່ານໝໍ ບອກໃຫ້ພວກເຮົາລໍຖ້າອີກສອງຊົ່ວໂມງ ***ອຸທິນ*** ຈຶ່ງຈະຮູ້ສຶກໂຕ, ພວກເຮົາລໍຖ້າເຖິງເວລາ 11.00 ໂມງກາງຄືນ ຈຶ່ງໄດ້ຮັບອະນຸຍາດໃຫ້ເຂົ້າໄປຢາມ.

***ອຸທິນ*** ພັກຟື້ນຢູ່ສູນມະເລັງແຫ່ງນີ້ ໄດ້ສາມອາທິດ ເພື່ອຟື້ນຟູສຸຂະພາບ ສາມາດຍ່າງອອກກຳລັງໄດ້ເອງ ເຮັດໃຫ້ທຸກຄົນດີໃຈ ລູກສາວທັງສອງ ມາແຕ່ອິດສະຕາລີແລ້ວ ຊ່ອຍກັນດູແລແຕ່ງກິນໃຫ້ພໍ່ ພາພໍ່ຍ່າງອອກກຳລັງ ອ່ານໜັງສືສູ່ຟັງ ແລະອື່ນໆ. ມາເຖິງ ວັນທີ 27 ກັນຍາ ທ່ານໝໍ ອະນຸຍາດໃຫ້ອອກມາພັກຜ່ອນຢູ່ບ້ານ ແລະນັດໃຫ້ກັບຄືນໄປກວດອີກ ໃນນຶ່ງເດືອນຂ້າງໜ້າ. ***ອຸທິນ*** ຕັ້ງໃຈປະຕິບັດຕາມຄຳແນະນຳຂອງແພດ ແລະທາງຄອບຄົວ ລູກເມຽ ຍາດພີ່ນ້ອງທຸກຢ່າງ ເຊັ່ນ ພະຍາຍາມອອກກຳລັງກາຍ ກິນໝາກໄມ້ ແລະຜັກເປັນຕົ້ນຕໍ ບໍ່ກິນເຄັມ ມັນ ຫວານ ບໍ່ກິນຊີ້ນງົວ ໝູ ນອກຈາກປາ ແລະໄກ່ ເລັກນ້ອຍ. ມາເຖິງ ກາງເດືອນພະຈິກ ຈຶ່ງໄດ້ກັບໄປພົບໝໍ ຜູ້ຮັບຜິດຊອບ ທ່ານໝໍບອກວ່າ ສະພາບດີຫລາຍ ແຕ່ເວລານີ້ ຈະແຕະຕ້ອງຕັບອີກເບື້ອງນຶ່ງບໍ່ໄດ້ເທື່ອ ຕ້ອງປ່ອຍໃຫ້ຕັບສ່ວນນີ້ ຕໍ່ສູ້ເຮັດວຽກໄປເບິ່ງລະຍະນຶ່ງກ່ອນ ຈາກນັ້ນຈະໃຊ້ວິທີປິ່ນປົວແບບສີດຢາໄປຂ້າເມັດມະເລັງ ຕາມເສັ້ນເລືອດຝອຍໃນຕັບ ທີ່ເອີ້ນວ່າເຮັດ ອັງຊີໂອກຣາຟີ (Angiography) ເພາະມະເລັງເມັດນ້ອຍໆກະຈາຍຢູ່ໃນເນື້ອຂອງຕັບດ້ານໃນ ຈະປາດ ຫລື ສາຍແສງຂ້າບໍ່ໄດ້ ທ່ານໝໍບອກວ່າ ວິທີການປິ່ນປົວແບບນີ້ ໃຊ້ໄດ້ຜົນດີກວ່າ 80% ໃນຄົນເຈັບທົ່ວໄປ ແລະນັດໃຫ້ກັບມາພົບ ເພື່ອກວດກາອີກ

ໄດ້ປະມານເຄິ່ງຊົ່ວໂມງ ***ອຸທິນ*** ກໍຫມົດກໍາ ພົ້ນຈາກຄວາມເຈັບປວດຢ່າງສະຫງົບ ທ່າມກາງເພື່ອນມິດຜູ້ຮັກແພງ ເອື້ອຍ ອ້າຍ ນ້ອງ ຂອງເຂົາ ແລະຍາດພີ່ນ້ອງ ທີ່ຄິດວ່າຈະມາຢ້ຽມຢາມເຂົາ ເພາະໄດ້ຍິນຂ່າວວ່າບໍ່ສະບາຍ.

***ອຸທິນ*** ຄິດໄວ້ວ່າ ບ້ານສວນໄຜ່ພັນກໍ ຈະເປັນບ່ອນຢູ່ແຫ່ງສຸດທ້າຍຂອງເຂົາ ເປັນບ່ອນພັກຜ່ອນ ຂຽນຫນັງສື ແລະຕ້ອນຮັບຫມູ່ຄູ່ ນັກຂຽນທັງລາວ ແລະຕ່າງປະເທດໃນອະນາຄົດ. ເພາະໃນລະຍະຜ່ານມາຄອບຄົວຂອງພວກເຮົາໂຍກຍ້າຍທີ່ຢູ່ໄປໆມາໆ ຕັ້ງສິບກວ່າເທື່ອ ເພາະບໍ່ມີເຮືອນເປັນຂອງຕົນເອງແດ່ ແລະທັງກໍໄປໃຊ້ຊີວິດສ່ວນນຶ່ງຢູ່ຕ່າງປະເທດແດ່ ເມື່ອໄດ້ສ້າງເຮືອນຫລັງນີ້ ຈຶ່ງຫວັງໃຫ້ເປັນທີ່ຢູ່ຖາວອນ ຂອງພວກເຮົາ ຂ້ອຍຄິດວ່າ ***ອຸທິນ*** ສົມປາຖະຫນາແລ້ວ ເຂົາໄດ້ກັບມາຝັງຈິດວິນຍານ ໄວ້ບ່ອນທີ່ເຂົາສ້າງຂຶ້ນມາ ດ້ວຍນໍ້າເຫື່ອນໍ້າແຮງ ມັນສະຫມອງຂອງເຂົາ.

ນັບຕັ້ງແຕ່ເລີ່ມເຈັບປ່ວຍ ເຖິງວາລະສຸດທ້າຍເປັນເວລາ 10 ເດືອນນີ້ ***ອຸທິນ*** ໄດ້ຕໍ່ສູ້ ຢ່າງກ້າຫານ ບໍ່ທໍ້ຖອຍ ເຖິງຮ່າງກາຍຈະອ່ອນເພຽແຕ່ມັນສະຫມອງຍັງດີ ເຮັດວຽກຊ່ອຍຂ້ອຍໄດ້ຕະຫລອດເວລາ. ເວົ້າໄດ້ວ່າ ເຂົາມີຊີວິດຢູ່ຢ່າງມີຄຸນນະພາບ ອັນນີ້ຄືງເປັນຍ້ອນວ່າ ພວກເຮົາທັງສອງ ໄດ້ຊ່ອຍກັນຫລໍ່ລ້ຽງຄວາມຫວັງໄວ້ ຈົນນາທີສຸດທ້າຍນັ້ນເອງ.

ພິທີສົ່ງສະການ ຈັດຂຶ້ນໃນວັນທີ 4 ກຸມພາ ເວລາ 13.30 ໂມງກົງກັບວັນສຸກ ແຮມ 13 ຄໍ່າ ເດືອນຍີ່ ທີ່ສວນໄຜ່ພັນກໍ ໂດຍມີ ອ້າຍເອື້ອຍນ້ອງ ແລະຄອບຄົວ ລູກຫລານ ຍາດສະຫນິດມິດສະຫາຍ ຜູ້ເຄີຍຮ່ວມງານ ແລະຜູ້ຮູ້ຈັກຮັກແພງ ມາຮ່ວມສົ່ງທາງ ຫລວງຫລາຍພໍສົມຄວນໃນວັນແຫ່ງການຈາກໄປນີ້ ທຸກຄົນທີ່ມາຮ່ວມໄດຮັບຂອງທີ່ລະນຶກ ຄືໄດ້ຮັບແຈກຢາຍປຶ້ມທີ່ເປັນ ຜົນງານອັນຫລ້າສຸດ ຂອງ ***ອຸທິນ*** ເອງ ຄືໂຮມເລື່ອງສັ້ນຍຸກປະຈຸບັນຂອງຍີ່ປຸ່ນ ຊື່ວ່າ **ພະຈັນເທິງຫນ້ານໍ້າ** ແລະ



ມື້ສົ່ງສະການ 4 ກຸມພາ 2000 ສວນໄຜ່ພັນກໍ

ເລື່ອງ ***ສັງສິນໄຊ*** ສະບັບຄຳທຳມະດາ ທີ່ ***ອຸທິນ*** ກືວ່າເປັນບຜົນງານຍ້ຽມຍອດອັນນຶ່ງຂອງເຂົາ ໃນເລື່ອງຮຽບຮຽງນິທານຄຳກອນບູຮານ ອອກເປັນຄຳທຳມະດາສຳລັບເດັກ ນອກນີ້ຍັງມີໜັງສືທຳມະ ທີ່ມີຄຸນຄ່າສູງເຊິ່ງອາຈານ ***ສຸລັກ ສິວະຣັກສ໌*** ຜູ້ເປັນເພື່ອນມິດ ທີ່ນັບຖື ຂອງຄອບຄົວພວກເຮົາ ຈັດສົ່ງມາໃຫ້ແຈກຢາຍ ເປັນການອຸທິດບຸນກຸສົນໄປໃຫ້ ***ອຸທິນ*** ນຳອີກຈຳນວນນຶ່ງ .

ຫລາຍຄົນຕັ້ງບັນຫາວ່າ ***ອຸທິນ*** ເປັນມະເລັງຕັບໄດ້ແນວໃດເພາະເຂົາເປັນຜູ້ລະມັດລະວັງໃນເລື່ອງ ອາຫານການກິນ ທັງບໍ່ມັກກິນ ຂອງດິບແດງ ໂດຍສະເພາະ ໄດ້ເຊົາກິນຊີ້ນແດງ (ງົວ ໝູ ) ມາເປັນເວລາສິບປີແລ້ວ ເຂົາບໍ່ແມ່ນຄົນມັກດື່ມເຫລົ້າ ດູດຢາເລັກນ້ອຍຕອນຍັງໜຸ່ມ ແລະເຊົາດູດມາຊາວກວ່າປີແລ້ວ (ນັບແຕ່ສ້າງຄອບຄົວ ໃນປີ 1976). ໃນທາງການແພດ ຜູ້ຊ່ຽວຊານດ້ານມະເລັງ ອະທິບາຍວ່າມະເລັງ (ຕັບ) ເກີດຈາກຫລາຍສາເຫດເຊັ່ນ ເນື່ອງຈາກການບໍລິໂພກອາຫານ ທີ່ມີສານພິດຕົກຄ້າງຫລາຍ, ກິນອາຫານບໍ່ສົມດູນ (ມັນ ຫວານ ເຄັມ ...)

ສະພາບຈິດໃຈທີ່ຖືກກົດດັນເກີນໄປ, ຈາກການຕິເຊື້ອໄວຣັດບີ ມາແຕ່ເກີດ ຫລື ຈາກເຊື້ອໄຂ້ມາລາເຣຽ ທີ່ໄປລີ້ຢູ່ໃນຕັບດົນນານ, ກ່ອນອື່ນ ຕ້ອງ ເຂົ້າໃຈວ່າມະເລັງ ບໍ່ແມ່ນພະຍາດ ຫລື ໂຣກ ທີ່ມີຕົວນຳເຊື້ອເປັນບັກ ທີເຣຽ ຫລື ໄວຣັສ ຢ່າງໃດຢ່າງນຶ່ງຄືການອັກເສບຫລືຕິດເຊື້ອອື່ນໆ ແຕ່ມະເລັງເປັນອາການຜິດປົກກະຕິ ຂອງກຸ່ມຈຸລັງ (ແຊລ) ສ່ວນໃດ ສ່ວນນຶ່ງ ທີ່ຖືກຮັບເອົາສານອາ ຫານບາງແນວໄປລໍ່ລ້ຽງ ເຮັດໃຫ້ຈຸລັງ ສ່ວນນັ້ນຂະຫຍາຍຕົວ ທຳລາຍຈຸລັງສ່ວນອື່ນໆໄປ ຢ່າງໃດກໍ ດີ ທ່ານຫມໍ ໃຫ້ຄວາມເຫັນວ່າໃນປັດຈຸບັນ ຖ້າກວດພົບ ແລະຮັບການປິ່ນປົວທັນ ກ່ອນທີ່ມະເລັງຈະຂະ ຫຍາຍຕົວຫລາຍ ກໍສາມາດຢຸຕິການຂະຫຍາຍຕົວ ຂອງມັນໄດ້ ດ້ວຍຫລາຍວິທີ ເຊັ່ນ ປາດ ຫລື ຜ່າຕັດ, ບຳບັດທາງເຄມີ ສາຍແສງ ແລະທາງຊີວະຈິດ ຄືກຳຈັດອາຫານ ຂອງມະເລັງ (ໂດຍສະ ເພາະ ໄຂມັນ ໂປຣຕີນສັດ ...) ແລະເສີມພູມຕ້ານທານ ໃຫ້ເມັດເລືອດຂາວ ຂອງເຮົາ ດ້ວຍການກິນອາຫານທີ່ມີທາດບຳລຸງ ວິຕາມິນ ເກືອແຮ່ ທີ່ສຳຄັນ ຫລືແມ່ນແຕ່ດ້ວຍການກິນຮາກຢາພື້ນເມືອງ ກໍສາມາດສະກັດ ກັ້ນ ຫລືຢຸດການເຕີບໃຫຍ່ຂະຫຍາຍຕົວຂອງມະເລັງໄດ້. ປັດຈຸບັນ ທາງ ການແພດ ບໍ່ຖືວ່າມະເລັງເປັນສິ່ງຫນ້າຢ້ານອີກແລ້ວ ເພາະມີວິທີປາບ ອ້າ ແລະຫລີກເວັ້ນໄດ້ ສ່ວນໃນທາງສັງຄົມກໍບໍ່ຖືວ່າ ຄົນທີ່ເປັນມະເລັງ ເປັນຜູ້ມີໂທດກຳຈາກຄວາມປະພຶດບໍ່ດີທາງເພດ ຫລືຜິດສິນຂໍ້ອື່ນໆ ນອກຈາກ ຄວາມບົກພ່ອງດ້ານລະບົບອາຫານ ຫລືເປັນກຳເກົ່າ ຕິດຕົວ ມາ ດັ່ງເວົ້າມາແລ້ວ ຜູ້ດູແລຄົນເຈັບ ແລະຍາດພີ່ນ້ອງກັບຜູ້ເຈັບປ່ວຍ ເອງ ຕ້ອງເຂົ້າໃຈເລື່ອງນີ້ ແລະຮ່ວມມືກັນຕໍ່ສູ້ ກັບມະເລັງດ້ວຍຈິດໃຈເຂັ້ມ ແຂງ ແລະເຮັດໃຫ້ຮ່າງກາຍແຂງແຮງ ມີພູມຕ້ານທານດີ ທັງນີ້ ເຖິງ ວ່າບໍ່ສາມາດປາບມະເລັງໃຫ້ເຊົາຂາດ ແຕ່ຊີວິດຜູ້ເຈັບປ່ວຍ ກໍບໍ່ໄຮ້ຄ່າ ຫມົດຫວັງ ເພາະຍັງສາມາດປະກອບວຽກງານ ໃຊ້ຄວາມສາມາດ ຂອງຕົນໄດ້ຢ່າງມີປະໂຫຍດຈົນເຖິງວາລະສຸດທ້າຍຂອງເຂົາ ເຊິ່ງຕາມ

ຄວາມຈິງແລ້ວ ຈຸດສຸດທ້າຍແຫ່ງຊີວິດນີ້ ບໍ່ດົນບໍ່ນານ ທຸກຄົນກໍຈະກ້າວໄປເຖິງນີ້ຄືກັນ.



*ທີ່ ກຽວໂຕ ປະເທດ ຍີ່ປຸ່ນ, ມັງກອນ 1999*

## II ອຸທິນຢາກຂຽນຫຍັງແດ່ ?

ນອກຈາກເປັນນັກຂຽນ ແລະນັກແປ ທີ່ມີສີລະປະ ສຳນວນການຂຽນ ຢ່າງເປັນເອກະລັກແລ້ວ **ອຸທິນ** ຍັງເປັນບັນນາທິການມືແຂງ ທີ່ກວດແກ້ ພາສາລາວ ໃຫ້ນັກແປຫລາຍຄົນ ຈົນໄດ້ຍອມຮັບນັບຖື ໃນຄວາມລະອຽດກີ່ກ້ວນຂອງເຂົາມາແລ້ວ. ສະເພາະຜົນງານການຄົ້ນຄວ້າຂອງຂ້ອຍເກືອບທຸກອັນ ນັບແຕ່ **ວັດຈະນານຸກົມສຳລັບເດັກ**, ການສຶກສາປຽບທຽບ ອຸດົມຄະຕິໃນ "**ມະຫາກາບທ້າວຮຸ່ງ**", ບົດຂຽນໃນປຶ້ມ "**ແພພັນລາຍ**" ແລະອື່ນໆ **ອຸທິນ** ຈະເປັນຜູ້ຕິຊົມກວດແກ້ໃຫ້ຂ້ອຍດັດແປງປະໂຫຍກໃຫ້ສັ້ນ ໃຊ້ຄຳສັບທີ່ເຫມາະສົມ ຍົກເວັ້ນປະເພດນິຍາຍທີ່ເຂົາຈະບໍ່ດັດແປງຂອງຂ້ອຍເລີຍ ທັງນີ້ໂດຍຖື ວ່າແຕ່ລະຄົນ ມີສຳນວນວິທີການຂຽນຂອງໃຜຂອງລາວຢູ່ແລ້ວ ນອກຈາກຊ່າງສັງເກດ ຈົດຈຳຄຳເວົ້າຄົມຄາຍ ທີ່ອ່ານໄດ້ຈາກຫນັງສືຕ່າງໆແລ້ວ **ອຸທິນ** ຍັງສ້າງສັນຄຳເວົ້າ ສຳນວນປະໂຫຍກ ຄຳນິຍາມແປກໆ ບາງອັນມີລັກສະນະຢອກລໍ້ສຽດສີແບບເລິກໆ ບາງອັນຊວນຄິດຄຳນຶງ. ໃນໄວຫນຸ່ມ ນອກຈາກເປັນນັກອ່ານແລ້ວ ເຂົາຍັງເປັນນັກຈົດກ່າຍອີກ ເຊັ່ນ ກ່າຍເອົາເລື່ອງຕະຫລົກພາສາຝຣັ່ງໄວ້ ຕັ້ງຫລາຍສິບຫນ້າ ຈັ່ງຊັ້ນຈຶ່ງບໍ່ແປກທີ່ຕໍ່ມາ ນອກຈາກຂຽນເລື່ອງສັ້ນໆຫລາກຫລາຍອາລົມແລ້ວ **ອຸທິນ** ຍັງຂຽນເລື່ອງຕະຫລົກແບບງ່າຍໆ ມີລັກສະນະລາວໆ ເປັນທຳຊາດ ເຊິ່ງຫລາຍຄົນ ໄດ້ຜ່ານສາຍຕາມາແລ້ວ ໃນວາລະສານວັນນະສິນ ລະຫວ່າງຊຸມປີ80 ປາຍ ຫາປີ90 ໃນນາມປາກກາຕ່າງໆ " ເຊັ່ນ ***ອ.ທ.***, *ສ້ອຍສາຍຄຳ* ເຊິ່ງມີຢູ່ໃນປຶ້ມເຫລັ້ມນີ້ຈຳນວນນຶ່ງ.

ລັກສະນະພິເສດອັນນຶ່ງຂອງ **ອຸທິນ** ອາດຈະແມ່ນການລ້ຽງເລື່ອງ ຄືເລືອກເຟັ້ນເລື່ອງທີ່ຈະຂຽນ ຕາມຄວາມເຫມາະສົມຂອງຍຸກສະໄຫມ ແຕ່ສ່ວນຫລວງຫລາຍ ຍ້ອນວ່າເລື່ອງຂອງເຂົາ ມີລັກສະນະມະນຸດສະທຳ ຈະລິຍະທຳ ມັນຈຶ່ງບໍ່ຫລ້າສະໄຫມຈັກເທື່ອ. **ອຸທິນ** ມີຄວາມຄິດ

ຄວາມຫວັງຢ່າງມາກມາຍໃນຊີວິດ ເຮົາມີເລື່ອງທີ່ຢາກຈະຂຽນອີກຫລວງຫລາຍ ທັງຊື່ເລື່ອງ ໂຄງເລື່ອງ ຊື່ຕົວລະຄອນ ຖືກບັນທຶກໄວ້ໃນປື້ມນ້ອຍຫລາຍຫົວ.

## 1. ເລື່ອງສັ້ນ

ນັບແຕ່ເລີ່ມຂຽນເລື່ອງສັ້ນໆ ລົງໃນຊາດລາວລາຍວັນ ມາແຕ່ຊຸມກາງປີ 60 ພຸ້ນແລ້ວ ລາຍຊື່ ແລະແກ່ນຂອງເລື່ອງຕ່າງໆ ຖືກຈົດໄວ້ເປັນບັນຊີຍາວໆ ເຊັ່ນໃນປື້ມບັນທຶກ ປີ 1967 ດັ່ງລຸ່ມນີ້ :

- ຕົ້ນເຫດ, - ເຮົາຮັກກັນບໍ່ໄດ້, - ໄຊຊະນະຂອງຜູ້ບໍ່ແພ້ (ຫມາໄລ່ກັດກັນ),
- ຂອງຂວັນວັນແຕ່ງດອງ
- ຈົດຫມາຍຊອງຫມອງ, - ຜູ້ຮ້າຍລັກສາຍໄຟ, - ໂຄສະນາບອກບຸນລົດຕຳເດັກນ້ອຍ , - ຄົນມີມົນ
- ຂອງຂວັນແດ່ນາຍຄຣູພາສາອັງກິດ, - ປາກິນປາທີ່ຖືກເບັດ (ປາຄໍ່ໂລພາ), - ບາງບັ້ງຮ້ານລຳວົງ (ຄົນງາມ), - ງາມດອກງິ້ວບານ,
- ເພື່ອນຍິງໃນໂຮງພະຍາບານໄປເຮັດແທ້ງ (ຍິ້ມສີເຫລືອງ)
- ເຈັ່ຽນ້ອງແລ້ວເງືອດມີດຖືກຕາ, - ໄລ່ຕີລູກ ແລ່ນຖືກລົດຕຳຕາຍ,
- ອຸ້ມລູກໂຍນໄປມາເລີຍຕົກຫມໍ້ນ້ຳອ້ອຍ , -ພໍ່ສ່ຽວຖືກເມັຽສ່ຽວວ່າໃຫ້ ,
- ຮັກສາວໂພນໂຮງ, - ເຮືອນເຊົ່າ (ຂຽນແລ້ວ), - ບັ້ງບ່ອນຜູ້ມີກຽດ (ຂຽນແລ້ວ), - ເລື່ອງຝັງໄຫຄຳ, - ຄົນຝົນພ້າ - ຂາຍເຂົ້າຫນົມຄົກ,
- ບັ້ງຫມູບໃບບາ
- ເດັກນ້ອຍແລ່ນໄລ່ໃບປິວໂຄສະນາ, - ຮັກປີ 1973 (ດອກກຸຫລາບ),
- ນ້ຳຕາດິບ , - ຮັກໃນໂຮງຫມໍ (ຖືກຕີອັດປະຕູ), - ຕິດຕໍ່ຄົນໃຫ້ສະແດງຫນັງ , - ໄຟໄຫມ້ເຮືອນນັກຂ່າວ, - ເອົາປືນໃຫ້ແຟນຍືມ ປ້ອງກັນຕົວ, - ສາວໄດ້ເງິນປອມໄປຊື້ຄຳ, - ແຜ່ນດິນລືບບໍ່ສູນ, - ແພງແມ່ (ຂຽນແລ້ວ) - ຈັບງາມ

- ລົມພັດໄຜ່, - ໃບວົງເລັບ, - ແດດອຸ່ນ, - ດອກໄມ້ປ່ຽນກິ່ນ, - ດອກເລົາບານແລ້ງ, - ເພງບໍ່ມັກສາຍລົມ, - ຫມົດແດດຍັງມີເງົາ, - ຈຳປາພວງດ່ຽວ, - ຄໍ່າແລ້ວ ພໍ່ຍັງບໍ່ຕ່າວ, - ບ້ານຢູ່ດອນແດງ
- ເມົາແລ້ວຂຽນ , - ບຸ່ງສິ້ນຂຽນ , - ບານຈໍາກ້ານ, - ບົວພັນສ້ອຍ,
- ປະຢັດລູກປືນຍິງຊະເລີຍ
- ຊ້າງອວດງາ ກີກຕາມລ່າ (ນິທານ), - ໄກ່ນ້ອຍຢຽບແອ່ງ ງວໍາຫົວຕົນເອງ (ນິທານ)
- ແຕ້ມນົກບິນໄປ, - ຂຽນສະຫງວນພັນປາບຶກ, -ແຕ້ມຮູບທີ່ມີນໍ້າຕາອອກ,
- ຂີ້ແມງວັນ, - ຍຸງກັດຕຸກກະຕາ, - ລູກຮວາກໂສກັນ (ເລື່ອງຫາງ),
- ເດັກນ້ອຍເກັບກາລະພຶກ ຢູ່ງານສົບ, - ຊື້ເຄື່ອງເອ້ໄວ້ຫລອກໂຈນ,
- ຄວາມລັງເລ ທີ່ຈະຂ້າສັດຂາຫັກ, - ສອງຜົວເມຽຕົວະກັນວ່າກິນເຂົ້າເຊົ້າແລ້ວ, - ເຮັດທ່າໃຫຍ່ ໄປພົວພັນວຽກງານ, - ເດັກນ້ອຍເກັບ ເຄື່ອງອາໄລລົດ ຕາມກະຫນົນ, - ກ່ອນຈາກ (ເຫດການວັນກ່ອນຈາກ),
- ນອນອັດຕາ ນາງພະຍາບານມາເຝົ້າ, - ແມບລິ້ນເວົ້າບໍ່ອອກ, - ກັບແກ້ເສັງຕົບຫນຽວ (ນິທານ), - ເສັງກອງ (ສຽງກອງຍາມເດິກ)
- ຫມົກເກົ່າ (ພິສູດຄວາມບໍລິສຸດ) ,- ລູກເສືອປະຫມາດນອນຕາກແດດ,
- ເອົາເງິນແຜ່ບຸນໄປຊື້ອາຫານ ໃຫ້ຄອບຄົວອຶດຫິວ, - ທໍາທ່າຮ້ອງໄຫ້ວ່າຜົວຕາຍ ເພື່ອຮັບເງິນບໍລິຈາກ, - ເລື່ອງຂອງສິ່ງໂຕຫນຶ່ງ, - ຄູ່ລໍາວົງ (ເມຽໂຕເອງ), - ຂອງຂວັນແກ່ລູກ, - ສົ່ງເຄື່ອງທາງໄປສະນີ, - ຄົນເຝົ້າເຕົາເຜົາສົບ (ເອົາຄໍານໍາສົບ), - ຫາເຂັມຕາມພື້ນດິນ, - ໃສ່ເກີບບໍ່ກືກກິ່ງ
- ຄົນໃຈບຸນກິນນົກກາງແກ, - ຄົນແປກຫນ້າ ຂໍຊ້ອນລົດກີບ (ແຮງເສຽສະຫລະ)

ຫລາຍສິ່ງຫລາຍຢ່າງທີ່ຂຽນໄປແລ້ວ ຈໍານວນນຶ່ງໄດ້ພິມ ແລະຍັງມີຫລາຍອັນ ບໍ່ທັນໄດ້ພິມ ໃນປຶ້ມບັນທຶກຫລາຍຫົວ ມີສໍານວນປະໂຫຍກຄໍາເວົ້າ ຫລາຍແບບ ເຊິ່ງຈັດແບ່ງອອກດັ່ງນີ້:

**2. ສຳນວນຊວນຄິດ**

- ໃນປະເທດໜຶ່ງ ການສ້າງອາຄານ ສ້າງກະທົບ, ອາດຈະເອົາຕ່າງປະເທດມາສ້າງໃຫ້ກໍໄດ້. ແຕ່ການສ້າງວັນນະຄະດີ ຕ້ອງແມ່ນຄົນໃນຊາດນັ້ນ ເປັນຜູ້ສ້າງເອງ.
- ເມື່ອເຮົາຫລຽວເບິ່ງຟ້າ ຈະເຫັນວ່າ ຢູ່ເໜືອຟ້າ ຍັງມີຄິ້ວ.
- ສິລະປິນ ຄືຜູ້ເຫັນຄວາມງາມ ຂອງຄວາມບໍ່ຮຽບຮ້ອຍ.
- ດອກໄຟຟ້າຄອງກ້າແສງສະຫວ່າງ (ຄອງກ້າຄວາມມືດ).
- ເມື່ອມີປ່າໄມ້ ກໍມີຫ້ວຍນ້ຳໃສ ຕົ້ນໄມ້ໄດ້ແຍງເງົາ ຕາເວັນໄດ້ແຍງຟ້າ.
- ແສງອະລຸນ ມີໄວ້ສ່ອງຟ້າ ແສງແດດ ມີໄວ້ສ່ອງດິນ (ແຜ່ນດິນ).
- ເມືອງງາມ ເພາະມີດອກໄມ້ບານ ປ່າງາມເພາະມີນົກບິນຕອມ.
- ນົກຄືດອກໄມ້ທີ່ບິນໄດ້.
- ຕານປາຍກຸດຄື ສັນຍະລັກຄວາມທາຍະນະ.
- ຕົ້ນໄມ້ຄອຍເງົາ ທີ່ຈະມາພ້ອມກັບແສງອາທິດ.
- ຄວາມໄຮ້ດຽງສາ ທີ່ປາສະຈາກອະຄິດ.
- ຕາເວັນດວງເກົ່າ ໃຫ້ກຳເນີດວັນໃໝ່ ວັນໃໝ່ອັນຊ້ຳຊາກ.
- ນ້ຳໝອກຍາມເຊົ້າ ພາກັນຫລັ່ງນ້ຳຕາ.
- ແມ່ນ້ຳຂອງກືນເອົາກ້ອນເມກຈາກທ້ອງຟ້າ.
- ຈະມີບົດວັນນະກຳດີເດັ່ນໄດ້ ກໍຕ້ອງມີບົດວັນນະກຳບໍ່ດີ.
- ຝົນຕົກຈາກຟ້າ ເພາະຟ້າມີທ້ອງ.
- ນ້ຳເລິກສ່ອງເຫັນຟ້າ ນ້ຳຕື້ນສ່ອງເຫັນດິນ.
- ປ່ອຍສັດໄດ້ບຸນ(ຄວາມດີ) ປ່ອຍເວລາເສຽປະໂຫຍດ.
- ນ້ຳຕາເພື່ອຄວາມແຄ້ນ ຫລືຄວາມຍິນດີ ກໍແມ່ນນ້ຳຕາແທ້.
- ຊີວິດຈຳເປັນຕ້ອງມີຊີວິດ ເພື່ອໃຫ້ຕ່າງກັບສັດ.
- ຢູ່ຄົນດຽວ ມີເງົາເປັນເພື່ອນ.
- ຄົນຕົກຈາກທີ່ສູງລົງດິນ ບໍ່ກະເດັນ (ເພາະດິນຈູບ).

- ຄົນທີ່ມີແຕ່ເງົາເປັນເພື່ອນນັ້ນ ຕ້ອງເຫງົາ.
- ກ້ອນເມກລ່ອງລອຍ ຢ່າງເປັນອິດສະລະ.
- ຄວາມງຽບມີນ້ຳໜັກ ເມື່ອ... (ເຈົ້າໜີໄປຈາກຂ້ອຍ).
- ເຂັມນ້ອຍໆ ຍັງມີກົ້ນ.
- ຕາເວັນດວງນີ້ ໄດ້ຮັບການອຳລາຂອງຜູ້ໂສກເສົ້າເສັຽໃຈໄປສູ່ໂລກໃໝ່ ຫລາຍຕໍ່ຫລາຍລາຍ ມາແລ້ວ.
- ບໍ່ມີຜູ້ໃດ ຈະມາລັກຄວາມຝັນຂອງເຮົາໄປໄດ້ ແຕ່ຄວາມຕາຍ ລັກເອົາຄວາມຝັນໄປໄດ້.
- ສາຍລົມປ່ຽນຜິວຄົນ ການເວລາປ່ຽນໃຈຄົນ.
- ເກັບປູໃສ່ຄີ້ງຍາກ ເອົາຄີ້ງງວຳປູ ງ່າຍກວ່າ.
- ຫີນຕົກໃສ່ໄຂ່ ໄຂ່ແຕກ ໄຂ່ຕົກໃສ່ຫີນ ຫີນບໍ່ແຕກ.
- ບໍ່ມີເມືອງໃດ ທີ່ສ້າງສຳເລັດ.
- ນະຣົກງົດງາມເໜືອຄຳບັນຍາຍ ຈາກປາກໝາ.
- ດິນ ໃຫຍ່ແທ້ເປັນທະວີບ ໃຫຍ່ພໍກະເທີນເປັນດອນ.
- ຈິດໃຈຂອງຜູ້ທີ່ກຳກ່ຳປັ້ນ ຍ່ອມບໍ່ສະຫງົບ.
- ເລກສູນ ກໍຍັງມີຮູບຮ່າງຂອງມັນ.
- ຮັກຄວາມປ່າເຖື່ອນ ຂອງທຳມະຊາດພົງໄພ.
- ດາບຕ້ອງຄົມ ແຕ່ແມ່ນຄົນທີ່ຢາກໃຫ້ດາບຄົມ.
- ມີຄວັນກໍມີໄຟ ມີໄຟ ກໍມີຟືນຫລາຍດົ້ນ.
- ຢ່າເວົ້າແຮງ ມັນຊິບໍ່ໄດ້ຍິນ.
- ໝອນບໍ່ແມ່ນຂອງແພງສຳລັບແມງວັນ.
- ການກົ້ມຕົວລົງ ມັນເຮັດໃຫ້ເຮົາສູງຂຶ້ນ.
- ຄິດຄືເຮົາ ແຕ່ບໍ່ຄືເຮົາຄິດ.
- ຢ່າປະປ່ອຍ ແຕ່ຈົ່ງປົດປ່ອຍ.
- ເປັນກຳມະກອນຍັດທ້າຍເຮືອ ມີຄ່າກວ່າເປັນນາຍຫົວເຮືອ.

- ຄົນທີ່ຂຽນບັນທຶກຄົນບ້ານັ້ນ ແນ່ນອນບໍ່ແມ່ນຄົນບ້າ.
- ຂອງແຂງແທ້ ມ່ອນມີ (ຫີນອ່ອນ ໄມ້ດູ່ ໄມ້ແດງ).
- ດາວຈຸ້ມກັນຢູ່ເທິງຟ້າ ແຕ່ຄວາມຈິງດາວຫ່າງກັນຫລືອທີ່ຈະນັບ.
- ການຂຽນເລື່ອງໃຫ້ອ່ານງ່າຍນັ້ນ ເປັນເລື່ອງຍາກ.
- ການບໍ່ສະແດງຕົນວ່າສະຫລາດ ແຮ່ງເປັນການສະຫລາດ.
- ຢູ່ແຄມຝັ່ງເບື້ອງນີ້ ເຮົາມັກໂອ້ອ່າວຫາຝັ່ງເບື້ອງນັ້ນ.
- ງົວແກ່ກວຽນຕ່າງຟືນ ອຶດຫຍ້າ.
- ມີດຂີ້ຫມ້ຽງບາດບານເຊົາ.
- ຄວາມບໍ່ຕາຍ ບໍ່ຈິງ.
- ເຄືອຫມາກຫລອດກອດເຄືອຫມາກແປບ ແຈບຄັກ.
- ຂອງຕ້ອງຫ້າມ ແລະຂອງຕ້ອງຫາມ
- ແມບລົ້ນ ເວົ້າບໍ່ອອກ.
- ຮ້ອງໄຫ້ ບໍ່ມີນ້ຳຕາ.
- ເລືອດກໍຍັງຍິ້ມໄດ້.
- ເຊັດເລືອດດ້ວຍກີບດອກໄມ້.
- ບານບໍ່ຫອມ / ບໍ່ບານກໍຫອມ.
- ຕໍ່ແລ້ວບໍ່ສູງຂຶ້ນ ຄືຕໍ່ລາຄາ.
- ສາຍນ້ຳຜູກສ່ຽວກັບຫີນຜາ.
- ທົ່ງນານອນຫງາຍເບິ່ງທ້ອງຟ້າ.
- ແດດແຕ້ມສີເຫລືອງ ທີ່ປາສະຈາກກິ່ນ ເທິງແຜ່ນດິນ ທີ່ມີຄວາມສະຫງົບພຽງຊົ່ວງູແມບລົ້ນ.
- ຄົນປ່ວຍໃກ້ຈະຕາຍເຂົາວ່າ : ຢືມມື້ຢູ່, ໂລກຂອງເຮົາ ກໍ່ານີດາວຫາງຈະມາຕຳ ໃນອີກຫລາຍພັນປີຂ້າງຫນ້າ ຕ້ອງເວົ້າວ່າ: ຢືມສະຕະວັດຢູ່.
- ພວກເຂົານຸ່ງເຄື່ອງທີ່ງາມທີ່ສຸດ ແພງທີ່ສຸດ ເພື່ອເຂົ້າສູ່ພິທີແຕ່ງດອງ ແຕ່ເວລາມີຄວາມສຸກທີ່ສຸດ ແມ່ນຕອນພວກເຂົາບໍ່ນຸ່ງເສື້ອຜ້າອາພອນ.

- ຢາກຮູ້ຄຳນິຍາມຂອງຄຳວ່າຕາຍ ຢ່າໄປຖາມຜີ
- ລູກຝາແຝດ : ລຽງຄືວມາແຕ່ເກີດ

## 6. ລຳພັນ ຝັນໄປຕາມອາລົມ

ຕາມປົກກະຕິແລ້ວ **ອຸທິນ** ບໍ່ແຕ່ງກອນທີ່ມີສຳຜັດ ຕາມຫລັກການແຕ່ງກອນ ເພາະບໍ່ກະຫນັດ ແລະບໍ່ໄດ້ອ່ານກາບກອນບູຮານຫລາຍ ທັງບໍ່ໄດ້ສົນໃຈແຕ່ພາຍລຸນມາຍ້ອນອ້ອຍເອງມັກແຕ່ງ ແລະອ່ານສູ່ຟັງເລື້ອຍ **ອຸທິນ** ກໍເລີຍເອົ້າໃຈກົດເກນ ແລະແຕ່ງໄດ້ ແຕ່ສ່ວນຫລາຍ ເອົາຈະຂຽນກອນອິດສະລະ ອັນເປັນແບວກະຫນັດ ແລະໄດ້ຊື່ວ່າ ເປັນຜູ່ແຜ້ວທາງຂຽນກອນແບວນີ້ຜູ້ຫນຶ່ງ. ຕົວຢ່າງບົດກອນທີ່ຂຽນໄວ້ໃນລະຍະຕ່າງໆ:

**ບົດເພງແຫ່ງຊີວິດ** ຂຽນເມື່ອ ວັນທີ 5/6/66
ຈາກຟາກຟ້າອັນມືດຄຶ້ມ ຢາດນ້ຳເລີ່ມຕົກບາບແລ້ວ
ເປັນສາຍຝົນທີ່ລິນໄຫລ ພົມລົງສູ່ຍອດໄມ້ ຕອນສິ້ນວະສັນ
ສິ່ງສຽງເປັນທຳນອງເພງ ອັນຫນ້າອອນຊອນ
ດັ່ງໄກອອກໄປທີ່ຂອບຟ້າ ແລະທີ່ປ່າພູຜາຂຽວ
ໂດຍບໍ່ຫວນກັບມາອີກ ເຊັ່ນດຽວກັບນີ້
ຊາກຄວາມຮັກທີ່ເຫລືອໄວ້ໃນໂລງດວງໃຈ
ຊຶ່ງໃຜຜູ້ຫນຶ່ງປະຖິ້ມໄວ້ ໂດຍຈາກໄປ
ພ້ອມກັບຄຳວ່າ "ລາກ່ອນຈົນຊົ່ວຊີວິດນີ້"
ດັ່ງດຽວກັບສາຍຝົນທີ່ໄຫລລົ່ງ ຢາດນ້ຳຕາຂອງຜູ້ພາດຫວັງ
ກໍໄຫລອອກມາເພາະຄວາມອາໄລອາວອນ
ແລະເພື່ອອຸທິດແດ່ຄວາມໂສກເສົ້າ
ຄວາມອາພັບຂອງຊີວິດ ຕາມທີ່ພົມໄດ້ລິຂິດໄວ້
ທ່າມກາງສາຍຝົນທີ່ຕົກລົງມາເປັນສຽງສະອື້ນອັນເສົ້າສ້ອຍ

ສຽງກູກເອີ້ນກໍດັງມາຈາກສຸດຂອບຟ້າ
ເປັນສຽງຂອງຜູ້ອັນເປັນທີ່ຮັກ ປາຖະນາ ແລະບູຊາ
ໃນທີ່ສຸດ... ຫລັງຈາກວັນອັນແສນນານ ເຂົາກໍກັບມາອີກ
ດວງຕາອັນຫນ້າສົງສານ ຫລຽວໄປທີ່ມາຂອງສຽງນັ້ນ
ແຕ່... ອະນິຈາ ພາບທີ່ເຫັນກໍຄືຄວາມວ່າງເປົ່າ
ຄວາມເຢືອກເຢັນຂອງສາຍນ້ຳ
ທີ່ພົມລົງສູ່ປ່າໄມ້ອັນກວ້າງ ແລະແສນໄກ
ສຸດທີ່ເຂົາຈະຕາມໄປໃຫ້ພົບເຫັນໄດ້
ແລ້ວໂລກທັງໂລກ ກໍຈົມຢູ່ໃນຄວາມສງົບ ອັນເສົ້າສ້ອຍ
ແລະຫນາວເຢັນ
ສາຍຝົນຄົງລິນໄຫລໄປເລື້ອຍໆ ດັ່ງນ້ຳຕາ ຂອງຜູ້ມີກັມ

**ວັນສຸດທ້າຍ** (07/4/ 66 )

ດວງອາທິດວັນສຸດທ້າຍຕົກລັບແລ້ວ
ຄວາມມືດເລີ່ມປົກຄຸມທີ່ຟາກຟ້າສຸດສາຍຕາ
ສາຍລົມກະແສສຸດທ້າຍ ພັດມາຈາກທີ່ໄກນັ້ນ
ຊ່າງເຢືອກເຢັນ ວຽບເຫງົາ ຫນາວຫົວໃຈ
ຈາກວັນນັ້ນຈົນວັນນີ້ ຈາກຄືນນັ້ນຈົນຄືນນີ້
ວັນແຫ່ງຄວາມສຸກ ຄືນແຫ່ງຄວາມສຳຣານ
ໃນທີ່ສຸດ ວັນສຸດທ້າຍ ວັນແຫ່ງການຈາກ ກໍມາເຖິງ
ຕໍ່ແຕ່ນີ້ ບໍ່ມີແລ້ວຄຳວ່າ ມື້ອື່ນ ໃນການຢູ່ຮ່ວມກັນ
ຄົງມີແຕ່ອະດີດ ວັນແຫ່ງຄວາມຫລັງ
ຊຶ່ງບໍ່ມີໂອກາດທີ່ຈະກັບມາໄດ້ອີກ
ສຽງສຸດທ້າຍອັນສັ່ນໃນວັນນີ້ ຄືລາກ່ອນ
ລາຈົນກວ່າວັນນັ້ນ ຈະກັບມາອີກ

ຫາກແມ່ນເປັນໄປໄດ້
ຊີວິດນີ້ເຫມືອນສາຍນ້ຳ ເຫມືອນສາຍລົມ ທີ່ພັດຜ່ານ
ໄຫລໄປໂດຍບໍ່ມີວັນກັບ ເຫມືອນສຽງເພງຈາກຂອບຟ້າ
ເຂົາຈາກໄປແລ້ວ ເຫມືອນສາຍນ້ຳ
ເຫມືອນສຽງເພງດັ່ງທີ່ວ່າ
ຄວາມໂສກເສົ້າ ຢາດນ້ຳຕາ ຄວາມອາວອນ
ຄືສິ່ງເຫລືອຢູ່ຂ້າງຫລັງ
ໂອ! ໂລກນີ້ຊ່າງງຽບເຫງົາແສນວັງເວງ

**ຂອບຟ້າເບື້ອງນັ້ນ** (ວັນນະສິນ ສະບັບເດືອນ ພະຈິກ 1980)
ຫລຽວສຸດສາຍຕານັ້ນ ເຮົາເຫັນຟ້າລົງຈອບດິນ
ມີສາຍພູສີຂຽວໆ ເມກລອຍສີບາງໆ
ຫ່າງແສນຫ່າງ ໄກແສນໄກ
ມີຄວາມລະໄມ ໃຫ້ໂອ່ອ່າວຄະນຶງຫາ

ແນມໄປທີ່ຂອບຟ້າແລ້ວ ໃຈໄຝ່ກະຫວິນຫາ
ຄິດຢາກບິນໄດ້ດັ່ງນົກ ພັດລອຍໄດ້ດັ່ງລົມ
ຈະເຫາະເຫີນເດີນໄປ ໃຫ້ສຸກສົມໃຈຫມາຍ
ຊົມດອກໄມ້ຫລາຍສີ ຟັງດົນຕີ ສະຫວັນບັນເລງ

ຈິ່ງແນມໄປທີ່ຂອບຟ້າອີກໃຫມ່ ແນມໄປໃຫ້ສຸດຊຶ້ງ
ຈາກແຫ່ງນັ້ນຈິ່ງຫລຽວຄືນມາ
ເອົາຄວາມຄິດເກິງມາຍັງທີ່ນີ້ອີກ
ທີ່ຊຶ່ງກາຍເປັນຂອບຟ້າ ມີເມກລອຍຕ່ຳ ສີຂາວນວນ
ມີສະກຸນາບິນເວິ່ນກາງເວຫາ ໄກສຸດຊົ່ວສາຍຕາ

ຈາກຂອບຟ້າເບື້ອງນັ້ນ ເຮົາຈະໄຝ່ຫາຂອບຟ້າເບື້ອງນີ້
ຈິດອ່າວກະສັນຫາ ເພາະເປັນແດນທີ່ເຄີຍຊື່ນຊົມ
ມີເຮືອນທີ່ເຄີຍຢູ່ ມີອູ່ທີ່ເຄີຍນອນ
ມີຈຳປາສີຂາວ ມີສຽງລຳ ສຽງແຄນ ແລນແຕ່...

ຂອບຟ້າເບື້ອງນັ້ນ ເປັນດິນແດນໃນຈິນຕະນາການ
ຂອບຟ້າເບື້ອງນີ້ ແມ່ນຄວາມເປັນຈິງ ແມ່ນແຜ່ນດິນແມ່
ມີຄວາມຮັກແພງ ຄວາມອົບອຸ່ນ ຄວາມເປັນເຈົ້າຕົນເອງ
ຂອບຟ້າເບື້ອງນີ້ ຟ້າໃສງາມລົງຈອບດິນ ກິ່ນສະເຫນີພາບ

**ວັນໃນຫົວໃຈ** (ວັນນະສິນ ສະບັບ 109 , ມີນາ 1989)
ວັນຫນຶ່ງເບີກຟ້າ ແລ້ວຜ່ານໄປ
ຜ່ານໄປ ເພື່ອໃຫ້ວັນໃຫມ່ ມາແທນ
ແທນແລ້ວ ກໍຈະມີວັນໃຫມ່ເບີກຟ້າ
ວັນທີ່ຜ່ານໆໄປເຫລົ່ານັ້ນ
ຂ້ອຍຢາກໃຫ້ວັນຫນຶ່ງກັບມາອີກ
ຢາກໃຫ້ວັນນັ້ນ ຢຸດການເວລາ
ໃຫ້ໂລກຢຸດຫມູນ
ເປັນວັນນິລັນດອນ
ວັນທີ່ຂ້ອຍຢູ່ດອມ "ເຈົ້າ"
ຂາແຫ່ງເຈົ້າພັບເຂົ້າ ແລ້ວກາຍເປັນຕັກ
ຍາມຫລັບ ຍາມຕື່ນ ຂ້ອຍນອນເອົາຫວິຫມູນ
ປາກນ້ອຍໆ ຂອງຂ້ອຍເອີ້ນເຈົ້າວ່າ "ແມ່"

x x x

ຢູ່ໃກ້ແມ່ ຟ້າກໍງາມ ດິນກໍອຸ່ນ
ຢູ່ໃກ້ແມ່ ບໍ່ໜາວຝົນ ບໍ່ໜາວລົມ
ຢູ່ໃກ້ແມ່ ຫລັ່ງນ້ຳຕາ ກໍຍັງຍິ້ມອອກ
ຢູ່ໃກ້ແມ່ ...... ..... (1)

**ທີ່ຕັ້ງຂອງຂ້ອຍ** (ປື້ມປະຕິທິນ 1995 ຂອງສະຫະພັນແມ່ຍິງ)
ຂ້ອຍເປັນແມ່ຍິງ
ຖ້າເມື່ອໃດ ຂ້ອຍຕ້ອງອອກໜ້າເຈົ້າ
ກໍແມ່ນຂ້ອຍ ມີຄວາມສາມາດ
ແລະເຊື່ອໝັ້ນໃນຕົນເອງ ມີຈິດໃຈເຂັ້ມແຂງ ບໍ່ຫວັ່ນໄຫວ
ເຖິງແຮງຈະໜ້ອຍກວ່າເຈົ້າກໍ່ຕາມ
ຂ້ອຍບໍ່ມັກ "ກຶກຈັບ" ໃຫ້ອອກໜ້າ
ເພາະບາງທີ ມັນໝາຍເຖິງເປັນພຽງເປົ້າກະສູນ
ຂ້ອຍບໍ່ມັກ ຮູບການເປັນພຽງເປົ້າກະສູນ
ຂ້ອຍບໍ່ມັກ ຮູບການເປັນພຽງສັນຍະລັກ
ຂ້ອຍຢາກເປັນຕົວ ຂອງຕົວເອງ
ຖ້າຈຳເປັນຂ້ອຍຕ້ອງຢູ່ທາງຫລັງເຈົ້າ
ບໍ່ແມ່ນຂ້ອຍຢ້ານປະເຊີນບັນຫາ
ຂ້ອຍຢາກກຽມທຸກຢ່າງ ໃຫ້ເຈົ້າສູ້ກັບອຸປະສັກ
ເປັນກຳລັງກາຍ ແລະກຳລັງໃຈຊ່ອຍເຈົ້າ
ທັງປ້ອງກັນໄພ ທີ່ຈະມາດ້ານຫລັງ
ຂ້ອຍຢູ່ໄດ້ທັງທາງໜ້າ ແລະທາງຫລັງເຈົ້າ
ແລະ/ຫລື ທາງຊ້າຍ ແລະທາງຂວາເຈົ້າ
ແຕ່ໂປດເຂົ້າໃຈ ໂດຍປາສະຈາກອະຄະຕິ
ຂ້ອຍຈະບໍ່ຢູ່ກ້ອງເຈົ້າ !

*ສ້ອຍສາຍຄຳ*

## 7. ບັນທຶກຊີວິດປະຈຳວັນ

ການຂຽນບັນທຶກຄົງເປັນການລິເລີ່ມຂອງນັກຂຽນຫລາຍຄົນ **ອຸທິນ** ເປັນຜູ້ນຶ່ງທີ່ມັກ ບັນທຶກສິ່ງເລັກໆນ້ອຍໆໄວ້. ບັນທຶກຕໍ່ໄປນີ້ເປັນສ່ວນນຶ່ງທີ່ເກີດຂຶ້ນກັບຄອບຄົວ ຄືເປັນວັນຄົບຮອບອາຍຸນຶ່ງປີ ຂອງລູກສາວກົກ ທີ່ມີຊື່ຫລິ້ນວ່າປຸ໊ ແລະການລ້ຽງດູລູກໄວຂວບກວ່າພຽງຄົນດຽວ ທັງເຮັດການນຳ. ຄິດວ່າອາດຈະເປັນປະໂຫຍດ ສຳລັບລູກຫລານຜູ້ຢາກເປັນນັກຂຽນໄດ້. ບັນທຶກເລີ່ມຕົ້ນດັ່ງນີ້

***2 ທັນວາ 1978***



ເຮັດຊຸມແຊວວັນເກີດຂອງ ອະປຸ໊, ເຊີນເອົາພີ່ນ້ອງໃກ້ຊິດມາຮ່ວມມີ: ພໍ່ເກົ້າ, ອາສລິດ, ເອື້ອຍຄອນ, ວີວີ, ໃຈເດັດ, ເອື້ອຍດາລາ, ອ້າຍວົງ, ເອື້ອຍຂຽນ ແລະເກດສະດົງ ເດັກນ້ອຍມີ: ບາໂນ, ຊີໂນ, ວິກ, ແຫລ້, ກິກິ້ມ, ກິໂຫລຍ. ຊຸມເຂົ້າກັບໃບຕອບແລງ, ກະຕ່າຍສາມໂຕເປັນອາຫານ ແລະນ້ຳຫວານເຂົ້າກ່ຳ. ອະປຸ໊ ມີອາຍຸຄົບຮອບນຶ່ງປີໃນວັນນີ້. ວັນທີ 2 ທັນວາ 1977 ເວລາຂ້ອນຊິແຈ້ງ ຂະນະທີ່ມວນຊົນຊາວນະຄອນວຽງຈັນ ພວມແຫ່ກັນໄປຊຸມນຸມສະເຫລີມສະຫລອງວັນຊາດ ອະປຸ໊ໄດ້ກຳເນີດ

ມາສູ່ໂລກ ຢູ່ໃນຫ້ອງປະສູດ ຂອງໂຮງພະຍາບານເຊດຖາທິຣາດ ໂດຍພໍ່ເອງກໍໄດ້ຢູ່ໃນຫ້ອງ ເພື່ອເປັນກຳລັງໃຈໃຫ້ແມ່ທີ່ໄດ້ທົນທໍລະມານ ຍ້ອນຄວາມ ເຈັບປວດມາເປັນເວລາສາມວັນແລ້ວ. ອອກຫວິດຫ້ອງແມ່ ອະປຸ໊ ບໍ່ຮ້ອງໄຫ້ໂລດ ນາງຫມໍເອົາເຄື່ອງມືດູດນ້ຳອອກຈາກປາກ ຈາກ ດັງຈຶ່ງມີສຽງຮ້ອງແວ້ງ ດີ້ນແດ່ວໆ ຜິວຂາວໆ. ພໍ່ເຝົ້າເບິ່ງທຸກວິນາທີ, ນາງຫມໍສົ່ງເຂົ້າໄປໄວ້ອີກຫ້ອງນຶ່ງ ຊຶ່ງເປັນຫ້ອງເດັກນ້ອຍເກີດໃຫມ່ ພໍ່ກໍຍ່າງນຳໄປ. ພໍ່ຮູ້ສຶກຕື່ນເຕັ້ນ ດີໃຈ ສະຫວາງໃຈ ທີ່ລູກອອກມາມື້ມ ແລະແມ່ກໍຫວິດຈາກອັນຕະລາຍ.

ແມ່ພັກຢູ່ໂຮງຫມໍ 4-5 ວັນ ຈຶ່ງໄດ້ອອກມາຢູ່ບ້ານເຊິ່ງເວລານັ້ນ ຢູ່ຫ້ອງຂອງຕຶກຕໍ່ຫນ້າ ວັດອູບມຸງ. ເວລາພັກຢູ່ໂຮງຫມໍນັ້ນ ເມື່ອແມ່ຢາກ ເອົານົມໃຫ້ອະປຸ໊ ກິນຕາມລະບຽບ ກໍບອກໃຫ້ນາງຫມໍອຸ້ມມາໃຫ້ ໂດຍ ແຈ້ງຊື່ແມ່ ໃຫ້ນາງຫມໍຮູ້ ເພາະແອນ້ອຍເກີດໃຫມ່ ຈະຕ້ອງມີຊື່ແມ່ກຳກັບ ໄວ້. ວັນນຶ່ງມີການຫລົງກັນ ຄືມີຍິງຄົນນຶ່ງ ຄົງຈະແມ່ນຊື່ ວົງເດືອນ ບອກ ໃຫ້ນາງຫມໍເອົາລູກອອກມາເພື່ອຈະໃຫ້ດູດນົມ ແຕ່ນາງຫມໍ ຟັງບໍ່ຄັກ ຈຶ່ງໄປເອົາແອນ້ອຍຊຶ່ງມີຊື່ແມ່ ດວງເດືອນ ຕິດໄວ້ນັ້ນ ອອກມາໃຫ້, ຍິງຄົນ ນັ້ນ ເຫັນກົງຕີນກົງມື ແລະຜ້າອ້ອມຕ່າງຕາ ບໍ່ແມ່ນຂອງຕົນ ເບິ່ງຫນ້າ ແອນ້ອຍ ກໍບໍ່ແມ່ນຜູ້ເກົ່າ ຈຶ່ງບອກໃຫ້ນາງຫມໍ ເອົາໄປສົ່ງຄືນໄວ້ຫ້ອງ ຮັກສາເດັກເກີດໃຫມ່ ແອນ້ອຍທີ່ກ່າວນີ້ ກໍແມ່ນອະປຸ໊ນີ້ເອງ.

ພໍ່ໃຫຍ່ໄປຢາມຢູ່ໂຮງຫມໍ ແລ້ວຕັ້ງຊື່ໃຫ້ວ່າ ອຸດົມພອນ ພໍ່ເອງໃສ່ ຊື່ຫລິ້ນໃຫ້ວ່າ ປຸ໊ ແຕ່ຮ້ອງປຸ໊ລ້າໆ ມັນເຂີນ ຈຶ່ງມີຜູ້ຮ້ອງວ່າ ອະປຸ໊ ຕີປຸ໊ ຕະປຸ໊ ຫລື ປຸ໊ປຸ໊. ອະປຸ໊ພວມສົ່ງສຽງໃກ້ຊິເປັນພາສາ ເຊັ່ນວ່າ "ຈະເອະ" ຫລື "ເອົາ" ສອງຢ່າງນີ້ ເວົ້າໄດ້ແຈ່ມແຈ້ງ ສ່ວນຫລາຍມັກອອກສຽງວ່າ "ແຈ່ະໆ" ຫລື "ແຕ່ະໆ" ຫລື "ຈ໊າໆ" ສຽງຍາວໆ. ຕື່ນເຊົ້າມາ ໄປງອຍ ຢູ່ຫົວຂັ້ນໄດ ເຫັນຜູ້ໃດຢູ່ສວນຜັກ ອະປຸ໊ ຈະຮ້ອງໃສ່ ສຽງ ຈ໊າໆ! ບາງເທື່ອ ກໍຮ້ອງໄຫ້ ຢາກລົງໄປຫາຢູ່ສວນ ຫລືຢູ່ເດີ່ນບ້ານ.

**ວັນທີ 22 ທັນວາ 1978**

ຕອນເຊົ້າໄປສົ່ງດວງເດືອນກັບອະປຸ໊ ທີ່ຄຸ້ມຫລັກຫົກ ເພາະດວງເດືອນ ກຳນົດໄປຮຽນ ການເມືອງ 7 ວັນ ໂດຍພັກຢູ່ພຸ້ນເລີຍ. ເມື່ອໄປຮອດສະຖານທີ່ ກໍພົບວ່າ ທາງຈັດຕັ້ງ ບໍ່ໄດ້ມີບ່ອນສຳລັບເດັກນ້ອຍ. ເມື່ອເຫັນວ່າຈະມີບັນຫາຫຍຸ້ງຍາກໂດຍສະເພາະອາຫານ ສຳລັບອະປຸ໊ ແລະທັງແມ່ກໍຈະບໍ່ໄດ້ຮຽນສະດວກ ຈຶ່ງໄດ້ກັບໄປ ເອົາອະປຸ໊ ກັບຄືນມາບ້ານໃນຕອນແລງ ວັນດຽວກັນນີ້. ຄ່ຳມາເອົາ ເຂົ້າຈ້າວກັບນ້ຳຕົ້ມເຄັມໝູປ້ອນອະປຸ໊, ຫລັງຈາກຫລິ້ນຢູ່ດົນສົມຄວນ ກໍຫລັບ ເລີຍໄດ້ປຸກຂຶ້ນມາກິນຢາແກ້ລົງທ້ອງ ເພາະອະປຸ໊ທ້ອງບໍ່ດີມາແຕ່ວານນີ້. ອະປຸ໊ ຟືດບໍ່ຢາກກິນຢາ ພໍ່ຕ້ອງກຸມຕີນກຸມມືໄວ້ແໜ້ນ ແລ້ວເອົາບ່ວງຢາ ສອດເຂົ້າປາກ ຂະນະທີ່ອ້າປາກຮ້ອງໄຫ້ ກິນຢາແລ້ວ ກໍເຊົາໄຫ້ ບໍ່ດົນກໍຫລັບສອດໆ.

ຄືນນີ້ ພໍ່ກັບອະປຸ໊ນອນກ່ອມກັນ ພຽງສອງຄົນ ເປັນຄືນທຳອິດ ທີ່ບໍ່ມີແມ່ນອນນຳເປັນຜູ້ກ່ອມ ແລະເບິ່ງແຍງ. ອະປຸ໊ນອນຫລັບເປັນຕາຮັກທີ່ສຸດ ໄຮ້ດຽງສາ ເບິ່ງທ່າຄືຈະຫລັບແຈບຈົມ ແຕ່ເມື່ອໄປແຕະຕ້ອງໜ້ອຍດຽວ ກໍຈະຮູ້ເມື່ອ ແລະເໜັງຕີງຂຶ້ນ ແລ້ວກໍຫລັບຕໍ່. ກາງເດິກອະປຸ໊ຕື່ນຂຶ້ນລຸກນັ່ງແລ້ວກໍຫມູບລົງຮ້ອງໄຫ້ໜ້ອຍນຶ່ງ, ພໍ່ຕົບກົ້ນໃຫ້ແລ້ວກໍມິດຫລັບໄປ. ພໍ່ຫອມທີ່ແກ້ມເບົາໆ ແລ້ວກໍນອນລົງຂ້າງໆ ທັງຮູ້ສຶກເປັນຫ່ວງ ຢ້ານອະປຸ໊ກິ້ງໄປຕົກຕຽງ.

**ວັນທີ23 ທັນວາ 1978**

ພໍ່ໄປການໂດຍເອົາອະປຸ໊ໄປນຳ. ກ່ອນຈະອອກຈາກເຮືອນໄດ້ ກໍສວາຍຫລາຍແລ້ວ ເພາະຕ້ອງຫຍຸ້ງກັບວຽກມະຍິບມະຍ່ອຍ ເຊັ່ນ ລ້າງໜ້າໃຫ້ ອະປຸ໊ດ້ວຍນ້ຳອຸ່ນ ປ່ຽນເຄື່ອງນຸ່ງໃຫ້ ປ້ອນເຂົ້າ



ຈັດແຈງເອົາເຄື່ອງນຸ່ງ ແລະຜ້າອ້ອມໄປໄວ້ກ່າຍ ກຽມເອົານ້ຳນົມ ແລະ ເຂົ້າຫນົມໄປໄວ້ໃຫ້ກິນຢູ່ໂຮງການ ອະປຸ໊ມັກຫລິ້ນເຈ້ຽ ພໍ່ເອົາປຶ້ມໃຫ້ກໍຈີກ ຫລິ້ນຊະຊາຍ ມັກຍ່າງອ້ອມ ຫລືຍ່າງຫລິ້ນຢູ່ກ້ອງໂຕ໊ະພໍ່ ດົນໆກໍຢາກ ໃຫ້ອຸ້ມ ພໍ່ອຸ້ມເລາະຫ້ອງແລ້ວ ກໍເອົານັ່ງໄວ້ເທິງໂຕ໊ະ ເອົາເຈ້ຍທີ່ບໍ່ມີປະ ໂຫຍດໃຫ້ຈີກຫລິ້ນ ບໍ່ດົນກໍຢາກລົງໂຕ໊ະ ພໍ່ອຸ້ມລົງແລ້ວ ກໍຍ່າງອອກນອກ ຫ້ອງ ເຂົ້າໄປໃນອີກຫ້ອງນຶ່ງ ຊຶ່ງມີ ປ້າດາຣານັ່ງຢູ່. ອະປຸ໊ ໄປໂຮງການນຳ ພໍ່ເລື້ອຍໆ ນັບແຕ່ໄດ້ສາມສີ່ເດືອນ ພໍ່ກໍເຄີຍເອົາໄປນຳ ໂດຍເອົາໃສ່ອູ່ພາຍ ຂຶ້ນໄປເທິງຫ້ອງການ. ຫມູ່ຄູ່ຂອງພໍ່ທຸກຄົນຮັກອະປຸ໊ ແລະຢາກອຸ້ມຢາກ ຢອກສະເຫມີ. ອະປຸ໊ ບໍ່ຢ້ານຄົນ ບໍ່ຂີ້ໄຫ້ ໃຜອຸ້ມກໍໄດ້ ແຕ່ບໍ່ຢູ່ນຳດົນ ມັກປີນ ລົງ. ອອກຈາກໂຮງການ ພໍ່ພາໄປບ້ານປ້າດາຣາ ຢູ່ຂ້າງກົມວິທະຍຸ ພັກຢູ່ຈົນຄ້າຍແລງ ພໍ່ພາກິນເຂົ້າສວາຍທີ່ບ້ານປ້າ ແລະພາເບິ່ງກະຕ່າຍ. ບ້ານປ້າມີກະຕ່າຍຫລາຍ. ອະປຸ໊ຍືນຊີ້ມືໃສ່ກະຕ່າຍ ກະຕ່າຍທັງນ້ອຍ ແລະໃຫຍ່ 7-8 ໂຕ ຫຸ້ມມາຍືນໃກ້ໆ ອະປຸ໊ເດ່ມືໃສ່ຊິຈັບ ກະຕ່າຍຫລີກຫ່າງອອກໄປ ອະປຸ໊ ຍ່າງນຳໄປ ທັງຮ້ອງ "ແຈ່ະໆ" ຫລື "ຈ່າຍໆ" ອະປຸ໊ ຢູ່ທ່າມກາງກະຕ່າຍ ດ້ວຍຄວາມຮູ້ສຶກຕື່ນເຕັ້ນດີໃຈ ທັງຫົວທັງຮ້ອງ ເຮັດໃຫ້ ລຸງວົງ ປ້າດາຣາ ແລະຫມົດທຸກຄົນໃນເຮືອນມ່ວນໄປນຳ.

**24 ທັນວາ 1978**

ເປັນວັນອາທິດ ອະປຸ໊ຕື່ນກ່ອນພໍ່ແລ້ວເອົານິ້ວມືມາຈີ້ຕາຈີ້ດັງ ເອົານິ້ວມືນ້ອຍໆ ແຍ່ເຂົ້າຮູດັງພໍ່ ທັງສົ່ງສຽງ "ແຈ່ະຈະ" ພໍ່ປ່ຽນ ຜ້າອ້ອມໃຫ້ ເພາະອະປຸ໊ ຍ່ຽວປຽກຫລາຍ ແລະຊອດໃສ່ບ່ອນນອນ, ຫລັງຈາກນັ້ນ ກໍນອນຢອກກັນຈົນເກືອງຟ້າແຈ້ງ ສວາຍສົມຄວນ ແລ້ວພໍ່ຈັດການ ລ້າງຫນ້າລ້າງຕາໃຫ້ ຕໍ່ມາກໍປ້ອນເຂົ້າ. ອະປຸ໊ກິນເຂົ້າພຽງຫນ້ອຍດຽວ ອາດເປັນເພາະອາຫານບໍ່ແຊບ. ພໍ່ອຸ່ນຂົ້ວຊີ້ນງົວ ທີ່ເຮັດແຕ່ແລງວານນີ້ສູ່ກິນ. ສວາຍມາ ພໍ່ຊັກຜ້າອ້ອມ ແລະເຄື່ອງນຸ່ງອະປຸ໊ ເຕັມຊາມໃຫຍ່, ສ່ວນອະປຸ໊ ຫລິ້ນຢູ່ໃກ້ໆ ຈັບນັ້ນຈັບນີ້ ບາງເທື່ອຈັບຫລິ້ນສະບູກ້ອນ ບາງ

ເທື່ອກໍຈັບ ເສື້ອຜ້າ ທີ່ພໍ່ແຊ່ໄວ້ໃນຊາມນຶ່ງ ພໍ່ຕ້ອງຮ້ອງ "ຢ່າ" ໃສ່ເລື້ອຍໆ. ເມື່ອໄດ້ຍິນສຽງຮ້ອງໃສ່ ອະປຸ໊ຢຸດ ເບິ່ງໜ້າພໍ່ ແລ້ວກໍເຊົາຫລິ້ນ ບໍ່ດົນກໍຫລິ້ນໃຫມ່ອີກ.

ເກືອບທ່ຽງ ພໍ່ພາອະປຸ໊ໄປບ້ານບ້າລັດສະຫມີ ທີ່ຄຸ້ມນາໄຮ່ດຽວມີບ້າ ວິລະພົນໄປນຳ. ຢູ່ບ້ານນີ້ ອະປຸ໊ ມີຫມູ່ຫລິ້ນນຳຫລາຍ ສະນຸກແລ່ນບ່ອນນັ້ນບ່ອນນີ້ ໄປກັບຫມູ່. ມື້ນີ້ ລຸງວົງກັບປ້າດາຣາກໍມາເຮັດວຽກເບິ່ງແຍງສວນ ຢູ່ຄຸ້ມນາໄຮ່ດຽວ ເລີຍກືໂອກາດຊຸມແຊວພັນກະຢໍ່ ແຊບຫລາຍ. ສ່ວນອະປຸ໊ ກິນເຂົ້າປຽກ ໂດຍມີສຸຣະພີ ເປັນຜູ້ປ້ອນ. ຫລິ້ນຢູ່ບ້ານນີ້ຈົນຫ້າໂມງປາຍພໍ່ກໍພາກັບຄືນບ້ານ.

ບ້າຣັດຕະນາເຮັດແກງຫມູໃສ່ຜັກກາດ ອະປຸ໊ກິນເຂົ້າຫລາຍກວ່າທຳມະດາ ແລະມີອາການມ່ວນຊື່ນ ຫ້າວຫັນຕະຫລອດທົ່ວຄ່ຳ ພໍ່ເຊັດຕົວໃຫ້ ແລະປ່ຽນເຄື່ອງນຸ່ງ ອະປຸ໊ນອນຫລິ້ນຢູ່ຄາວນຶ່ງແລ້ວກໍມ້ອຍຫລັບໄປ.

***26 ທັນວາ 1978***

ຕື່ນເຊົ້າມາ ພໍ່ເອົາອະປຸ໊ລ້າງຫນ້າລ້າງຕາລ້າງກົ້ນດ້ວຍນ້ຳອຸ່ນເອົາກ້ວຍໃຫ້ກິນນຶ່ງ ຫນ່ວຍຊຳຊາກ້າກິນເຂົ້າເຊົ້າ. ພໍ່ຈັດແຈງເອົາຊີ້ນງົວມາຊອຍແລ້ວຂົ້ວໃສ່ນ້ຳຊະອີ໊ວ ສຸກແລ້ວກໍປ້ອນອະປຸ໊. ພໍ່ເສຽເວລາສົມຄວນໃນການປ້ອນເຂົ້າ ເພາະອະປຸ໊ອ້າກິນຄຳນຶ່ງແລ້ວ ມັກຍ່າງເລາະຫັ້ນເລາະຫນີ້ ແລ້ວຈຶ່ງມາອ້າເອົາເຂົ້າຄຳໃຫມ່. ອະປຸ໊ອ້າເອົາເຂົ້າຄືດຽວກັບລູກນົກອ້າປາກຮັບເອົາເຫຍື່ອຈາກແມ່ຂອງມັນ. ຕໍ່ຈາກນັ້ນ ພໍ່ກໍຊົງນົມໃສ່ຂວດນົມໄວ້ໃຫ້ກິນ ຫລັງຈາກກິນເຂົ້າເຊົ້າຜ່ານໄປແດ່ເລັກນ້ອຍ. ກວ່າຈະໄດ້ໄປການກໍສວາຍຫລາຍແລ້ວ. ຢູ່ໂຮງການ ອະປຸ໊ກິນນົມແລ້ວ ບໍ່ຍອມຫລັບຄືທຸກມື້. ອະປຸ໊ ຫລິ້ນນຳລູກບ້າດວງຈັນ ຕໍ່ມາກໍຢູ່ນຳປ້າດາຣາແລະຍ່າງເກາະມືບ້າເຫລົ່າຄຳ ໄປຫລິ້ນຫ້ອງນັ້ນຫ້ອງນີ້. ເລີກການ ຕອນສວາຍ ພໍ່ພາກັບບ້ານ ອະປຸ໊ ນັ່ງຫລັບມາໃນລົດ. ພໍ່ໃຊ້ມືຂວາຊູຄາງໄວ້ມືຊ້າຍກຳພວງມາໄລລົດ. ເມື່ອມາຮອດບ້ານ ອະປຸ໊ ຫລັບຕໍ່ອີກບຶດດຽວ

ກໍຕື່ນ ພໍ່ເອົານ້ຳໄປໃຫ້ແບ້ກິນຢູ່ສອນ ກໍໄດ້ຍິນສຽງຮ້ອງໄຫ້ຂຶ້ນແລ້ວ. ພໍ່ຮີບຂຶ້ນເທິງເຮືອນອຸ້ມເອົາ ແລະແກ້ເສື້ອກັບຫນາວໃຫ້ເພາະອາກາດຕອນສວາຍ ຮ້ອນສົມຄວນ. ຕໍ່ມາເຮັດອາຫານໃຫ້ກິນຕອນທ່ຽງ ສ່ວນອະປຸ໊ຫລິ້ນນ້ຳ ຂະນະທີ່ພໍ່ລ້າງຫມໍ້ຈືນຊີ້ນຢູ່ນັ້ນ ອະປຸ໊ເຂົ້າໄປໃນຫ້ອງນ້ຳເອົາຂັນໂຄເລລົງໃນໄຫອຸ່ມ ປ່ອນຫົວສຸບລົງໃນໄຫ ເພື່ອຢື້ໃຫ້ເກິງຂັນ, ພໍ່ຮູ້ສຶກເປັນຫ່ວງກໍແນມເບິ່ງເລື້ອຍໆ. ຄາວນຶ່ງອະປຸ໊ຍິ່ງຢີຕີນຂຶ້ນ ເພື່ອງົມໃຫ້ເກິງຂັນໃນໄຫ ຫົວເລີຍສະຫລຸບລົງ ຕີນຊີ້ຂຶ້ນເທິງ. ພໍ່ຟ້າວແລ່ນໄປເອົາຂຶ້ນຈາກໄຫ ຫົວອະປຸ໊ ປຽກອອບຍອບແລ້ວກໍຮ້ອງໄຫ້ແວ້ໆ! ພໍ່ເອົາຜ້າເຊັດຜົມແລ້ວເອົາເຄື່ອງເປົ່າຜົມ ເປົ່າໃຫ້ຈົນແຫ້ງ ຕໍ່ມາຈຶ່ງໄດ້ປ້ອນເຂົ້າ. ພໍ່ຮູ້ສຶກບໍ່ສະບາຍໃຈໃນເຫດການທີ່ເກີດຂຶ້ນ ແບບຄຶດສົມມຸດວ່າ ຖ້າໃນຂະນະທີ່ອະປຸ໊ ເອົາຫົວສະຫລຸບລົງໃນໄຫ ຊຶ່ງມີນ້ຳເຄິ່ງອຸ່ມ ຊີ້ຕີນຂຶ້ນ ແກ່ແດ່ ແຕ່ພໍ່ຊ້ຳຜັດບໍ່ຢູ່ໃກ້ຫັ້ນ ແລະເວລາຜ່ານໄປຈັກຫ້ານາທີ ຫລື ໄວກວ່ານັ້ນ ຈັກ 2-3 ນາທີ... ໂອ້ຍ ພໍ່ບໍ່ຢາກຄຶດໃຫ້ມັນບາດຫົວໃຈ. ພໍ່ຈັດການກອກນ້ຳໃນໄຫອອກຫມົດ ແລ້ວໄປເຮັດນົມໃຫ້ດູດສຳລັບຕອນບ່າຍ. ພໍ່ຫວັງວ່າ ອະປຸ໊ ຈະນອນຫລັບຕອນດູດນົມ ແຕ່ບໍ່ເປັນດັ່ງຄຶດ ອະປຸ໊ກັບຫນ້າຊື່ນຕາບານ ເວົ້າອອກສຽງ "ກະຈ້ອກກະແຈັກໆ" ພໍ່ເລີຍອຸ້ມລົງໄປຊານລຸ່ມ ແລ້ວຈັດການຊັກເຄື່ອງ ອະປຸ໊ ເອົາມືງົມເຄື່ອງໃນຊາມບາງເທື່ອຈັບໄດ້ກໍຟາດເປະປະ ຈົນພໍ່ໄດ້ຮ້ອງຮ້າຍໃສ່. ພໍ່ບໍ່ໄດ້ກິນເຂົ້າສວາຍເລີຍ ຊັກເຄື່ອງແລ້ວ ພໍ່ກໍຖູເຮືອນທັງຫ້ອງໃນຫ້ອງນອກ ເພາະຂີ້ຝຸ່ນຫລາຍ ເນື່ອງຈາກຍາມແລ້ງ ແລະບ້ານເຮົາຢູ່ໃກ້ທາງດິນແດງລົດໃຫຍ່ແລ່ນໄປມາ ກໍມີຂີ້ຝຸ່ນໄງ່ກຸ້ມ. ເວລາພໍ່ຖູເຮືອນ ອະປຸ໊ເອົາມືງົມລົງຊາມນ້ຳເປື້ອນ ພໍ່ຮ້ອງຮ້າຍໃສ່ແຮງໆ ອະປຸ໊ເລີຍໄຫ້ນ້ຳຕາບອງຫນ້າຄາວດຽວກໍເຊົາໄຫ້ ສ່ວນພໍ່ກໍຖູເຮືອນໄປເລື້ອຍໆຈົນແລ້ວ. ຕໍ່ຈາກນັ້ນພໍ່ອາບນ້ຳໃຫ້ອະປຸ໊ ແຕ່ງຕົວໃຫ້ແລ້ວ ກໍພາລົງໄປຫລິ້ນນຳແມ່ໃຫຍ່ຫວດ.

ພໍ່ລົງມືຂຽນບັນທຶກນີ້ເວລາ 22.00ໂມງ ອະປຸ໊ ນອນຫລັບສອດໆ

ຢູ່ ຄອນໆກໍພິກໄປປີ້ນມາ ທາງປາກອ້າແດ່ເລັກນ້ອຍ ສິບແຫວງໍຂຶ້ນໄປຫາຣູດັງ ພໍ່ເອົານິ້ວມືເຕາະທີ່ສິບແຫວ ເບື້ອງເທິງສອງສາມບາດ ອະປຸ໊ເຫນັງຕຶງແລ້ວກໍພິກໄປເບື້ອງນຶ່ງ ພໍ່ເອົາສິ້ງຂາຍາວມານຸ່ງໃຫ້ຕື່ມ ເພາະເດິກເຂົ້າມາ ອາກາດຫນາວຂຶ້ນ ແລະພໍ່ກໍລົ້ມຕົວລົງນອນ ຫອມແກ້ມອະປຸ໊ ແລ້ວກໍຫລັບຕາ.

***ວັນຈັນທີ 13 - 8 1979***

ແມ່ໃຫ້ກໍາເນີດແກ່ລູກຜູ້ທີສອງ ຄືເປັນນ້ອງອະປຸ໊ ເປັນເພດຍິງອີກ. ເກີດເວລາ10. ໂມງ 10 ນາທີທີ່ໂຮງພະຍາບານມະໂຫສົດ. ແມ່ເລີ່ມຕົ້ນເຈັບທ້ອງແຕ່ວັນເສົາ ທີ11ສິງຫາ. ພໍ່ພາແມ່ໄປໂຮງຫມໍໃນຕອນເຊົ້າວັນທິດ. ຕະຫລອດມື້ແມ່ມີອາການເຈັບປວດທໍລະມານ ຫລັບບໍ່ໄດ້ຕະຫລອດຄືນວັນອາທິດ, ພໍ່ນອນຢູ່ຂ້າງຕຽງແມ່ ແລະຊວາດຕື່ນເລື້ອຍໆ ເພາະສຽງແມ່ໂອ່ຍຄາງ. ເຊົ້າວັນໃຫມ່ມາພໍ່ພາແມ່ຍ່າງເລາະໄປ ເລາະມາ ຕາມຄໍາແນະນໍາຂອງນາງຫມໍ ຊື່ ວົງສິດ ຊຶ່ງແມ່ນເພື່ອນຂອງແມ່ ເພື່ອໃຫ້ອອກໄວຂຶ້ນ. ເວລາເກົ້າໂມງປາຍ ແມ່ມີອາການເຈັບຫນໍ່າໆຂຶ້ນ ວົງສິດ ເອົາແມ່ເຂົ້າໄປໃນຫ້ອງອອກລູກ ພໍ່ອອກມາຢູ່ຂ້າງນອກ ຢືນເຝົ້າດ້ວຍຄວາມເປັນຫ່ວງ. ເວລາຜ່ານໄປ ມີນາງຫມໍອີກຄົນນຶ່ງ ອອກມາບອກພໍ່ວ່າ: ອອກແລ້ວ ເປັນຜູ້ຍິງ. ພໍ່ຮູ້ສຶກໂລ່ງໃນຫົວໃຈ ທີ່ແມ່ ພົ້ນອັນຕະລາຍ ແລະດີໃຈທີ່ໄດ້ນ້ອງຂອງອະປຸ໊. ພໍ່ຄອງກ້າຈົນນາງຫມໍອຸ້ມແອນ້ອຍ ອອກມາໃຫ້ເບິ່ງ ແລ້ວອຸ້ມຕໍ່ໄປໄວ້ທີ່ຫ້ອງ ສໍາລັບເດັກເກີດໃຫມ່. ພໍ່ກັບຄືນໄປຫ້ອງ ແລ້ວຈັດແຈງມ້ຽນເຄື່ອງ ເພື່ອຍ້າຍໄປຢູ່ອີກຫ້ອງນຶ່ງ ຈັດການປູຕຽງ ແລ້ວດົນເຕີບແມ່ກໍກືກນໍາມາຍັງຫ້ອງນອນໃຫມ່. ຄໍ່າມາພໍ່ນອນເຝົ້າແມ່ຕາມເຄີຍ ແອນ້ອຍເກີດໃຫມ່ ກໍກືກນໍາມາໃຫ້ແມ່ຕາມລະບຽບ (ໃຫມ່) ຂອງໂຮງຫມໍ.

ວັນພະຫັດ 16 ສິງຫາ1979 ພໍ່ກັບມາແຕ່ໂຮງຫມໍແຕ່ເຊົ້າ ເພື່ອເຮັດວຽກບ້ານ. ແມ່ກໍານົດອອກໂຮງຫມໍມື້ນີ້ ໃນຕອນບ່າຍ. ພໍ່ແວ່ຊື້ເຂົ້າ

ຈື່ຫວານ ແລະອ້ອຍສອງທ່ອນມາຕ້ອນອະປຸ໊ ຊຶ່ງຢູ່ນຳປ້າເສົາວະພາ(ປື໊ດ). ອະປຸ໊ດີໃຈທີ່ເຫັນພໍ່ກັບມາບ້ານ ແລ່ນມາໃສ່ ເດ່ສອງແຂນມາກອດຄໍພໍ່. ພໍ່ເຮັດວຽກບ້ານ ເອົາແບ້ແລະງົວໄປມັດລ່າມໃສ່ຫຍ້າ ເຮັດແລ້ວ ກໍຢອກຫົວກັບອະປຸ໊. ກ່ອນທ່ຽງ ພໍ່ຂັບລົດພາອະປຸ໊ ກັບປື໊ດ ໄປຮັບເອົາແມ່ ແລະແອນ້ອຍທີ່ໂຮງໝໍ ພາກັນກິນເຂົ້າສວາຍຢູ່ໂຮງໝໍ, ພໍ່ໄປຊື້ເຂົ້າແລະຂອງກິນສຸກມາຕື່ມ, ກວ່າຈະໄດ້ເອກະສານທີ່ຈຳເປັນສຳລັບການອອກໂຮງໝໍກໍເປັນເວລາບ່າຍສາມໂມງປາຍແລ້ວ ເກືອບສີ່ໂມງ ຈຶ່ງໄດ້ພາກັນອອກໄປ.

ປ້າສາຄອນມາລັດກ້າຢູ່ບ້ານ ເພື່ອຊົມເຊີຍແອນ້ອຍເກີດໃຫມ່. ປ້າໄປຫາຢູ່ໂຮງໝໍ ແຕ່ຫວິດຫລັງກັນໜ່ອຍນຶ່ງຈຶ່ງໄດ້ນຳມາຫາຢູ່ບ້ານ. ອະປຸ໊ ຫວງນ້ອງ ນອກຈາກແມ່ແລ້ວ ບໍ່ຢາກໃຫ້ຜູ້ອື່ນອຸ້ມເອົານ້ອງ. ບາງເທື່ອ ອະປຸ໊ວ່າ "ນ້ອງແມ່" ບາງເທື່ອ ວ່າ "ນ້ອງອະປຸ໊". ເພື່ອບໍ່ໃຫ້ຫຍຸ້ງວົນນ້ອງຫລາຍ ພໍ່ເອົາອະປຸ໊ໄປເບິ່ງງົວທີ່ມັດໄວ້ແຄມທາງໜ້າບ້ານ, ພໍ່ເອົາງົວເລັມຫຍ້າ ແກ້ເຊືອກແລ້ວເອົາສົ້ນເຊືອກໃຫ້ອະປຸ໊ຈັບໄວ້ຈົນເກືອບຄ່ຳ ຈຶ່ງພາກັນເຂົ້າໃນເຮືອນ.

**ວັນທີ 14 - 10 - 1979**

ເປັນວັນອາທິດ. ພໍ່ຢູ່ບ້ານກັບແອນ້ອຍ ອະປຸ໊ກັບແມ່ໄປທ່ຽວບ້ານຍ່າທີ່ຂຸນຕາ. ກ່ອນລົງເຮືອນ ອະປຸ໊ຮ້ອງບອກພໍ່ວ່າ " ອະປຸ໊ໄປ (ຕະ) ຫລາດຊື້ໜົມໃຫ້ພໍ່ເດີ..." ພໍ່ເຮັດວຽກສວນແລ້ວກໍຂຶ້ນມາເອົາແອນ້ອຍ. ມື້ນີ້ແອນ້ອຍ ຫລື "ປຸ້ຍ" ອາຍຸຄົບສອງເດືອນແລ້ວ ຊື່ແທ້ແມ່ນ ດວງແຂຊຶ່ງພໍ່ໃຫຍ່ເປັນຜູ້ຕັ້ງໃຫ້. ພໍ່ເອົາດວງແຂ ນອນເທິງຕຽງແລ້ວ ພໍ່ກໍເຮັດວຽກພາຍໃນເຮືອນ ຈົນຮອດທ່ຽງພໍ່ກໍຊົງນົມໃຫ້ກິນ. ຈາກນັ້ນ ພໍ່ກໍເຮັດວຽກຊັກເຄື່ອງ ປ່ອຍດວງແຂ ຢູ່ຜູ້ດຽວ ດວງແຂຮ້ອງໄຫ້ ດົນສົມຄວນແລ້ວກໍຢຸດໄປເອງ. ຕອນບ່າຍສອງໂມງ ແມ່ກັບມາເພື່ອເອົານົມ ໃຫ້ດວງແຂກິນ ສ່ວນອະປຸ໊ ປະໄວ້ບ້ານຍ່າ. ຄ້າຍແລງ ພໍ່ລອງຊິດເບັດ ເອົາປາ

ຢູ່ສະ ແຕ່ໂຊກບໍ່ດີ ຄືໄດ້ປານິນພຽງຕົວດຽວ ພໍ່ເລີຍປ່ອຍລົງນ້ຳຄືນ.

**ວັນທີ 18/10/79**

ພໍ່ໄປການ ຮອດ 9.30 ກໍຟ້າວກັບຄືນບ້ານ ເພື່ອໃຫ້ແມ່ໄປສອນໜັງສືທີ່ໂຮງຮຽນອຸດົມວຽງຈັນ. ຫລັງຈາກຈຸບສອງເດືອນ ທີ່ໄດ້ພັກຜ່ອນຫລັງອອກລູກແລ້ວແມ່ກໍຕ້ອງໄປການ. ຄອບຄົວເຮົາເລີຍມີບັນຫາຫຍຸ້ງຍາກຫລາຍເພາະບໍ່ມີໃຜເບິ່ງພວກລູກ, ຈຳເປັນພໍ່ກັບແມ່ຕ້ອງໄດ້ຜັດປ່ຽນກັນໄປການ. ພໍ່ອຸ້ມທັງອະປຸ໊ ອຸ້ມທັງແອນ້ອຍ. ອະປຸ໊ ບໍ່ສະບາຍຄີງຮ້ອນເປັນໄຂ້ ແລະມີຕຸ່ມອອກ ຕາມລີ້ນແລະຮີມສົບ. ເມື່ອຍອຸ້ມພໍ່ກໍພານັ່ງລົງ. ພໍ່ມີວຽກຈຳເປັນຕ້ອງເຮັດ ຄືແປເອົາຂໍ້ມູນຈາກຂ່າວຕ່າງປະເທດ ເພື່ອເອົາປະກອບບົດຂຽນລົງໃນ ນ.ສ.ພ ວັນນະສິນ. ດັ່ງນີ້ພໍ່ເອົາປຶ້ມມາແປ ໂດຍມີລູກໆນັ່ງຢູ່ຕິດຂ້າງຕິດແອວ. ຕໍ່ມາແອນ້ອຍ ກໍຫລັບ ພໍ່ມີຄວາມສະດວກຂຶ້ນແດ່ ແຕ່ກໍຢູ່ໃກ້ຊິດກັບອະປຸ໊ ຕະຫລອດເວລາ. ຈົນເກືອງທ່ຽງ ແມ່ກໍກັບມາແຕ່ການ.

**ວັນທີ 22 - 10 -1979**

ພໍ່ກັບແມ່ ຕົກລົງໄປການທັງສອງ ຈຶ່ງເອົາພວກລູກໄປຝາກ ຄືແມ່ອູ້ມເອົາແອນ້ອຍ ກົ້ງຄັນຮົ່ມອອກໄປເຮືອນ ແຄມທາງຫລວງ ຕໍ່ໜ້າວັດອູບມຸງ ບ່ອນທີ່ແມ່ໃຫຍ່ (ມາລີ) ຢູ່ ຂາຍເຄື່ອງ ເພື່ອຝາກແອນ້ອຍ, ສ່ວນພໍ່ຂີ່ລົດຖີບ ມືຂວາອຸ້ມ ອະປຸ໊ ອອກໄປຮອດບ່ອນ ແມ່ໃຫຍ່ຢູ່ຈາກນັ້ນແມ່ກໍອຸ້ມອະປຸ໊ ຊ້ອນທ້າຍລົດຖີບທີ່ພໍ່ເປັນຜູ້ຖີບ ມຸ່ງໜ້າໄປຫາເຮືອນຍ່າທີ່ຄຸ້ມຂຸນຕາ ແຕ່ປະກົດວ່າບໍ່ມີໃຜຢູ່ເພື່ອຮັກສາ ອະປຸ໊ ນອກຈາກຍ່າພໍ່ກັບແມ່ ເລີຍພາກັນຂີ່ລົດຖີບໄປຮອດໂຮງການພໍ່ ຕໍ່ຈາກນັ້ນ ແມ່ເອົາລົດຖີບຂີ່ຕໍ່ໄປການຄົນດຽວ. ອະປຸ໊ ຢູ່ກັບພໍ່ທີ່ໂຮງການ ພໍ່ເຮັດວຽກໄດ້ໜ້ອຍດຽວ ແລ້ວກໍອຸ້ມອະປຸ໊ ໄປຕະຫລາດເຊົ້າ (ຕໍ່ໜ້າໄປສະນີ) ບ່ອນລົດເມປະຈຳທາງ. ພໍ່ພາອະປຸ໊ ຂີ່ລົດເມກັບຄືນບ້ານ. ກ່ອນທ່ຽງ ແມ່ກໍຂີ່ລົດຖີບມາຮອດ ແລ້ວເອົາແອນ້ອຍອຸ້ມຍ່າງທ່າມກາງແດດທ່ຽງຟ້າ ຈາກ

ບ່ອນແມ່ໃຫຍ່ຢູ່ມາຫາບ້ານຂອງພວກເຮົາ. ພໍ່ອຸ້ມອະປຸ໊ ຂີ່ລົດກີບລົງມາຮອດກ່ອນແມ່ ເລັກນ້ອຍ. ຜູ້ໃດກໍເມື່ອຍອິດອ່ອນ. ພັກຜ່ອນຫນ້ອຍນຶ່ງແລ້ວແມ່ກໍຈັດການແຕ່ງກິນ ສ່ວນພໍ່ເບິ່ງແຍງອະປຸ໊ ກັບແອນ້ອຍ.



*ດວງແຂ (ປຸ້ຍ)*

*ສູ່ຂວັນ ກ່ອນໄປລັດເຊຍ 1981*



# 8. ເລື່ອງຕະຫລົກ ຂອງ ອຸທິນ ບຸນຍາວົງ

ເກັບກຳຈາກ ວັນນະສິນ ສະບັບຕ່າງໆ :

## *1. ເຫມັ້ນຫົວການເມືອງ*

ເຫມັ້ນສອງໂຕມາພົບກັນ ແລ້ວກໍເຈລະຈາໂດຍບໍ່ຕ້ອງນັ່ງໂຕ໊ະປະຊຸມ:

ເຫມັ້ນໂຕ ທີ1: ເອີ້ຍ! ສົງຄາມເຢັນຜ່ານພົ້ນໄປແລ້ວ ພວກເຮົາມາລົດອາວຸດກັນເທາະ!

ເຫມັ້ນໂຕ ທີ2: ຈຳເປັນຢູ່ບໍ? ເຮົາມີແຕ່ລູກສອນໄຟທຳມະດາ ບໍ່ໄດ້ຕິດຫົວນິວເຄລຽນ່າ

ເຫມັ້ນໂຕ ທີ1: ຈຳເປັນ, ເຖິງບໍ່ຕິດນິວເຄລຽ ກໍອາດຕິດຫນ້ອງທີ່ເປັນພິດຮ້າຍແຮງ

ເຫມັ້ນໂຕ ທີ2: ເຮົາມີໄວ້ປ້ອງກັນຕົນເອງ, ກ້າກອນອອກໄປ ສັດຕູກໍໄດ້ໃຈ ເພາະຕົນໂຕເຮົານີ້ ມະນຸດມັກກິນແທ້ເດີ, ຂໍລົ້ມເລີກການເຈລະຈາ.

## *2. ສັງສັນເພື່ອອັດ(ປາກ)ກັນ*

ສ່ຽວຫນຶ່ງມີເສດຖະກິດດີ ເງິນເຕັມກົງ ເລີຍຊື້ເບຍຫລາຍແກ້ວໄປຊຸມແຊວກັບສ່ຽວອີກຜູ້ຫນຶ່ງ ຊຶ່ງບໍ່ພົບພໍ້ກັນດົນ.

ສ່ຽວຫນຶ່ງ: ເຮົາຊື້ເບຽມາດື່ມສັງສັນ ໂຕເຮັດຫນ້າທີ່ບໍລິການ

ສ່ຽວສອງ: ຕົກລົງ ເຮົາຊິເຫຍັ້ນໃຫ້ດື່ມ

ສ່ຽວຫນຶ່ງ: ເຫຍັ້ນເບຽຕ້ອງຄ່ອຍໆ ວ່ຽງຈອກຫນ້ອຍນຶ່ງ ເພື່ອບໍ່ໃຫ້ຟອດມັນລົ້ນ.

ສ່ຽວສອງ: ໂຕຊິມາສອນແຂ້ລອຍນ້ຳຫວະ ຢາກຫົວ!

ສ່ຽວໜຶ່ງ: ຟັງກ່ອນ! ບໍ່ແມ່ນເຮົາມາສອນແຂ້ລອຍນ້ຳ
ແຕ່ເອົານ້ຳມາໃຫ້ແຂ້ລອຍ.

### 3. ເລື່ອງຂອງວາດຢ່າງ

ຫລັງຈາກທີ່ໄດ້ຮັບຄັດເລືອກເປັນຕົວເດັ່ນໃນ ໜ່ວຍປ້ອງກັນຂອງຕາແສງແລ້ວ ທ້າວຕີ ກໍຍ່າງກັບບ້ານ ດ້ວຍທ່າທາງອົງອາດ ກ້າວກຶງເລີຍກຶກໝູ່ ຜູ້ຂີ້ອິດສາ ເວົ້າເຍີ້ຍ:

ຜູ້ອິດສາ: ຄືມາຍ່າງເປັນກ້າວແທ້ !
ທ້າວຕີ: ພໍ່ໂຕພາຍ່າງເປັນຄືບຫວະ ?

### 4. ລາຍງານແບບກົນຈັກ

ແພດເຝິກຫັດລາຍໜຶ່ງຂຽນບົດລາຍງານການປິ່ນປົວຄົນເຈັບຊຶ່ງມີອາການໜັກຂັ້ນຊອມໃຈ, ແລ້ວກໍສະຫລຸບຕອນທ້າຍວ່າ:

ຈຸດດີ : ຄົນເຈັບຍັງຫາຍໃຈ ພໍງາບໆຢູ່
ຈຸດອ່ອນ: ຄວາມດັນຫລຸດລົງເກືອບຮອດສູນ,ຜູ້ກ່ຽວຈຶ່ງອ່ອນເພຽຫລາຍ.
ກອດກອນບົດຮຽນ: ສັກຢາເຂົ້າເສັ້ນຍາກຫລາຍ ຕ້ອງກອດເຂັມຫລາຍເທື່ອ, ກອດເທື່ອທີຫ້າ ແລ້ວສັກ ເທື່ອທີ ຫົກຈຶ່ງສຳເລັດ.

### 5. ແຮ່ງເຕັກ

ສາວປາດຸກ: ອ້າຍນີ້ຄືງກົມອອດຫລອດ, ຕິແຕ່ຕົນໂຕເປັນເກັດລາບຊາບ !
ບ່າວປາຄໍ່: ອ້າຍບໍ່ວ່າຫຍັງດອກ ທີ່ນ້ອງມີໜວດ, ຂໍຕິແຕ່ ໝົດຕົນໝົດຕົວນ້ອງ ບໍ່ມີຫຍັງຫຸ້ມ, ໂປ້ຂະໜາດເລີຍ !

### *6. ກອມປິວເຕີ້ ແປໃຫ້*

Hi: ແປວ່າ ສູງ ຫລື ແຮງ

Hi-tech ແປວ່າ ແຮງເຕັກ

ເສດຖະກິດ ຍຸກ Hi-tech ກໍແມ່ນ ເສດຖະກິດ ແຮງເຕັກ.

### *7. ສັດໂລກ ໃນປີ ຄ.ສ. 2000 (ວັນນະສິນ ສິງຫາ 1991)*

ຄວາຍ: ຊິງໂຕແຂງແຮງດີເວີ້ຍ ! ເກີດຈາກຜະສົມທຽມຫວະ ?

ງົວ: ແມ່ນລະ ໂຕກໍລໍ່າສັນຂະໜາດນີ້ ! ຜະສົມທຽມຄືກັນຕີ ?

ຄວາຍ: ຄືກັນ, ວິທະຍາສາດຈະເລີນ ສັດພວກເຮົາກໍຈະເລີນ ທາງຮ່າງກາຍ ແຕ່ມະນຸດຍັງຄືເກົ່າ ເອົາປະຕິເສດເຕັກໂນໂລຢີສະໄໝໃໝ່, ຊູຊີຜະສົມແບບທຳມະຊາດ ຢູ່ຕໍ່ໄປຈັກໜ່ອຍ ຊິດັບແນວ ຍ້ອນໂລກເອດສ໌ຊໍ້າ !

### *ບາງດ້ານ ແຕ່ບັນຫາດຽວ*

ອາການຂອງຜູ້ມີອຳນາດ ສະແດງອອກດ້ວຍພຶດຕິກຳດັ່ງນີ້:

ຜະເດັດການ: ເອົາຫົວ(ຄົນ) ມາໃສ່ເທົ້າ ກໍໄດ້

ລາຊາທິປະໄຕ: ເອົາເທົ້າໄປໃສ່ຫົວ(ຄົນ) ກໍໄດ້

## *ກາບກອນເລື່ອງ*

## ທ້າວເຮືອນສີ່ເສົາສອງຊື່ ຄືດັ່ງອູ່ເດັກນ້ອຍນອນກາງ ຄວາມກ່ອມນອນລູກໃນວາລະຕ່າງໆ ກອນເຊີ້ງນາງດັ້ງ

ເກັບກຳ ໂດຍ ***ສີສະຫລຽວ ສະແຫວງສຶກສາ***

ແຕ່ຄາວຍັງນ້ອຍ ຂ້ອຍມັກຟັງຄຳກາບກອນທີ່ພໍ່ແມ່ ແລະ ຄົນໃນບ້ານເລົ່າເວລາກ່ອມຫລືອອຍເດັກນ້ອຍ ຈຶ່ງຈື່ຈຳເອົາໄດ້ກັບປາກ. ເວລາຜ່ານໄປ ຂ້ອຍຫ່າງເຫີນຫນີໄກຈາກບ້ານ ດົນໆຈຶ່ງໄດ້ເມືອຫາພໍ່ແມ່ ທີ່ນັບມື້ເຖົ້າແກ່ໄປ ໃນທີ່ສຸດ ໂອກາດຈະໄດ້ຍິນໄດ້ຟັງຄຳເວົ້າຄຳອອຍ ຈາກເພິ່ນກໍຫມົດໄປ .

ປະເພນີການດູແລລູກຂອງຊາວຊົນນະບົດ ປ່ຽນໄປຕາມເງື່ອນ ໄຂໃຫມ່ ພໍ່ແມ່ລູກບໍ່ໃກ້ຊິດກັນ ລູກບໍ່ໄດ້ຟັງນິທານຫລືຄວາມອອຍ ຄວາມກ່ອມມ່ວນໆ ເວລາແມ່ອຸ້ມຫລືໄກວອູ່ກ່ອນຈະນອນອີກແລ້ວ, ເວລາ ຝົນບໍ່ຕົກ ຊາວບ້ານກໍບໍ່ໄດ້ເຊີ້ງແມ່ນາງດັ້ງ ຫລື ນາງແມວອີກແລ້ວ ເພາະທຸກຄົນຈະຟັງລຳຫລື ເພງໃນວິທະຍຸຫລາຍກວ່າ. ເວລາຝົນບໍ່ຕົກ ຊົນລະປະທານ ກໍຈະແກ້ໄຂບັນຫາການແຫ້ງແລ້ງ. ບາງບ່ອນທີ່ມີຂໍ້ສະ ດວກ ຜູ້ຄົນພາກັນກໍເບິ່ງໂທລະພາບແລ້ວ ດັ່ງນັ້ນ ເດັກນ້ອຍຮຸ່ນໃຫມ່ ຈຶ່ງ ບໍ່ຮູ້ຄວາມກ່ອມ ແລະກາບກອນອັນມ່ວນໆຂອງຊາວບ້ານ. ພໍ່ແມ່ ແລະ ຊາວບ້ານຮຸ່ນໃຫມ່ ບໍ່ຮູ້ຈັກຄວາມກ່ອມລູກ ແລະກາບກອນປາກເປົ່າອີກ ແລ້ວ.

ດັ່ງນັ້ນ ການນຳເອົາສິ່ງທີ່ຈື່ຈຳປາກເປົ່າມາພິມໄວ້ໃນໂອກາດນີ້ ຈຶ່ງເທົ່າກັບເປັນການສືບອາຍຸຂອງວັນນະຄະດີປາກເປົ່າ ປະເພດນີ້ ຂອງເຮົາໄວ້ອີກລະຍະນຶ່ງ.

ກ່ອນຈະເລົ່າເລື່ອງ ***ທ້າວເຮືອນສີ່ເສົາສອງຂື່*** ພໍ່ກ່າວວ່າ "ແຕ່ກ່ອນ ມີພະຍາອົງໜຶ່ງ ມີເມຍຜູ້ໜຶ່ງຊື່ວ່ານາງເທວີ. ນາງເທວີ ຕາຍກ່ອນຜົວຫລາຍປີ. ພະຍາຜູ້ເປັນຜົວ ໄດ້ເຮັດບຸນທຳທານອຸທິດແກ່ເມຍຜູ້ລ່ວງລັບໄປກ່ອນຫລາຍກອງ. ເມື່ອພະຍາຕາຍໄປ ພະຍາພົບວ່າ ກອງບຸນ ທີ່ຕົນໄດ້ອຸທິດໃຫ້ແກ່ເມຍນັ້ນ ເມຍບໍ່ໄດ້ມາຮັບເອົາ. ພະຍາຈຶ່ງໄດ້ຖາມນຳພະຍາອິນວ່າ ດ້ວຍເຫດໃດເມຍຂອງຕົນຈຶ່ງບໍ່ມາຮັບເອົາກອງບຸນ. ພະຍາອິນ ຕອບວ່າ ເມຍຂອງທ່ານ ມາຮັບເອົາບໍ່ໄດ້ ເພາະນາງຍັງຕົກນະຮົກກັບຊາຍຊູ້.

ເມື່ອຮູ້ແນວນັ້ນ ພະຍາເລີຍແບ່ງບຸນໃຫ້ເມຍສ້ຽວໜຶ່ງ. ບຸນດັ່ງກ່າວ ໄດ້ເຮັດໃຫ້ນາງເມຍຫລຸດອອກຈາກນະຮົກ ແລະໄດ້ກັບມາເກີດເປັນມະນຸດອີກເທື່ອໜຶ່ງ. ນາງໄດ້ເກີດນຳຄອບຄົວອີ່ຕາເຮືອນສີ່ເສົາສອງຂື່ ໝາຍຄວາມວ່າ ຄອບຄົວທຸກຍາກທີ່ສຸດ. ຄອບຄົວດັ່ງກ່າວມີຄວາມສຸກທີ່ເຫັນວ່າລູກສາວເປັນຕາຮັກ.
ກາບກອນຕໍ່ໄປນີ້ ສະແດງເຖິງຄວາມພູມໃຈຂອງຜູ້ເປັນຜົວ:

ຜ້າຕອງຊິ ສີ່ອາວແສນກຸ້ມ
ລາວປຸ້ມໄວ້ ແຄມທ່າຢາເຮືອ
ບາດລາວເມືອ ລືມເສຽຂ້ອຍໄດ້
ເອົາເມືອໄວ້ ຮໍ່ລູກເຮົານອນ
ລາງເທື່ອຫລອນ ຍາມໜາວບໍ່ຊ້າ
ຜ້າປົກກ້າ ອີ່ຕາແສນວັງ
ລາວໄປຢັງ ເອົານົກເປັດນ້ຳ
ຄວາມຄຶດຂ້ອຍ ຊິອອກໄປເອົາ
ມາຮອດເຮົາ ຫຍິບຕິດຫຍິບຕໍ່

ເສື້ອແຕ່ພໍ່ ແຂນກິ້ນເຮົາຍັງ
ໃຫ້ເຈົ້າຟັງ ລູກເຮົານອນຕື່ນ
ອຸ້ມຍໍຍື່ນ ໃສ່ປູໃສ່ບົມ
ພໍປະສົມ ໃຫ້ຫຍ້ຳເອົ້າປ້ອນ
ເຈົ້າຢ່າຮ້ອນ ປະກາບສິ່ງສັນໃດ
ອ້ອຍຊິໄປ ຫາມັນທັງເອົ້າ
ໃຫ້ສູເຈົ້າ ແມ່ລູກຍອມກິນ
ເພິ່ນນິນທາ ວ່າເຮົາຂີ້ຄ້ານ
ເພິ່ນກ່າວຕ້ານ ວ່າເຮົານອນເວັນ
ບາດເພິ່ນເຫັນ ລູກເຮົາ(ຜູ້ດີ)ຢາກຈູບ
ມືລູບໄລ້ ເກງແງະເກງແງນ
ແຂນພັນແພນ ສະເຫມີດັ່ງກ້ານກ້ວຍ
ນີ້ວມືສ້ວຍ ເຫມືອນຮາກກ້ວຍຍວນ
ໃຫຍ່ສົມຄວນ ຊິໃຫ້ເປັນເມຽເຈົ້າ
ຮ່າສອງເກົ້າ ສຸກຍ້ອນອີ່ຫລີ
ຄາວຊິມີ ຈັ່ງແມ່ນຮ່ານັ້ນ
ເວົ້າຈ້ອຍຈັ້ນ ເມຽຊື່ນຊົມຜົວ...

**ເວລາຂີ່ໂອ້ນໂນ້ນຊາ (ສິງຊ້າ )**
**ແມ່ມັກເລົ່າວ່າ :**

ໂອ້ນໂນ້ນຊາໄຫມ ໄປໄກວກາບຕາດ
ໄປອາບນ້ຳບໍ່ ໄປກໍ່ນ້ຳບິນ
ໄປກິນນ້ຳສ້າງ ໄປລ້ອງຊ້າງ

ຢູ່ຟຸ່ມອຸມຟຸມ
ອິມຫມາກໄຂ່ຫອຍ    ຕ້ອຍຕີຕ້ອຍຕີ່ງ
ປີ່ນ້ອຍສີຊໍ    ລະອໍລະອຽດ
ດອກຈຽດ    ພວມຫວານ
ນ້ຳຕານ    ພວມພ້າວ
ສຸກກ້ວຍງ້າວ    ສຸກອອກຄາເຄືອ
ສຸກຫມາກເຂືອ    ສຸກອອກຄາຂວັ້ນ
ຫລື
ໂອ້ນໂນ້ນຊາ    ອີ່ຕາແປ້ນກີ່
ເດືອນສິບສີ່    ເຂົາວ່າດອກທອງ
ເດືອນສິບສອງ    ເຂົາວ່າດອກງິ້ວ
ດອກງິ້ວບານ    ດອກຈານເຮື່ອ
ດອກເດື່ອ    ຕັ້ງກາງບ້ານສາເລີງ
ສາເລີງຫິວ    ສາເລີງຫາງ
ເກັບດອກຜາງ    ໃສ່ຕ້າງອ້າຍບ່າວ
ອ້າຍບ່າວ    ໄປແທງຫອກ
ນົກຈອກ    ໄປແທງຮັງ
ໄດ້ຮັງໃດ    ໄດ້ຮັງໄກ່
ຕັດໄມ້ໄລ່    ໄປໃສ່ກົ້ນກາ
ມາລາຫາສູ້    ຊູ້ເຈົ້າເດ້ ກີແພດອກຄຳ
ຊື້ຊ້າງມາຂີ່    ນຸ່ງສິ້ນມີ່
ສັງມາງາມ    ເຕາະເຢາະ
ນຸ່ງສິ້ນເກາະ    ສັງມາງາມເອືອເຄືອ
ເຊື້ອນາຫວາຍ    ອ້າຍບໍ່ຕາຍກາມຫາຫນ້ານ້ອງ
(ຕໍ່ໄປ ຈື່ບໍ່ໄດ້)

ຫລື

ໂອ້ນໂບ້ນຊ້າ ອີ່ຕາຕົກຕຸ່ມ
ໄທເມືອງລຸ່ມ ເຂົາໄດ້ກິນແຕງ
ໄທເມືອງແກງ ເຂົາໄດ້ຄ້ຽວຫມາກ
ຄ້ຽວຫມາກແລ້ວ ລ້ຽງງົວລ້ຽງຄວາຍ
ຄວາຍກູເສຽ ອີ່ແມ່ກູດ່າ
ປີບເຂົ້າປ່າ ເຫັນນົກແຈນແວນ
ແຈນແວນເອີ້ຍ ເຫັນຄວາຍກູບໍ່?
ຄວາຍມຶງຕົກສ້າງ ຊ້າງມຶງຕົກນ້ຳຂອງ
ສາວຕົກອງ ຍາມບຸບດອກໄມ້
ສາວຂີ້ໄຫ້ ແອະແອ່ນລົງພູ
ຫມາກເຂືອຂາວ ເຕັມພູແອ້ແລ້
ຫລຽວເບິ່ງແບ້ ເຫັນກະຕ່າຍຊິບກັບ
ສັກກະສັບ ລັກກິນປາຢ້າງ
ສາວແມ່ຮ້າງ ກີ້ຕ້າງກິ່ງດຽວ

**ຍາມກາງຄືນເດືອນແຈ້ງ ທ້ອງຟ້າມີຫມູ່ດາວ**
**ແມ່ມັກເວົ້າວ່າ:**

ເດືອນເອີຍດາວ
ເຫັນຜູ່ສາວ ທາບເຂົ້າມາບໍ່
ເຫັນຜູ້ເຖົ້າ ຕົບມືມາບໍ່
ເຫັນແມງພື ຟ້ອນງ້າວມາບໍ່
ເຫັນຫມາກພ້າວ ຫລິ່ນສາມແຊງມາບໍ່

ເຫັນຫມາກແຕງ ຫລິ່ນສາມຂວັ້ນມາບໍ່
ເຫັນປາເປົ້ານ້ອຍ ອິມນ້ຳສູດມົນມາບໍ່

**ເວລາຝົນຕົກ**

**ແມ່ມັກເວົ້າວ່າ:**

ຝົນຕົກແລ້ວ ອີ່ແກ້ວດຳນາ
ປາຝາຫູງເຂົ້າ ປາເປົ້າເຝົ້າເຮືອນ
ບັກຜີເບືອນ ມັນໄປຫລົກກ້າ
ບັກຜີບ້າ ມັນໄປໄຖນາ
ໄຖລົ້ມທັບ ຜີບ້າຕາຍຄືນ

**ເວລາເດືອນກື໊ເກົ້ງ**
**ແມ່ມັກເວົ້າວ່າ:**

ກັກເກົ້ງເອີຍ ຂໍເຂົ້າຂໍແກງ
ຂໍຍັນແດງ ຜູກຄໍຫລານນ້ອຍ
ຂໍຊ້າງນ້ອຍ ໃຫ້ຫລາຍຂີ່ແດ່
ຂໍປີ່ນ້ອຍ ໃຫ້ຫລານເປົ່າແດ່

**ເວລາແມ່ອຸ້ມໄຕ່ໄມ້**

**ແມ່ມັກເວົ້າວ່າ:**

ໄຕ່ຂິວແປ້ນ ດຳນາເຕີເຕີ່ນ
ແມ່ເກົ້າເອີ້ນ ກິນເຂົ້າບ່າຍປາ

**ມະສັ່ງເມຣ (ກາບທີ່ພໍ່ມັກເລົ່າ ທີ່ສຸດ)**

ໄປຄ້ອງຊ້າງ　　ບໍ່ເຫືອດຈັກປີ
ຫາມື້ດີ　　ເດືອນຈຽງອອກໃຫມ່
ຫາມື້ໄດ້　　ແມ່ນມື້ວັນອັງຄານ
ຕໍາເຂົ້າສານ　　ຮອງທໍໃສ່ຊ້າງ
ໃຫ້ເຈົ້າຫ້າງ　　ຫມາກພິກເອືອດເກືອ
ມີເຫລືອຫລາຍ　　ເປັນພູເປືອກໄມ້
ບໍ່ອີ້ໄຮ້　　**ຂອງແມ່ປະກໍາ**
ແມ່ປະກໍາ　　ໃຫ້**ລະລໍາ**ດີ**ມາກ**
ເຈົ້າຄ້ຽວຫມາກ　　**ຢ່າໄດ້ຄ້າງ**ຄັນໄດ
ຫນີໄປໄກ　　**ເຈົ້າຢ່າຂຶ້ນ**ຕົ້ນໄມ້
ເຈົ້າຢ່າໄດ້　　ນຸ່ງສິ້ນຫົວແດງ
ເກີງຍາມແລງ　　ເຈົ້າຢ່າແປງເກົ້າກ້ຽງ
ຢ້ານບໍ່ໄດ້　　ບັກຫມື່ນເກົ້າກາດ
ຢ້ານບໍ່ໄດ້　　ບັກອາດບາພຽງ

**ເວລາກ່ອນນອນ**
**ແມ່ມັກເວົ້າວ່າ:**

ນົກນ້ອຍນ້ອຍ　　ຕົວນີ້ປາກເປັນ
ມັນຢາກເຫັນ　　ວຽງຄໍາວຽງແກ້ວ
ຟ້ອນບໍ່ແລ້ວ　　ແອະແອ່ນບິນໄປ
ກ້ອນອີ້ໄກ　　ບາໄລຟ້ອນແອ່ນ
ຟ້ອນແອະແອ່ນ　　ແລ່ນຢູ່ທົ່ງນາພຽງ
ຫລື:
ຫມາກປັດເຕັມຄໍ　　ອີ່ຢ່າກູຮ້ອຍ

ອ້ອຍເຕັມສວນ ອີ່ຍ່າງພູປູກ
ລູກພູໄຫ້ ອີ່ຍ່າງພູໄກວ
ໄຟພູມອດ ອີ່ຍ່າງພູເປົ່າ
ເພິ່ນຈົກເກົ່າ ອີ່ຍ່າງພູວີ
ເພິ່ນຫວີຫົວ ອີ່ຍ່າງພູເກົາ
ເພິ່ນກິນເຫລົ້າ ອີ່ຍ່າງພູເມົາ
ເພິ່ນກິນເຫົາ ອີ່ຍ່າງພູອີ່ມ
ອີ່ມອາກລາກ ອີ່ມເອືອເລືອ
ຫມາກເຂືອຂາວ ອີ່ອາວພູມັກ
ກິ້ມໃສ່ຕັກ ຕັກງໍລ້ອງຄ້ອງ
ກິ້ມໃສ່ທ້ອງ ທ້ອງໄຄ່ເອືອເລືອ
ກິ້ມໃສ່ເສືອ ເສືອຮ້ອງໂອກໂອກ

## ເຊີ້ງແມ່ນາງດົ້ງ

ປີໃດຝົນບໍ່ຕົກຕາມລະດູ ຊາວບ້ານອ້ອຍພາກັນແຫ່ນາງດົ້ງ ອ້ອຍບໍ່ເຄີຍຜິດນັດ ສຳລັບຂະບວນແຫ່ແມ່ນາງດົ້ງ ຂໍນ້ຳຝົນນຳພະຍາແຖນຈັກເທື່ອ.

ເຕົ້າອີ່ແມ່ນາງກວັກ ຮັກອີ່ແມ່ນາງດົ້ງ
ເປັນລົ້ງຄົ້ງ ສະເຫມືອນດັ່ງກົງກວຽນ
ມາວຽນຫນີ້ ໄດ້ສາມສິບຮອບ
ມາຄອບຫນີ້ ໄດ້ສາມສິບທີ
ຈັດຈີ່ລີ່ ແມງບີ້ໂຕລາຍ
ຄວາຍເອົາຫລົງ ເອົ້າດົ້ງກ້ຳແມດ

ດັ້ງສູ່ແດດ ຫລືດັ້ງສູ່ຝົນ
ຂໍນ້ຳບົນ ນຳແມ່ຊຸກໄຊ້
ແມ່ຊຸກໄຊ້ ການແມ່ຂຽດເຫລືອງ
ຂາເຟືອງຂຽດຢ່ອງ ອ່ອງລ່ອງຂຽດຈີ່ນາ
ຫລັງຊາຄັນຄາກ ມີທັງຄົກໄມ້ບາກ
ມີທັງສາກໄມ້ແດງ ມີທັງແຄງນ້ອຍໆ
ມ່າເອົ້າກິນອ່ອນ ນາງສາວກໍມີ
ມີທັງຫວີເອົາງົວ ເອົາຄວາຍປາຍເກົ້າ
ມີທັງເຫລົ້າໄຫນ້ອຍ ໄຫໃຫຍ່ຮັບແກນ
ເຈົ້າແກນເອີຍ ລົງມາປົ້ງປົ້ງ
ມາຕົ່ງນ້ຳ ເດືອນສິບໃສ່ເອົ້າ
ມາຕົ່ງນ້ຳ ເດືອນເກົ້າໃສ່ນາ
ເມກສາມຂາ ເອົາລົງມາອາບ
ຫອບກາບກົ້ ເອົາກົ້ມເມືອບົກ
ຝົນຕົກລົງມາເຄັ່ງໆ ຮ່າຫລວງເດືອນເກົ້າ
ເຕົ້າລົງເຍີ ມາສູນກະດັ້ງເຍີ

**ເມື່ອໃດແມ່ຮູ້ສຶກວ່າຂ້ອຍມີແນວຄິດ ແລະການກະທຳ ຜິດຈາກຄອງທຳ ແມ່ມັກເປັ່ງສຽງຂຶ້ນວ່າ:**

ບັກກ່ຳເປ່ ກືທ້າຍເຮືອເວ
ເຮືອມຶງເວ ເປັນຫຍັງບໍ່ວາດ
ຜ້າມຶງຂາດ ເປັນຫຍັງບໍ່ຫຍິບ
ຕາມຶງທິບ ເປັນຫຍັງບໍ່ມືນ
ຄັນມຶງມືນບໍ່ໄດ້ ກູຊິເອົາໄມ້ທົ່ງຕາ

## III ຜົນງານແຫ່ງຊີວິດ

**ອຸທິນ** ເລີ່ມຂຽນເລື່ອງກ້ອມໆສັ້ນ ລົງໃນວາລະສານ ແລະຫນັງສືພິມລາຍວັນ ມາແຕ່ທ້າຍຊຸມປີ 60 ຈາກນັ້ນ ກໍຮິບໂຮມຈັດພິມເປັນເຫລັ້ມ. ຍ້ອນໄດ້ໂຍກຍ້າຍທີ່ຢູ່ເລື້ອຍໆ ປຶ້ມຈຳນວນນຶ່ງ ຈຶ່ງຕົກເຮ່ຍເສຽໄປ ແລະຈຳນວນນຶ່ງທີ່ຖືກຢືມກໍຖືກລືມສົ່ງ. ດັ່ງນັ້ນ ຈຶ່ງບໍ່ສາມາດເກັບກຳທຸກສິ່ງທຸກຢ່າງໄດ້ ແລະກະທັ້ງວັນເດືອນປີພິມ ກໍອາດບໍ່ຖືກຕ້ອງທັງຫມົດ ເພາະໄດ້ຄາດຄະເນເອົາ. ຢ່າງໃດກໍຕາມ ຜົນງານສ່ວນໃຫຍ່ ແລະສຳຄັນກໍຖືກບັນທຶກໄວ້ນະທີ່ນີ້ແລ້ວ.

**1. ເລື່ອງສັ້ນ:**

- ***ຊີວິດນີ້ຄືລະຄອນກ້ອມ*** : ມີນຳກັນ 15 ເລື່ອງ ເປັນບົດຈົ່ມວ່າເລັກໆນ້ອຍໆ (ຈັດພິມເອງ) ປີ 1968
- ຈາກຊຸດ **ແມ່ຍິງບໍ່ແມ່ຍິງ** ພິມປີ 1971

  ແມງໄມ້ເຂົ້າຕາ, ເຮົາຮັກກັນບໍ່ໄດ້, ຕາມເຄີຍ, ກົມຂອງໃຜ, ທາງສາຍຄູວຽງ, ຂໍໃຫ້ເຮົາຢ່າພົບກັນດີກວ່າ, ລຸງສ່ຽວ, ອຳນາດພອນ, ສຽງສະອື້ນຈາກວຽງພູຄາ, ຝົນລົນທີ່ຫ້ວຍຫມໍ້, ນາງຜູ້ຄຽມຄົມ, ດອກໄມ້ທີ່ໄຮ້ຄ່າ, ລົມແລ້ງ, ຕົ້ນເຫດ, ເດືອນດັບທີ່ວຽງຈັນ, ຂັ້ນໃດຂັ້ນສຸດທ້າຍ, ບໍ່ເຫມືອນຕາຍຈາກກັນ, ນ້ຳໃຈ.

- ຈາກໂຮມ ເລື່ອງສັ້ນຊຸດ **ບໍ່ບານກໍຫອມ**,ຈັດພິມໂດຍ ໄຜ່ຫນາມ,1974

  ຈິດສຳນຶກຂອງຈິໂກະ, ກົມຂອງບັກກີ້ກີ້, ເຮືອນເຊົ່າສີຟ້າຈາງໆ, ດຶກກັບແດ້ງ...
- ນິຍາຍນີ້ຍັງບໍ່ສຸດ (ວາລະສານ ***ນາງ*** ສະບັບທີ 1, 1972)

- ແຫວນວົງບ້ຽວ (ວາລະສານ **ນາງ**, ສະບັບ ທີ 4 , 1973)
- ຄຳສາລະພາບຂອງພວງແດດ, ຣາຄາຂອງຄວາມຕາຍ, ຕາຍຢ່າງຫມາ, ຍ້ອຍບໍ່ຢາກນັ່ງບ່ອນຄົນມີກຽດ (ໄຜ່ຫນາມ1973,74,75)
- ງາມບ້ານເກີດ, ລຸງຂຽວ (ສພຫນ ສ.ປ.ປ.ລ.1977)
- ຕາເວັນຂຶ້ນທີ່ດອນນາງ, ແຫວນເພັດຂອງແນນຊີ (ສພຫນ ສ.ປ.ປ.ລ. 1977)
- ສຽງຈາກທົ່ງໄຫຫີນ, ຕົວຕະຫລົກອາຍ, ແກ້ວປັກຕີນ, ປ້າແຈ່ມ, ຄົນງາມ, ເລື່ອງຂອງສົມເຕື່ອຍ, ຊຸກລົດ (ສພຫນ ສ.ປ.ປ.ລ.1978,1979)
- ປຶ້ມເລື່ອງ ຊຸດ **ສຽງກ້ອງຂອງລັດທິວີຣະຊົນລາວ** (ສພຫນ ສ.ປ.ປ.ລ 1979 )

- ຈາກໂຣມເລື່ອງ ສັ້ນສຳລັບ ເຍົາວະຊົນຊຸດ **ປາຄໍ່ໂລພາ** (ສພຫນ ສ.ປ.ປ.ລ.1978)

  ປາຄໍ່ໂລພາ, ນວນດອມ, ຮ່ວມໃຈປູກຕົ້ນໄມ້, ເກີບກະໂປ໊ະ, ປາບແມງວັນ, ຊ່ອຍກັນກົມບວກ, ລ່ອງໃຫ້ກຶກຫາງ, ນ້ຳໃຈສົມປອງ, ເຜີ້ງຫວງຮັງ.

- ເລື່ອງຈາກ ຊຸດ **ຍິ້ມນັ້ນ** (ສພຫນ ສ.ປ.ປ.ລ.1980)

  ເບື້ອງຫລັງ, ມູນມັນແພງ...

- ຈາກຊຸດ ***ແພງແມ່*** ພິມໂດຍ ກົມວັນນະຄະດີ ,1991

  ແພງແມ່, ຍາມແມ່ຈາກໄປ, ແຮງເສຽສະຫລະ, ປະກອບສ່ວນ, ຫ້າສິບກີບ,ຫມູ່ພໍ່,ຈຳປາຫນ້າບ້ານ,ຫມົກເກົ່າ,ນົກບິນຂ້າມປາຍຕານ...

- ຮຽນຢູ່ເຮືອນ (ຈາກຊຸດ ນາງຄົນນັ້ນ, ກົມວັນນະຄະດີ1995)

ໂຣມທັງຫມົດເປັນຮ້ອຍກວ່າເລື່ອງ

**2. ປະເພດຮຽບຮຽງນິທານພື້ນເມືອງເປັນຄຳທຳມະດາ ສຳລັບເດັກ**

- *ສັງສິນໄຊ* (4 ເຫລັ້ມ,ມູນນິທິໂຕໂຍຕ້າ, ຈັດພິມໂດຍ ສຳນັກພິມ ວັນນະສິນ 1990 )
-*ຂຸນລູນາງອົ້ວ* (ຈັດພິມໂດຍ ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ 1993)
- *ມະໂຫສົດ (ຈັດພິມໂດຍ ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ1994)*
- *ເວົ້າດີມີປະໂຫຍດ(ນິທານພື້ນເມືອງເຜົ່າມົ້ງ, ຈັດພິມໂດຍ ສະມາຄົມ ສົ່ງປື້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ, 1992, 1999)*
- *ກ່ຳພ້າຂີ້ທູດ (ຈັດພິມໂດຍ ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວ ແຫ່ງ ຍີ່ປຸ່ນ, 1996)*

**3. ຜົນງານການແປ ດ້ານວັນນະຄະດີຕ່າງປະເທດ**

- ດາວແດງອັນແວວວາວ(ແຕ່ງໂດຍ ຫລີ່ ຊິນກຽນ, ສຳນັກພິມຈຳຫນ່າຍ ສ.ປ.ປ.ລາວ 1977)
- *ຊີວິດໄວເດັກ (ຂຽນໂດຍ :ມາກຊິມ ກ໊ອກກີ້*, ສຳນັກພິມ ຣາດູກາມິດສະຄວາ,1985)
- *ຕຳນານດາວປະຫລາດ*,ໂຣມເລື່ອງສັ້ນລ້ຳສະໄຫມ (ຂຽນໂດຍ ທະຈິມະ ຊິນຈິ ຈັດພິມໂດຍ ກົມວັນນະຄະດີ 1990)
- *ນິທານຍີ່ປຸ່ນສຸດມ່ວນ* (ໂຣມນິທານພື້ນເມືອງຍີ່ປຸ່ນ, ມູນນິທິ ໂຕໂຍຕ້າ ໄຜ່ຫນາມການພິມ, 1996).
- *ພະຈັນເທິງຫນ້ານ້ຳ* (ໂຣມເລື່ອງສັ້ນຍຸກປະຈຸບັນຍີ່ປຸ່ນ, ມູນນິທິ ໂຕໂຍຕ້າ 1998)
- ເລື່ອງສັ້ນ ຂອງ ກີເດີໂມປັດຊັ້ງ ຈຳນວນນຶ່ງ

**4. ສາລະຄະດີ ແລະບົດຄົ້ນຄ້ວາກ່ຽວກັບສັງຄົມວັດທະນະທຳ**

- ປັດຊະຍາເທິງຝາວິດ (ໄຜ່ຫນາມ ຣາຍເດືອນ, 1972)
- ເຜີສອງພັນລ້ານ (ໄຜ່ຫນາມ ຣາຍເດືອນ, 1973)
- ຈິຈິ-ອັບໆ (ໄຜ່ຫນາມ ຣາຍເດືອນ,1973)
- ເມົາເຈີຕຸງ ຜູ້ຍິ່ງໃຫຍ່ (ໄຜ່ຫນາມ ຣາຍເດືອນ, 1973)
- ມໍລະດົກນີ້ອັນຕະລາຍ (ປະຊາຊົນ ລາຍວັນ, 1995 )
- ບອມບີ: ຊາວປີສັນຕິພາບໃນລາວ (ວາລະສານ **ສິລະປະວັດທະນະທຳໄທ** ເຫລັ້ມ ທີ 17/1995)
- ທ່າອຽງວັນນະຄະດີລາວ (ວາລະສານມະຫາວິທະຍາໄລເພື່ອການສຶກສາຕ່າງປະເທດ ໂຕກຽວ,1999 )
- ພຸດທະສາສະຫນາກັບວັນນະຄະດີລາວ (ວາລະສານມະຫາວິທະຍາໄລ ເພື່ອການສຶກສາຕ່າງປະເທດ, ໂຕກຽວ ຍີ່ປຸ່ນ,1999)




ຕຳນານ
ດາວປະຫລາດ
ທະຈິມະ ຊິນຈິ
ແປໂດຍ: ອຸທິນ ບຸນຍາວົງ
ເລື່ອງສັ້ນສຳລັບເຍົາວະຊົນເພື່ອປີ 2000


ພະຈັນເທິງໜ້ານ້ຳ
ໂຮມເລື່ອງສັ້ນປະທັບໃຈຈາກຍີ່ປຸ່ນ
ສະເຫນີໂດຍ ອຸທິນ ບຸນຍາວົງ


ມາກຊິມ ກອກກີ
ຊີວິດໄວເດັກ


ຟ້າໃໝ່
• ດາຣາ ກັລຍາ
• ແລງ ພູພາເງິນ
• ກຽງຄຳ
• ປ. ຈອມມົນຕຣີ
• ດອກເກດ
• ອິນທິຣາ
• ນັກຣຽນຍິງ
• ມັລລິກາ


ສິນໄຊ ເຫລັ້ມ 1
ຂຽນເປັນຄຳເວົ້າທຳມະດາ ອຸທິນ ບຸນຍາວົງ


ມະໂຫສົດບັນດິດ
ອຸທິນ ບຸນຍາວົງ


ນິຍາຍຮັກສະໄໝບູຮານ
ຂຸນລູ - ນາງອົ້ວ
ອຸທິນ ບຸນຍາວົງ


ນິທານຍີ່ປຸ່ນສຸດມ່ວນ
ແປໂດຍ ອຸທິນ ບຸນຍາວົງ • ສຸມັນທາ ກັບລະຍາ



5 ກຸມພາ 2000

ເມື່ອຍ້າຍມາຢູ່ເຮືອນສວນແຄມງື່ມ
ພໍ່ມັກລົງອາບນ້ຳງື່ມຍາມຄ້າຍແລງນຳໝູ່ເພື່ອນທີ່ມາຢ້ຽມຢາມ
ແມ່ກໍລົງເປັນບາງຄັ້ງຄາວ ນຳລູກ ແລະພໍ່
ລູກທັງສອງກໍລົງຫລິ້ນເລື້ອຍໆ ເວລາມີໝູ່ມາພັກເຊົານຳ

ແຕ່ ສີ່ພໍ່ແມ່ລູກເຮົາ
ບໍ່ເຄີຍໄດ້ລົງອາບນ້ຳງື່ມນຳກັນ
ເມື່ອບໍ່ມີໂອກາດແລ້ວ
ມື້ນີ້ ຈຶ່ງໄດ້ເອົາກະດູກພໍ່ ລົງລ້າງໃນງື່ມ